

# ການປ້ອງກັນເດັກຂອງພວກເຮົາໃຫ້ປອດໄພ ຈາກການລ່ວງລະເມີດທາງເພດ

## ປຶ້ມຄູ່ມືສຳລັບຜູ້ອຳນວຍຄວາມສະດວກໃນການດຳເນີນ ເວທີສົນທະນາກັບຜູ້ຕາງໜ້າຊຸມຊົນ

Australian Aid

World Vision

**ການປ້ອງກັນເດັກຂອງພວກເຮົາໃຫ້ປອດໄພຈາກການລ່ວງລະເມີດທາງເພດ:**
ປື້ມຄູ່ມືສໍາລັບຜູ້ອໍານວຍຄວາມສະດວກໃນການດໍາເນີນ ເວທີສົນທະນາ ກັບຜູ້ຕາງໜ້າຊຸມຊົນ

ISBN: 978-0-9925215-4-7
ສະຫງວນລິຂະສິດ © 2014, ອົງການສຸພະນິມິດ ປະຈໍາ ສປປ ລາວ,

ເອກະສານສະບັບນີ້ອາດຖືກນໍາໃຊ້ ແລະ ດັດແກ້ໂດຍບໍ່ເສຍຄ່າຖ້າຫາກໄດ້ຮັບຮູ້ໂດຍເຈົ້າຂອງທີ່ເປັນແຫຼ່ງເອກະສານສະບັບ ເອເລັກໂຕຣນິກສາມາດດາວໂຫຼດໄດ້ທີ່

http://www.childsafetourism.org ແລະ http://wvi.org/asiapacific/childsafetourism. ກະລຸນາສົ່ງຂໍ້ສົງໄສ ຫຼື ຄໍາເຫັນມາທີ່ childsafetourism@wvi.org.

ຮູບພາບ: ຮູບພາບທັງໝົດແມ່ນລິຂະສິດຂອງ ອົງການສຸພະນິມິດ. ຮູບພາບຂອງເດັກທີ່ໃຊ້ໃນຄູ່ມືການສຶກສາເຫຼົ້ານີ້ ແມ່ນມີຈຸດປະສົງເພື່ອ ເປັນຂໍ້ມູນປະກອບ ແລະ ຄວາມຮູ້ຂອງໂຄງການເດັກເທົ່ານັ້ນ, ຮູບພາບເຫຼົ້ານີ້ບໍ່ແມ່ນຮູບທີ່ແທ້ຈິງຂອງຜູ້ຖືກເຄາະຮ້າຍ ຈາກການລ່ວງລະເມີດທາງເພດ. ອົງການ ສຸພະນິມິດ ປະຕິບັດຕາມມາດຕະຖານ ການປົກປ້ອງເດັກ ໃນການຖ່າຍຮູບຂອງເດັກນ້ອຍ. ອອກແບບໂດຍ Inis Communication ໄດ້ດັບປັບສໍາລັບສະບັບພາສາລາວ ໂດຍບໍລິສັດ EQHO Communications Lao Ltd.

ໂຄງການເດັກແມ່ນໂຄງການລິເລີ່ມຂອງ ລັດຖະບານອົດສະຕຣາລີ ເພື່ອປົກປ້ອງເດັກຈາກການລ່ວງລະເມີດທາງເພດໃນການທ່ອງທ່ຽວຢູ່ ກໍາປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ (2011-2014).



# ການປ້ອງກັນເດັກຂອງພວກເຮົາໃຫ້ປອດໄພ ຈາກການລ່ວງລະເມີດທາງເພດ

## ປື້ມຄູ່ມືສຳລັບຜູ້ອຳນວຍຄວາມສະດວກໃນການດຳເນີນ ເວທີສົນທະນາກັບຜູ້ຕາງໜ້າຊຸມຊົນ

# ບົດສະແດງຄວາມຮູ້ບຸນຄຸນ

ການພັດທະນາປື້ມຄູ່ມືສະບັບນີ້ ໄດ້ມີການປະກອບສ່ວນຂອງ ບຸກຄົນ ແລະ ອົງການຫຼາຍຝ່າຍ, ໂດຍການນຳພາຂອງ ອາທີ ກາປົວ, ຜູ້ບໍລິຫານໂຄງການ ແລະ ອັຟຣູສ ກາເວຍນີ ຈອນຊັນ, ຜູ້ອຳນວຍການຝ່າຍວິຊາການ, ໂຄງການເດັກ - ເສົາຫຼັກປ້ອງກັນ. ຂໍສະແດງຄວາມຂອບໃຈ ອານິຕາ ດອດສ, ທີ່ປຶກສາ, ສຳລັບການຮ່າງສະບັບທຳອິດ ຂອງປື້ມຄູ່ມື ໃນການດຳເນີນເວທີສົນທະນາ ໃນປີ 2012. ຂໍສະແດງຄວາມຮູ້ບຸນຄຸນຕໍ່ ທ່ານ ສະເຫຼີມລາດ ໃຈປະເສີດ, ທ່ານ ຈັນດາ ແພງ, ທ່ານ ຈັນສະໝອນ ບົວຄຳວົງສາ ແລະ ທ່ານ ທງວນ ຄານ ຮ່ອຍ, ຜູ້ປະສານງານໂຄງການເດັກ - ເສົາຫຼັກປ້ອງກັນ ປະຈຳ ໄທ, ກຳປູເຈຍ, ສປປ ລາວ ແລະ ຫວຽດນາມ ຕາມລຳດັບ, ສຳລັບການປະກອບສ່ວນ, ການທົດລອງ ແລະ ການດັດປັບປື້ມຄູ່ມືໃຫ້ເໝາະສົມກັບສະພາບຂອງແຕ່ລະປະເທດຕະຫຼອດໄລຍະປີ 2012 - 2014. ນອກຈາກນີ້ຂໍສະແດງຄວາມຮູ້ບຸນຄຸນສຳລັບການປະກອບສ່ວນ ແລະ ຄຳເຫັນຈາກເພື່ອນຮ່ວມງານ ລວມທັງ ຄຣິສຕິນ ມິໄຄລິດີ, ຊ່ຽວຊານແຜນງານປົກປ້ອງເດັກ ແລະ ທ່ານ ລິນ ດີເຄັດ, ທີ່ປຶກສາດ້ານການປົກປ້ອງເດັກ, ອົງການ ສຸພະນິມິດ ສາກົນກໍຄື ບັນດາຄູ່ຮ່ວມງານພາກສະໜາມທີ່ນຳໃຊ້ປື້ມຄູ່ມືເຫຼົ່ານີ້ເຂົ້າໃນການສິດສອນ. ຂໍຂອບໃຈ ເວີລີຕີ ໂຄວາ, ເຈົ້າໜ້າທີ່ດ້ານການສື່ສານ ແລະ ສື່ມວນຊົນ, ໂຄງການເດັກ - ເສົາຫຼັກປ້ອງກັນ, ສຳລັບການຊ່ວຍເຫຼືອໃນການສະຫຼຸບປື້ມຄູ່ມືສຳລັບເວທີສົນທະນາ ທີ່ນຳມາພິມຈຳໜ່າຍໃນປີ 2014. ຍັງຂໍຂອບໃຈທີມງານໂຄງການເດັກ-ເສົາຫລັກປ້ອງກັນ, ອົງການສຸພະນິມິດ ປະຈຳ ສປປ ລາວ (ທ່ານ ຈັນສະຫມອນ ບົວຄຳວົງສາ, ທ່ານ ກົງຊາ ຢ່າງລືໄຊ, ທ່ານ ນາງ ທິບໄພວອນ ໂພທິຈັກ) ທີ່ໄດ້ນຳພາຂະບວນການພັດທະນາປື້ມຄູ່ມື ສະບັບພາສາລາວ.

# ສາລະບານ


ຄຳນຳ ..... ii

ຄວາມເປັນມາ ..... iv

ຈຸດປະສົງຂອງປຶ້ມຄູ່ມື ໃນການດຳເນີນເວທີການສົນທະນາ ..... v

ວິທີນຳໃຊ້ ປຶ້ມຄູ່ມືໃນການດຳເນີນເວທີສົນທະນາ ..... vi

ພາກທີ 1: ການເລີ່ມຕົ້ນ ..... 1

- ແມ່ນໃຜສາມາດອຳນວຍຄວາມສະດວກ ເວທີການສົນທະນາ? ..... 3
- ແມ່ນໃຜຄວນເຂົ້າຮ່ວມໃນເວທີສົນທະນານີ້? ..... 3
- ຜົນການຮຽນທີ່ຄາດຄະເນໄວ້ມີຫຍັງແດ່ ? ..... 5
- ຕ້ອງກະກຽມຫຍັງໃນການດຳເນີນເວທີການສົນທະນາ? ..... 6
- ຕ້ອງໃຊ້ເວລາເທົ່າໃດໃນການດຳເນີນເວທີການສົນທະນາ? ..... 8
- ຂໍ້ແນະນຳພິເສດສຳລັບການຝຶກອົບຮົມການປົກປ້ອງເດັກ ..... 10

ພາກທີ 2: ຄູ່ມືການໃຊ້ພາບສະໄລ້ ..... 13

ພາກທີ 3: ເອກະສານຊ້ອນທ້າຍ ..... 47

- ເອກະສານຊ້ອນທ້າຍ 1: ບັດເອົາກັບບ້ານ ..... 49
- ເອກະສານຊ້ອນທ້າຍ 2: ແບບຟອມລົງທະບຽນຂອງຜູ້ເຂົ້າຮ່ວມ ..... 62
- ເອກະສານຊ້ອນທ້າຍ 3: ແບບທົດສອບກ່ອນຝຶກອົບຮົມ ..... 63
- ເອກະສານຊ້ອນທ້າຍ 4: ແບບທົດສອບຫຼັງຝຶກອົບຮົມ ..... 64
- ເອກະສານຊ້ອນທ້າຍ 5: ບັດຕອບຄຳຖາມແບບທົດສອບ ກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ ..... 65
- ເອກະສານຊ້ອນທ້າຍ 6: ແບບຟອມວິເຄາະແບບທົດສອບ ກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ ..... 66
- ເອກະສານຊ້ອນທ້າຍ 7: ກໍລະນີສຶກສາ ສຳລັບ ຜູ້ຕາງໜ້າຊຸມຊົນ ..... 67
- ເອກະສານຊ້ອນທ້າຍ 8: ແບບຟອມ ຄວາມເຫັນຂອງຂ້ອຍ ..... 70
- ເອກະສານຊ້ອນທ້າຍ 9: ແບບຟອມບົດລາຍງານຫຼັງການຝຶກອົບຮົມ ..... 72

# ຄຳນຳ



ເປັນເລື້ອງທີ່ບໍ່ແປກໃຈທີ່ ສປປ ລາວ ໄດ້ຮັບເລືອກເປັນສະຖານທີ່ໜ້າທ່ອງທ່ຽວທີສຸດຂອງໂລກໃນປີ 2013. ເຕັມໄປດ້ວຍພູມມີປະເທດອັນບໍລິສຸດ, ຄວາມສະຫງ່າງາມທາງດ້ານມໍລະດົກວັດທະນາທຳ ແລະ ຄວາມອົບອຸ່ນຂອງຄົນລາວ, ສປປ ລາວ “ແມ່ນສະຫວັນຂອງການທ່ອງທ່ຽວ ແລະ ວັດທະນາທຳອັນລ້ຳຄ່າຢ່າງແທ້ຈິງ!”

ການທ່ອງທ່ຽວໃນ ສປປ ລາວ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງໄວວາ ແລະ ໃນປີ 2013 ລາວໄດ້ຕ້ອນຮັບເອົານັກທ່ອງທ່ຽວຈາກຕ່າງປະເທດ 3,779,490 ຄົນ. ການທ່ອງທ່ຽວໄດ້ນຳເອົາກາລະໂອກາດອັນດີຫລາຍໆຢ່າງໃຫ້ແກ່ ສປປ ລາວ ແລະ ປະຊາຊົນລາວ, ໃນຂະນະດຽວກັນ, ພວກເຮົາກໍຍັງມີຄວາມກັງວົນຢູ່ທີ່ຍັງເຫັນການຂູດຮີດເດັກຢູ່ໃນແວດລ້ອມການທ່ອງທ່ຽວ.

ລວມທັງເດັກຍິງ ແລະ ເດັກຊາຍ ສາມາດຊອກຫາວຽກເຮັດ, ຫາລາຍໄດ້ຈາກອຸດສາຫະກຳທ່ອງທ່ຽວ: ດ້ວຍການຂາຍເຄື່ອງທີ່ລະນຶກໃຫ້ແກ່ນັກທ່ອງທ່ຽວ, ເປັນຜູ້ນຳທ່ຽວ ຫລື ໃຫ້ບໍລິການອາຫານ, ເຄື່ອງດື່ມທີ່ຮ້ານອາຫານ ແລະ ຮ້ານຂາຍເຄື່ອງຍ່ອຍ. ໃນຂະນະທີ່ເດັກນ້ອຍຫລາຍໆຄົນທີ່ກຳລັງເຮັດວຽກຢູ່ໃນອຸດສາຫະກຳທ່ອງທ່ຽວ ຄ້າຍຄືມີຄວາມສຸກ ແລະ ຄວາມລ່າເລີງ, ເດັກເຫລົ່ານີ້ຊ້ຳພັດມີໂອກາດໜ້ອຍທີ່ຈະໄດ້ໄປໂຮງຮຽນ ແລະ ຍັງປະເຊີນກັບຄວາມສ່ຽງທີ່ຈະຖືກລ່ວງລະເມີດເພີ້ມຂຶ້ນບໍ່ວ່າທາງດ້ານຮ່າງກາຍ, ຈິດໃຈ ແລະ ທາງເພດ. ນອກຈາກນີ້, ເດັກນ້ອຍເຫລົ່ານີ້ຍັງເປັນກຸ່ມເປົ້າຫມາຍຂອງຜູ້ທີ່ເດີນທາງເພື່ອລ່ວງລະເມີດທາງເພດເດັກອີກດ້ວຍ. ຍ້ອນສາຍເຫດນີ້ ພວກເຮົາຈຶ່ງມີຄວາມຈຳເປັນຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກການປົກປ້ອງເດັກຂອງພວກເຮົາ.

ໂດຍຜ່ານການຈັດຕັ້ງປະຕິບັດໂຄງການເດັກ ຊຶ່ງແມ່ນໂຄງການໜຶ່ງຂອງລັດຖະບານອົດສະຕຣາລີ ທີ່ໄດ້ໃຫ້ຄວາມສຳຄັນໃນການສະໜັບສະໜູນເພື່ອຕ້ານການລ່ວງລະເມີດທາງເພດເດັກໃນການເດີນທາງ ແລະ ທ່ອງທ່ຽວ ໃນ ສປປ ລາວ, ກຳປູເຈຍ, ໄທ ແລະ ຫວຽດນາມ (ປີ 2011-2014).  ຢູ່ ສປປ ລາວໂຄງການເດັກ ຊຶ່ງແມ່ນອົງການສຸພະນິມິດ ແລະ  ຫ້ອງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາດຊະຍາກຳ ໄດ້ເຮັດວຽກຮ່ວມກັບພາກລັດ, ໂຄງການເດັກ ໄດ້ຍຶດຖືວິທີການເຮັດວຽກແບບຄວບຄູ່ທັງການປ້ອງກັນ ແລະ ປົກປ້ອງເດັກຈາກການຂູດຮີດໃນການເດີນທາງ ແລະ ທ່ອງທ່ຽວ.

ອີງຕາມການສຳຫລວດຂອງພວກເຮົາໄດ້ຊີ້ໃຫ້ເຫັນວ່າ ມີຫລາຍໆຊຸມຊົນຢູ່ລາວ ຍັງບໍ່ທັນເຂົ້າໃຈກ່ຽວກັບການລ່ວງລະເມີດທາງເພດເດັກແມ່ນຫຍັງ ແລະ ສາມາດເກີດຂຶ້ນແນວໃດ. ການເຂົ້າເຖິງການສຶກສາອົບຮົມໃຫ້ຄວາມຮູ້ທີ່ແທດເຫມາະກັບສະພາບຄວາມເປັນຈິງແມ່ນຂັ້ນຕອນທຳອິດເພື່ອປ້ອງກັນການລ່ວງລະເມີດ, ມັນຍັງຊ່ວຍໃຫ້ຜູ້ຕາງໜ້າຊຸມຊົນເຂົ້າໃຈແຈ້ງຄວາມຮັບຜິດຊອບຂອງພວກເຂົາ, ສາມາດຕອບໂຕ້ ແລະ ປົກປ້ອງເດັກທີ່ຕົກຢູ່ໃນສະພາບທີ່ມີຄວາມສ່ຽງ.

ເນື່ອງຈາກສາຍເຫດນີ້ “ການປ້ອງກັນເດັກໃຫ້ປອດໄພຈາກການລ່ວງລະເມີດທາງເພດ: ເຄື່ອງມືສຳລັບຜູ້ອຳນວຍຄວາມສະດວກໃນການດຳເນີນເວທີສົນທະນາກັບຜູ້ຕາງໜ້າຊຸມຊົນ” ເປັນສິ່ງພິມທີ່ມີຄຸນຄ່າ.   ແຫລ່ງຂໍ້ມູນນີ້ສະໜອງແບບແຜນວິທີສິດສອນທີ່ງ່າຍດາຍ ແລະ ມີປະຕິສຳພັນ, ຍັງເປັນເຄື່ອງມືທີ່ຊ່ວຍໃຫ້ຜູ້ຕາງໜ້າຊຸມຊົນໄດ້ຮັບການພັດທະນາການທາງດ້ານຄວາມຮູ້ ແລະ ທັກສະທີ່ເຫມາະສົມເພື່ອປ້ອງກັນ ແລະ ຢຸດຕິການລ່ວງລະເມີດທາງເພດ. ມັນຍັງຊ່ວຍໃຫ້ຜູ້ອຳນວຍຄວາມສະດວກສາມາດດັດປັບວິທີການດຳເນີນກິດຈະກຳໃຫ້ແທດເຫມາະກັບສະພາບຕົວຈິງ, ລວມທັງການດຳເນີນກິດຈະກຳແບບເປັນທາງການ ແລະ ບໍ່ເປັນທາງການ ພ້ອມທັງມີການໃຊ້ອຸປະກອນ ແລະ ເຄື່ອງເຕັກໂນໂລຊີໜ້ອຍອີກດ້ວຍ. ຄູ່ຮ່ວມງານທັງພາກລັດ ແລະ ອົງການຈັດຕັ້ງສັງຄົມຕ່າງໆ ຢູ່ ສປປ ລາວ, ກຳປູເຈຍ, ໄທ, ແລະ ຫວຽດນາມ ໄດ້ນຳໃຊ້ເຄື່ອງມືນີ້ໃນການຈັດຕັ້ງປະຕິບັດໂຄງການເດັກມາແລ້ວ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ “ເຄື່ອງມືສໍາລັບຜູ້ອໍານວຍຄວາມສະດວກ: ການປ້ອງກັນເດັກໃຫ້ປອດໄພຈາກການລ່ວງລະເມີດທາງເພດ” ຈະຊ່ວຍເຮັດໃຫ້ຜູ້ຕາງໜ້າຊຸມຊົນ ສາມາດສ້າງກົນໄກໃນການປ້ອງກັນ ແລະ ປົກປ້ອງເດັກຈາກການຂູດຮີດ ແລະ ລ່ວງລະເມີດ. ໃນຖານະເປັນຜູ້ໃຫຍ່ການປົກປ້ອງເດັກແມ່ນໜ້າທີ່ຂອງພວກເຮົາ. ໃນ ສປປ ລາວ ມີເດັກນ້ອຍປະມານ 50% ຂອງປະຊາກອນທັງຫມົດ ແຕ່ພວກເຂົາແມ່ນອະນາຄົດຂອງພວກເຮົາ 100% .




**ອະມິເລຍ ເອັຟ ເມີລິກ**

ຜູ້ອໍານວຍການ ອົງການສຸພະນິມິດປະຈໍາ ສປປ ລາວ

# ຄວາມເປັນມາ

ໂຄງການເດັກແມ່ນແຜນງານລິເລີ່ມຂອງ ລັດຖະບານອົສຕຣາລີ ເພື່ອປົກປ້ອງເດັກຈາກການລ່ວງລະເມີດທາງເພດໃນການທ່ອງທ່ຽວຢູ່ ກໍາປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ (2011-2014). ໂຄງການເດັກ ເປັນການຮ່ວມມືກັນລະຫວ່າງອົງການສຸພະນິມິດ ແລະ ຫ້ອງການ ສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາດຊະຍາກໍາ. ແຜນງານຍຶດຖືວິທີການຄູ່ແບບປົກປ້ອງ ແລະ ປ້ອງກັນຄວບຄູ່ກັນໄປ.

ອົງການ ສຸພະນິມິດ ເຮັດວຽກຮ່ວມກັບລັດຖະບານ ແລະ ຊຸມຊົນຕ່າງໆເພື່ອປົກປ້ອງເດັກຈາກການຕົກເປັນຜູ້ເຄາະຮ້າຍຂອງການລ່ວງລະເມີດທາງເພດໃນການເດີນທາງ ແລະ ທ່ອງທ່ຽວ. ຜ່ານຂໍ້ມູນ, ການສຶກສາ ແລະ ການສື່ສານ, ອົງການ ສຸພະນິມິດ ແນໃສ່ໃຫ້ຄວາມຮູ້ ແລະ ຄວາມສາມາດໃຫ້ແກ່ສະມາຊິກພາຍໃນຊຸມຊົນ, ຫົວໜ່ວຍທຸລະກິດ ແລະ ລັດຖະກອນ ເພື່ອເຮັດໃຫ້ສະພາບແວດລ້ອມການທ່ອງທ່ຽວທີ່ປອດໄພສໍາລັບເດັກດີຂື້ນກວ່າເກົ່າ.

ຜ່ານຜົນການຄົ້ນຄວ້າກ່ຽວກັບຄວາມເຂົ້າໃຈຂອງຊຸມຊົນກ່ຽວກັບການລ່ວງລະເມີດທາງເພດເດັກນັ້ນ, ການສຶກສາອົບຮົມ ແລະ ການສື່ສານພາຍໃຕ້ໂຄງການເດັກ - ເສົາຫຼັກປ້ອງກັນ ໃຫ້ຂໍ້ມູນທີ່ແທດເໝາະກັບວັດທະນະທໍາ ແລະ ຂໍ້ມູນທີ່ທັນການ ເພື່ອຖົມຊ່ອງຫວ່າງດ້ານຄວາມຮູ້ ແລະ ປ່ຽນແປງຄວາມເຊື່ອ ແລະ ທັດສະນະທີ່ຜິດ ກ່ຽວກັບການລ່ວງລະເມີດທາງເພດເດັກ ຊຶ່ງ ອາດເຮັດໃຫ້ເດັກຕົກໃນທ່າຮັບຕໍ່ການລ່ວງລະເມີດຕ່າງໆ. ຕົວແທນຊຸມຊົນ (ຜູ້ຮັບພັນທະພາຍໃນຊຸມຊົນຊຶ່ງເປັນ ຜູ້ທີ່ເປັນເຈົ້າໜ້າທີ່, ເປັນຜູ້ນໍາ ແລະ ມີອໍານາດ) ມີບົດບາດສໍາຄັນ ເພື່ອຮັກສາໃຫ້ເດັກປອດໄພ ຈາກການຖືກລ່ວງລະເມີດ ແລະ ປ້ອງກັນບໍ່ໃຫ້ການລ່ວງລະເມີດເກີດຂຶ້ນ ແລະ/ຫຼືສືບຕໍ່ເກີດຂຶ້ນ. ມັນເປັນສິ່ງສໍາຄັນ ທີ່ເຂົາເຈົ້າສາມາດເຂົ້າເຖິງຂໍ້ມູນຫຼ້າສຸດທີ່ຖືກຕ້ອງ ກ່ຽວກັບການລ່ວງລະເມີດທາງເພດເດັກ.

# ຈຸດປະສົງຂອງປຶ້ມຄູ່ມື ໃນການດຳເນີນເວທີການສົນທະນາ

ເວທີການສົນທະນາສຳລັບຜູ້ຕາງໜ້າຊຸມຊົນ ແມ່ນພາກສ່ວນໜຶ່ງຂອງການຝຶກອົບຮົມທີ່ສັ້ນ ແລະ ສາມາດປັບປ່ຽນໄດ້ ເພື່ອໃຫ້ຄວາມຮູ້ພື້ນຖານ ແລະ ທັກສະໃຫ້ແກ່ຜູ້ເຂົ້າຮ່ວມ ໃນການຮັກສາເດັກໃຫ້ປອດໄພ ຈາກການລ່ວງລະເມີດທາງເພດ ຢູ່ໃນຊຸມຊົນຂອງພວກເຂົາ. ເວທີສົນທະນາແມ່ນສາມາດຈັດ ແລະ ນຳພາໂດຍໜ່ວຍງານພາກລັດທີ່ກ່ຽວຂ້ອງເຊັ່ນ ກະຊວງຕ່າງໆທີ່ຮັບຜິດຊອບວຽກສັງຄົມ (ຫຼື ທຽບເທົ່າ) ຫຼື ອົງການຈັດຕັ້ງຊຸມຊົນ ທີ່ມີສາຍພົວພັນກັບຊຸມຊົນ ແລະ ມີປະສົບການ ກ່ຽວກັບບັນຫາການປົກປ້ອງເດັກ. ປຶ້ມຄູ່ມືໃນການດຳເນີນເວທີສົນທະນາ ໄດ້ສະໜອງຄຳແນະນຳ ແລະ ເຄື່ອງມືທີ່ງ່າຍດາຍໃຫ້ແກ່ຜູ້ອຳນວຍຄວາມສະດວກ ເພື່ອດຳເນີນເວທີສົນທະນາ ສອງ ຫຼື ສາມ ຊົ່ວໂມງ ຮ່ວມກັບຜູ້ຕາງໜ້າຊຸມຊົນ. ປຶ້ມຄູ່ມື ປະກອບດ້ວຍເອກະສານ ແລະ ເຄື່ອງມືພື້ນຖານທຸກຢ່າງທີ່ຈຳເປັນ ເພື່ອດຳເນີນການຝຶກອົບຮົມ. ເນື້ອໃນຂອງປຶ້ມຄູ່ມືແມ່ນເໝາະສົມສຳລັບ ການຈັດແບບບໍ່ເປັນທັງການຄືການເຕົ້າໂຮມຊຸມຊົນຢູ່ໃນລະດັບ ບ້ານ ຫຼື ເມືອງ ພ້ອມທັງການຈັດແບບລັກສະນະ ມືອາຊີບທີ່ເປັນທາງການຂຶ້ນ ໃນລະດັບແຂວງ ແລະ ຊາດ. ຜູ້ອຳນວຍຄວາມສະດວກຄວນອ່ານ ປຶ້ມຄູ່ມືໃນການດຳເນີນເວທີສົນທະນາຢ່າງລະອຽດ ກ່ອນກິດຈະກຳ ແລະ ໃຊ້ເພື່ອຊ່ວຍໃນການກະກຽມເວທີການສົນທະນາ. ຫຼັງຈາກນັ້ນ ກໍສາມາດດັດປັບ ແລະ ເພີ່ມເຕີມ ເອກະສານໃຫ້ເໝາະສົມກັບ ແຕ່ລະກຸ່ມຜູ້ເຂົ້າຮ່ວມ. ປຶ້ມຄູ່ມືໃນການດຳເນີນເວທີສົນທະນາ ສະບັບເອເລັກໂຕຣນິກ ສາມາດດາວໂຫຼດໄດ້ທີ່ http://www.childsafetourism.org ແລະ http://wvi.org/asiapacific/childsafetourism.

# ວິທີນຳໃຊ້ ປື້ມຄູ່ມືໃນການດຳເນີນເວທີສົນທະນາ

ປື້ມຄູ່ມືໃນການດຳເນີນເວທີສົນທະນາ ປະກອບດ້ວຍ ສາມພາກ:

## ພາກທີ 1: ການເລີ່ມຕົ້ນ

ພາກນີ້ມີເອກະສານທີ່ຜູ້ອຳນວຍຄວາມສະດວກຈຳເປັນຕ້ອງຮູ້ ແລະ ເພື່ອກະກຽມກ່ອນການຈັດເວທີສົນທະນາ. ພາກນີ້ໃຫ້ຄຳແນະນຳທີ່ເປັນປະໂຫຍດກ່ຽວກັບ ການຄັດເລືອກຜູ້ເຂົ້າຮ່ວມ, ການຈັດສະຖານທີ່ ແລະ ອຸປະກອນກໍຄື ຄຳແນະນຳພິເສດເພື່ອ ເວົ້າກ່ຽວກັບຫົວຂໍ້ທີ່ຫຼໍ່ແຫຼມ ຄື ການລ່ວງລະເມີດເພດເດັກ.

## ພາກທີ 2: ຄູ່ມືການໃຊ້ພາບສະໄລ້

ພາກນີ້ໃຫ້ຂໍ້ແນະນຳຕາມແຕ່ລະຂັ້ນຕອນ ເພື່ອຊ່ວຍຜູ້ອຳນວຍຄວາມສະດວກໃນການດຳເນີນ ເວທີສົນທະນາ. ພາບສະໄລ້ ຜູ້ຕາງໜ້າກ່ຽວກັບຊຸມຊົນ ແມ່ນສາມາດດາວໂຫຼດໄດ້ຈາກ http://www.childsafetourism.org ແລະ http://wvi.org/asiapacific/childsafetourism ແລະ ຄວນໄດ້ຮັບການທົບທວນ ແລະ ດັດປັບກ່ອນດຳເນີນ ເວທີສົນທະນາ ເພື່ອເອົາເນື້ອໃນທີ່ກ່ຽວຂ້ອງກັບປະເທດ ແລະ/ຫຼື ທ້ອງຖິ່ນເຂົ້ານຳ. ຖ້າບໍ່ມີ ໂປຣເຈັກເຕີ້ສາຍຂໍ້ມູນ ຫຼື ພິມພາບສະໄລ້ໃສ່ເຈ້ຍແຜ່ນໃຫຍ່ໄດ້, ຜູ້ອຳນວຍຄວາມສະດວກສາມາດນຳໃຊ້ ຄູ່ມືການໃຊ້ພາບສະໄລ້ ເພື່ອເປັນເນື້ອໃນສຳລັບການເວົ້າ. ຄູ່ມືການໃຊ້ຮູບພາບສະໄລ້ ຍັງແນະນຳກິດຈະກຳແບບມີສ່ວນຮ່ວມ ແລະ ວິທີການເພື່ອຊ່ວຍຜູ້ອຳນວຍຄວາມສະດວກໃນການຊຸກຍູ້ ການສົນທະນາ ແລະ/ຫຼື ການຄິດທົບທວນຄືນຂອງຜູ້ເຂົ້າຮ່ວມ.

## ພາກທີ 3: ພາກຊ້ອນທ້າຍ

ເອກະສານຊ້ອນທ້າຍ ປະກອບດ້ວຍເຄື່ອງມືອື່ນໆເພື່ອດຳເນີນເວທີສົນທະນາ ແລະ ເພື່ອປະເມີນກິດຈະກຳ ສຳລັບການຮຽນຮູ້ໃນຂັ້ນຕໍ່ໄປ. ເອກະສານຊ້ອນທ້າຍປະກອບດ້ວຍ:

- ບັດເອົາກັບບ້ານ ສຳລັບຜູ້ເຂົ້າຮ່ວມ
- ແບບຟອມລົງທະບຽນຂອງຜູ້ເຂົ້າຮ່ວມ
- ແບບທົດສອບ ກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ
- ບັດຕອບຄຳຖາມ ແບບທົດສອບ ກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ
- ແບບຟອມວິເຄາະ ແບບທົດສອບ ກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ
- ກໍລະນີສຶກສາ ສຳລັບ ຜູ້ຕາງໜ້າຊຸມຊົນ
- ແບບຟອມ ຄວາມເຫັນຂອງຂ້ອຍ
- ແບບບົດລາຍງານຫຼັງຈາກການຝຶກອົບຮົມ

# ພາກທີ 1:
# ການເລີ່ມຕົ້ນ



# ການເລີ່ມຕົ້ນ

## ແມ່ນໃຜສາມາດອໍານວຍຄວາມສະດວກ ເວທີການສົນທະນາ?

ໄດ້ຍົກປະເດັນທີ່ມີຄວາມຫຼໍ່ແຫຼມກ່ຽວກັບການລ່ວງລະເມີດທາງເພດ, ມັນຈຶ່ງມີຄວາມສໍາຄັນທີ່ຈະຕ້ອງຄັດເລືອກເອົາຜູ້ອໍານວຍຄວາມສະດວກຢ່າງລະມັດລະວັງຄືຜູ້ທີ່ມີຄວາມສາມາດ ແລະ ປະສົບການທີ່ເໝາະສົມໃນການຖ່າຍທອດເອກະສານດັ່ງກ່າວ.

ເປັນທີ່ຄາດຄະເນວ່າຜູ້ອໍານວຍຄວາມສະດວກທີ່ດໍາເນີນການຝຶກອົບຮົມນີ້ຈະມີເງື່ອນໄຂດັ່ງຕໍ່ໄປນີ້:

- ມີຄວາມຮູ້ຊໍານານກ່ຽວກັບການປົກປ້ອງເດັກ, ໂດຍສະເພາະແມ່ນການລ່ວງລະເມີດທາງເພດເດັກ.
- ມີປະສົບການສົມຄວນໃນການສຶກສາ, ອໍານວຍຄວາມສະດວກ, ສິດສອນ ແລະ/ຫຼື ຝຶກອົບຮົມ ໃຫ້ແກ່ຊຸມຊົນ.
- ສາມາດສື່ສານຢ່າງຊັດເຈນ, ຢ່າງມີປະສິດທິຜົນ ແລະ ບັນລຸໄດ້ຜົນການຮຽນຮູ້ ໂດຍຜ່ານການນໍາໃຊ້ ວິທີການທີ່ມີສີສັນທີ່ວາງໄວ້.

ຜູ້ອໍານວຍຄວາມສະດວກບໍ່ຄວນເວົ້າກ່ຽວກັບຫົວຂໍ້ຂອງການລະເມີດເດັກຢ່າງສະບາຍໃຈເທົ່ານັ້ນ, ໂດຍສະເພາະແມ່ນ ການລ່ວງລະເມີດທາງເພດ, ແຕ່ພວກເຂົາຍັງຈະຕ້ອງສາມາດຮັບມືກັບຄວາມຫຍຸ້ງຍາກທີ່ອາດເກີດຂຶ້ນເວລາດໍາເນີນການສົນທະນາຕ່າງໆ. ໃນນີ້ລວມທັງຄໍາຖາມທາງດ້ານວິຊາການ ແລະ ປະເດັນຕ່າງໆທີ່ອາດຈະແກ້ໄຂບໍ່ໄດ້ຊຶ່ງກ່ຽວຂ້ອງກັບນັກສໍາມະນາກອນຜູ້ທີ່ອາດຖືກລ່ວງລະເມີດມາກ່ອນກໍ່ເປັນໄດ້. ຍ້ອນວ່າປະເດັນຂອງ ເວທີການສົນທະນາ ແມ່ນກ່ຽວຂ້ອງໂດຍກົງກັບການລ່ວງລະເມີດທາງເພດ, ມັນຈຶ່ງກ່ຽວຂ້ອງກັບການພົວພັນທາງເພດລະຫວ່າງບຸກຄົນ, ບໍ່ວ່າຈະແບບເຕັມໃຈ ຫຼື ບໍ່ເຕັມໃຈ. ຜູ້ອໍານວຍຄວາມສະດວກຄວນເອົາໃຈໃສ່ຢ່າງເຕັມທີ່ ແລະ ລະມັດລະວັງ ບໍ່ໃຫ້ ສະແດງທັດສະນະຄະຕິ ຫຼື ມູນມອງທີ່ຈໍາແນກໃດໜຶ່ງໂດຍທາງກົງ ແລະ ທາງອ້ອມລວມທັງ ລົດສະນິຍົມທາງເພດ ແລະ ລັກສະນະທາງເພດຂອງຕົນ. ທັດສະນະໃນການແບ່ງແຍກທີ່ອີງຕາມເພດ, ຄວາມເຊື່ອທາງເພດ, ຊົນເຜົ່າ ແລະ ອື່ນໆຈະບໍ່ສອດຄ່ອງກັບ ສິດທິເດັກສາກົນ ແລະ ຍັງຈະປະກອບສ່ວນ ໃຫ້ເດັກຕົກຢູ່ທ່າຮັບ ແລະ ມີຄວາມສ່ຽງຖືກລ່ວງລະເມີດ. ຄໍາແນະນໍາພິເສດເພື່ອດໍາເນີນການຝຶກອົບຮົມກ່ຽວກັບການປົກປ້ອງເດັກໄດ້ລວມໄວ້ໃນປຶ້ມຄູ່ມືສະບັບນີ້.

## ແມ່ນໃຜຄວນເຂົ້າຮ່ວມໃນເວທີສົນທະນານີ້?

ເວທີສົນທະນານີ້ແມ່ນອອກແບບມາເພື່ອສົນທະນາກັບຕົວແທນຊຸມຊົນ. ຕົວແທນຂອງຊຸມຊົນແມ່ນບັນດາບຸກຄົນຢູ່ໃນຊຸມຊົນຜູ້ທີ່ມີຕໍາແໜ່ງ, ມີບົດບາດໃນການປະຕິບັດການ ທີ່ສາມາດເຮັດໃຫ້ມີການປ່ຽນແປງໃນເລື່ອງກ່ຽວກັບເດັກນ້ອຍ. ສະນັ້ນ, ຜູ້ທີ່ເໝາະສົມທີ່ສຸດຢູ່ໃນຊຸມຊົນຂອງທ່ານແມ່ນ:

- ຜູ້ນໍາຊຸມຊົນ
- ຄູສອນ
- ນັກສັງຄົມສົງເຄາະ ແລະ ອາສາສະມັກໄວໜຸ່ມ
- ອສບ, ທ່ານໝໍ, ພະຍາບານ, ໝໍຕໍາແຍ
- ຜູ້ນໍາທາງສາດສະໜາ
- ຕໍາຫຼວດບ້ານ
- ແນວໂຮມບ້ານ
- ນາຍບ້ານ, ພະນັກງານເມືອງ, ພະນັກງານເຂດ
- ຜູ້ຕາງໜ້າຈາກອົງການຈັດຕັ້ງມະຫາຊົນທີ່ກ່ຽວຂ້ອງ
- ນັກຂ່າວທ້ອງຖິ່ນ









# ຜົນການຮຽນທີ່ຄາດຄະເນໄວ້ມີຫຍັງແດ່ ?

ໃນຕອນທ້າຍຂອງການສົນທະນາ, ຜູ້ຕາງໜ້າຊຸມຊົນຄວນສາມາດ:

- ເຂົ້າໃຈວ່າ ການລ່ວງລະເມີດທາງເພດເດັກແມ່ນຫຍັງ.
- ເຂົ້າໃຈຜົນກະທົບຂອງການລ່ວງລະເມີດທາງເພດເດັກທີ່ມີຕໍ່ເດັກ, ຄອບຄົວ ແລະ ຊຸມຊົນໃນທ້ອງຖິ່ນ ແລະ ປະເທດ.
- ເຂົ້າໃຈວ່າເດັກທີ່ຖືກເຄາະຮ້າຍຈາກການລ່ວງລະເມີດທາງເພດນັ້ນ ບໍ່ຄວນຖືກກ່າວໂທດສຳລັບການລ່ວງລະເມີດ.
- ເຂົ້າໃຈບັນຫາສະເພາະຂອງການຂູດຮີດ ແລະ ການລ່ວງລະເມີດທາງເພດເດັກຢູ່ໃນການເດີນທາງ ແລະ ການທ່ອງທ່ຽວ.
- ສາມາດອະທິບາຍແຈ້ງຄວາມຮັບຜິດຊອບຂອງເຂົາເຈົ້າ ໃນການສົ່ງເສີມສິດຂອງເດັກໃນການປົກປ້ອງຈາກການລ່ວງລະເມີດທຸກຮູບແບບ.
- ໃຫ້ສາມາດເບິ່ງອອກວ່າ ເດັກອາດຈະມີຄວາມສ່ຽງຖືກລ່ວງລະເມີດທາງເພດ.
- ລະບຸມາດຕະການ ໃນການສ້າງສະພາບແວດລ້ອມໃນການປົກປ້ອງເດັກ.
- ລະບຸມາດຕະການ ຖ້າວ່າເຂົາເຈົ້າໄດ້ຮັບຂໍ້ມູນ ກ່ຽວກັບເດັກທີ່ມີຄວາມສ່ຽງຕໍ່ການລ່ວງລະເມີດ ແລະ/ຫຼື ເດັກໄດ້ຖືກລ່ວງລະເມີດທາງເພດ.
- ຮູ້ວິທີລິເລີ່ມສ້າງກົນໄກພື້ນຖານ ເພື່ອຊ່ວຍເຫຼືອເດັກ ແລະ ຄອບຄົວ ທີ່ໄດ້ຕົກເປັນຜູ້ເຄາະຮ້າຍຂອງການລ່ວງລະເມີດທາງເພດ.



# ຕ້ອງກະກຽມຫຍັງໃນການດຳເນີນເວທີການສົນທະນາ?

### ຜູ້ເຂົ້າຮ່ວມ

- ເວທີສົນທະນາຄວນມີຜູ້ເຂົ້າຮ່ວມປະມານ 20-25 ຄົນ, ເພາະວ່າຈຳນວນກຸ່ມຂະໜາດນີ້ຈະຊ່ວຍໃຫ້ຜູ້ເຂົ້າຮ່ວມສາມາດສົນທະນາ ແລະ ແລກປ່ຽນປະສົບການຢ່າງມີປະສິດທິຜົນ. ຖ້າວ່າຕົວເລກຜູ້ເຂົ້າຮ່ວມເກີນ 40 ຄົນ, ການສົນທະນາເປັນກຸ່ມ ແລະ ການປະກອບຄຳຄິດເຫັນ ແມ່ນຈະດົນ ແລະ ໃຊ້ເວລາເພີ່ມສຳລັບດຳເນີນເວທີການສົນທະນາ.
- ບາງຄັ້ງມັນມີຄວາມຈຳເປັນຕ້ອງເຂົ້າຫາກຸ່ມນ້ອຍກວ່າ ຫຼື ກຸ່ມທີ່ໃຫຍ່ຂຶ້ນ. ອັນນີ້ແມ່ນເປັນໄປໄດ້ ແລະ ຜູ້ອຳນວຍຄວາມສະດວກຈຳເປັນຕ້ອງດັດປັບວິທີການທີ່ມີປະສິດທິພາບ ເພື່ອຊຸກຍູ້ການປະກອບສ່ວນຂອງກຸ່ມ.
- ຍ້ອນລັກສະນະເນື້ອໃນຂອງການສົນທະນາ, ມັນຈຶ່ງຈຳເປັນຕ້ອງຮັບປະກັນວ່າຜູ້ເຂົ້າຮ່ວມ ແມ່ນຜູ້ທີ່ມີຕຳແໜ່ງເປັນຜູ້ມີອຳນາດ, ເປັນຜູ້ນຳ ແລະ ອິດທິພົນໃນສັງຄົມ.
- ຍັງເປັນສິ່ງສຳຄັນ ເພື່ອຕັ້ງເປົ້າໃຫ້ມີຄວາມດຸ່ນດ່ຽງລະຫວ່າງຍິງ - ຊາຍ (ເຊັ່ນວ່າ: ເຊີນທັງຍິງ ແລະ ຊາຍ) ໃນເວລາເຊີນຜູ້ເຂົ້າຮ່ວມເວທີການສົນທະນາ.
- **ເອກະສານຊ້ອນທ້າຍ 2** ລວມມີ ແບບຟອມການລົງທະບຽນຂອງຜູ້ເຂົ້າຮ່ວມ ທີ່ສາມາດນຳໃຊ້ ເພື່ອບັນທຶກລາຍລະອຽດຂອງຜູ້ເຂົ້າຮ່ວມ.

### ສະຖານທີ່

- ຜູ້ອຳນວຍຄວາມສະດວກຄວນແນໃສ່ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຮຽນຮູ້ ແລະ ໄປມາງ່າຍກໍຄືສະດວກເທົ່າທີ່ເປັນໄປໄດ້ສຳລັບຜູ້ເຂົ້າຮ່ວມ. ເປັນການແນະນຳຢ່າງສູງວ່າ ສະຖານທີ່ຄວນເປັນ ບ່ອນທີ່ຫຼາຍຄົນຄຸ້ນເຄີຍ ແລະ ເປັນກາງສຳລັບຜູ້ເຂົ້າຮ່ວມ, ເຊັ່ນ ຫໍປະຊຸມ, ສູນຊຸມຊົນ, ແລະ ອື່ນໆ. ຜູ້ອຳນວຍຄວາມສະດວກຄວນເອົາໃຈໃສ່ຕໍ່ກັບຄວາມຈຳເປັນພິເສດ ສຳລັບຜູ້ເຂົ້າຮ່ວມທີ່ພິການ.
- ຖ້າເປັນໄປໄດ້, ບ່ອນນັ່ງຢູ່ໃນສະຖານທີ່ຄວນກະກຽມໃນຮູບແບບ 'ວົງມົນ' ຫຼື 'ໂຕ U' ຢ່າງສະດວກສະບາຍ. ການຈັດວາງສະຖານທີ່ດັ່ງກ່າວຈະເອື້ອອຳນວຍໃຫ້ແກ່ການດຳເນີນການສົນທະນາທີ່ຄຶກຄື້ນຫຼາຍຂຶ້ນ. ໂຕະ/ໂຕະເຮັດວຽກ ແມ່ນບໍ່ຈຳເປັນສຳລັບພາກສົນທະນາ ແລະ ຜູ້ເຂົ້າຮ່ວມ ອາດຈະນັ່ງຕາມພື້ນ ຫຼື ພື້ນດິນ. ເນື້ອໃນຂອງການສົນທະນາ ຍັງເໝາະສົມຕໍ່ກິດຈະກຳການຝຶກອົບຮົມທີ່ເປັນທາງການ, ເຊິ່ງໃນກໍລະນີດັ່ງກ່າວຜູ້ເຂົ້າຮ່ວມຄວນນັ່ງຢູ່ໂຕະໂດຍສະເພາະໃນຮູບແບບເປັນ 'ເວທີ'.




ມັກໃຊ້ສຳລັບ ການຝຶກອົບຮົມໂດຍກົງກັບ
ຜູ້ອຳນວຍຄວາມສະດວກ




ເໝາະສຳລັບການຝຶກອົບຮົມ
ທີ່ບໍ່ເປັນທາງການ

### ອຸປະກອນ

- ການນຳໃຊ້ອຸປະກອນປະຈັກຕາ ສາມາດເພີ່ມປະສົບການ ການຮຽນຮູ້ຂອງຜູ້ເຂົ້າຮ່ວມພໍສົມຄວນ. ອີງຕາມຊັບພະຍາກອນທີ່ມີຢູ່ ແມ່ນສາມາດນຳໃຊ້ອຸປະກອນປະຈັກຕາໃນຫຼາກຫຼາຍຮູບແບບ.
- ບ່ອນໃດທີ່ມີໄຟຟ້າ ຫຼື ອຸປະກອນ, ຜູ້ອຳນວຍຄວາມສະດວກສາມາດໃຊ້ເຄື່ອງສາຍຂໍ້ມູນ ແລະ ຈໍພາບສຳລັບການນຳສະເໜີ *ຮູບພາບສະໄລ້ສຳລັບ ຜູ້ຕາງໜ້າຊຸມຊົນ.* ໃນກໍລະນີອື່ນໆ, ມັນອາດຈະດີກວ່າ ແລະ/ຫຼື ຮັບປະກັນກ່ວາ ຖ້າຈະນຳໃຊ້ສິ່ງພິມຕ່າງໆ. ຕົວຢ່າງ: ຮູບພາບສະໄລ້ສຳລັບຜູ້ຕາງໜ້າຊຸມຊົນແມ່ນສາມາດພິມໃສ່ເຈ້ຍແຜ່ນໃຫຍ່ ຫຼື ຜູ້ອຳນວຍຄວາມສະດວກ ສາມາດ ຂຽນຂໍ້ຄວາມທີ່ສຳຄັນໃສ່ເຈ້ຍແຜ່ນໃຫຍ່.
- ອີກທາງເລືອກໜຶ່ງ, ຜູ້ອຳນວຍຄວາມສະດວກສາມາດດຳເນີນ ເວທີການສົນທະນາໄດ້ງ່າຍໆ ໂດຍບໍ່ຕ້ອງນຳໃຊ້ ອຸປະກອນປະຈັກຕາໃດໆ.

<table>
<tr>
<td>ເອກະສານ ແຈກຢາຍ ສຳລັບ ຜູ້ເຂົ້າຮ່ວມ</td>
<td>
ຄວນກະກຽມເອກະສານແຈກຢາຍລຸ່ມນີ້ ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ:
<ul>
<li>ບັດເອົາກັບບ້ານ ເອກະສານຊ້ອນທ້າຍ 1</li>
<li>ແບບຟອມທົດສອບກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ ເອກະສານຊ້ອນທ້າຍ 3-4 (ເປັນທາງເລືອກ, ອັນນີ້ແມ່ນສາມາດດຳເນີນເປັນກິດຈະກຳຝຶກຫັດທີ່ຕອບໂຕ້ກັນໄປມາໄດ້ໂດຍນຳໃຊ້ ບັດຄຳຕອບສຳລັບແບບຟອມທົດສອບກ່ອນການຝຶກອົບຮົມ ແລະ ຫຼັງການຝຶກອົບຮົມໃນ ເອກະສານຊ້ອນທ້າຍທີ 5)</li>
<li>ແບບຟອມ ຄວາມເຫັນຂອງຂ້ອຍ: ເອກະສານຊ້ອນທ້າຍ 8 (ເປັນທາງເລືອກ, ອັນນີ້ແມ່ນສາມາດສົນທະນາກັນແບບປາກເປົ່າ)</li>
<li>ກໍລະນີສຶກສາ ສຳລັບຜູ້ຕາງໜ້າຊຸມຊົນ: ເອກະສານຊ້ອນທ້າຍ 7 (ເປັນທາງເລືອກ, ອັນນີ້ແມ່ນສາມາດສື່ສານກັນແບບປາກເປົ່າ)</li>
</ul>
ເອກະສານແຈກຢາຍ ແລະ/ຫຼື ກິດຈະກຳເຫຼົ່ານີ້ ຄວນໄດ້ຮັບການດັດປັບຕາມຄວາມຈຳເປັນ ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມທີ່ມີຄວາມສາມາດແຕກຕ່າງກັນ ໄດ້ເຂົ້າຮ່ວມ.
</td>
</tr>
<tr>
<td>ອຸປະກອນ ອື່ນໆ</td>
<td>
<ul>
<li>ເຈ້ຍແຜ່ນໃຫຍ່ ຫຼື ກະດານດຳ</li>
<li>ປາກກາມາກເກີ້ ຫຼື ສໍຂາວ ແລະ ໝອນລຶບກະດານ</li>
<li>ໝາກບານເບົາ (ເປັນທາງເລືອກ - ສຳລັບເກມແນະນຳຕົວ)</li>
</ul>
</td>
</tr>
</table>



# ຕ້ອງໃຊ້ເວລາເທົ່າໃດໃນການດຳເນີນເວທີການສົນທະນາ?

ເວທີການສົນທະນາ ຖືກອອກແບບຂຶ້ນເພື່ອໃຊ້ເວລາປະມານສາມ ຊົ່ວໂມງ. ແນວໃດກໍຕາມ, ຖ້າຕ້ອງການດົນກວ່ານັ້ນກໍເປັນໄປໄດ້ ໂດຍຂຶ້ນກັບບໍລິບົດຝຶກຫັດ ແລະ ວິທີການມີຊູກຍູ້ການມີສ່ວນຮ່ວມ. ປຶ້ມຄູ່ມືລວມມີ ກິດຈະກຳທີ່ເປັນທາງເລືອກອື່ນ ທີ່ສາມາດນຳໃຊ້ ຖ້າມີເວລາຫຼາຍ.

ຕາຕະລາງລຸ່ມນີ້ ກຳນົດກອບເວລາສຳລັບແຕ່ລະຫົວຂໍ້ ແລະ ກິດຈະກຳ ແລະ ເນັ້ນໃຫ້ເຫັນ ກິດຈະກຳທີ່ເປັນທາງເລືອກ ໃນກໍລະນີທີ່ມີກອບເວລາຈຳກັດ. ຢູ່ໃນ *ຂໍ້ແນະນຳສຳລັບພາບສະໄລ້* (ພາກທີ 2), ພາບສະໄລ້ທີ່ສຳຄັນແມ່ນຖືກໝາຍດ້ວຍ ●

| ຫຼັກສູດ | ຫົວຂໍ້ການດຳເນີນການ | ສຳຄັນ | ເປັນທາງເລືອກ | ເວລາ |
|---|---|---|---|---|
| **ພາກສະເໜີ** | ພິທີເປີດ | | ● | ສູງສຸດ 1 ຊົ່ວໂມງ |
| | ການແນະນຳຕົວຜູ້ອຳນວຍຄວາມສະດວກ ແລະ ຜູ້ເຂົ້າຮ່ວມ<br>ຍ້ອນຫຍັງພວກເຮົາຈິ່ງມາທີ່ນີ້ ? | ● | | 15 ນາທີ |
| | ກິດຈະກຳ: ແບບທົດສອບກ່ອນຝຶກອົບຮົມ | ● | | 10 ນາທີ 10 ນາທີ |
| **ການລ່ວງລະເມີດທາງເພດເດັກແມ່ນຫຍັງ?** | ການລ່ວງລະເມີດເດັກແມ່ນຫຍັງ?<br>ການລ່ວງລະເມີດທາງເພດເດັກແມ່ນຫຍັງ? | ● | | 15 ນາທີ |
| | ຄຳຖາມເພື່ອຄິດສະທ້ອນຄືນ/ສົນທະນາ: ທ່ານໄດ້ຍິນຫຍັງແດ່? | | ● | ສູງສຸດ 15 ນາທີ |
| | ຜົນກະທົບຂອງການລ່ວງລະເມີດທາງເພດເດັກ | ● | | 5 ນາທີ |
| **ຜູ້ຕາງໜ້າຊຸມຊົນຕ້ອງຮູ້ຂໍ້ມູນໃດແດ່?** | ໃຜແມ່ນຜູ້ເຄາະຮ້າຍ? | ● | | 5 ນາທີ |
| | ໃຜແມ່ນຜູ້ລ່ວງລະເມີດ? ພວກເຂົາເຄື່ອນໄຫວແນວໃດ? | ● | | 20 ນາທີ |
| | ສັນຍານບອກວ່າເດັກມີຄວາມສ່ຽງມີຫຍັງແດ່? | ● | | 20 ນາທີ |
| | ການພົວພັນລະຫວ່າງ ດີຈີຕອນເຕັກໂນໂລຊີ ແລະ ການລ່ວງລະເມີດເດັກມີຫຍັງແດ່? | ● | | 15 ນາທີ |
| | ຄຳຖາມເພື່ອຄິດສະທ້ອນຄືນ/ສົນທະນາ: ຄວາມສ່ຽງຕ່າງໆຕໍ່ຄວາມປອດໄພຂອງເດັກຈາກການນຳໃຊ້ດີຈີຕອນເຕັກໂນໂລຊີ | | ● | 5 ນາທີ |
| | ການພົວພັນ ລະຫວ່າງ ດີຈີຕອນເຕັກໂນໂລຊີ ແລະ ການລ່ວງລະເມີດເດັກມີຫຍັງແດ່? | ● | | 10 ນາທີ |
| | ຄຳຖາມເພື່ອຄິດສະທ້ອນຄືນ/ສົນທະນາ: ຄວາມສ່ຽງຕໍ່ຄວາມປອດໄພຂອງເດັກຈາກການຂະຫຍາຍຕົວຂອງການທ່ອງທ່ຽວ | | ● | 5 ນາທີ |

| ຫຼັກສູດ | ຫົວຂໍ້ການດໍາເນີນການ | ສໍາຄັນ | ເປັນທາງເລືອກ | ເວລາ |
|---|---|---|---|---|
| **ຜູ້ຕາງໜ້າຊຸມຊົນມີຄວາມຮັບຜິດຊອບຫຍັງແດ່ພາຍໃຕ້ກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງ?** | ກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງ | ● | | 10 ນາທີ |
| | ຄໍາຖາມເພື່ອຄິດສະທ້ອນຄືນ/ ສົນທະນາ: ຜົນກະທົບຕໍ່ ຍຸດທະສາດ/ ແຜນແຫ່ງຊາດ | | ● | ສູງສຸດ 15 ນາທີ |
| **ພວກເຮົາສາມາດດໍາເນີນມາດຕະການໃດເພື່ອປົກປ້ອງເດັກໃຫ້ດີກວ່າເກົ່າ ?** | ກິດຈະກໍາ: ຊຸມຊົນຂອງຂ້ອຍປອດໄພຊໍ່າໃດ? | | ● | ສູງສຸດ 10 ນາທີ |
| | ຊອກຮູ້ສະພາບການ | ● | | 10 ນາທີ |
| | ຄໍາຖາມເພື່ອຄິດສະທ້ອນຄືນ/ ສົນທະນາ: ຕົວຢ່າງທີ່ດີ ກ່ຽວກັບການສົນທະນາ ແລະ ການສື່ສານແບບເປີດເຜີຍ ໃນຊຸມຊົນຂອງພວກເຮົາ | | ● | ສູງສຸດ 15 ນາທີ |
| | ຍຸດທະສາດການປ້ອງກັນ | ● | | 10 ນາທີ |
| | ຄໍາຖາມເພື່ອຄິດສະທ້ອນຄືນ/ ສົນທະນາ: ຕົວຢ່າງທີ່ດີ ກ່ຽວກັບຍຸດທະສາດການປ້ອງກັນ | | ● | ສູງສຸດ 15 ນາທີ |
| | ການປົກປ້ອງ | ● | | 5 ນາທີ |
| | ວິທີການຮັບມື ຕໍ່ການເປີດເຜີຍຂໍ້ມູນ | ● | | 15 ນາທີ |
| | ຄໍາຖາມເພື່ອຄິດສະທ້ອນຄືນ/ ສົນທະນາ: ຂັ້ນຕອນຕ່າງໆ ຖ້າເດັກຕົກຢູ່ໃນຄວາມສ່ຽງ | | ● | 5 ນາທີ |
| | ກິດຈະກໍາ: ກໍລະນີສຶກສາ | | ● | 20 ນາທີ |
| | ກິດຈະກໍາ: ແຜນການປົກປ້ອງເດັກຂອງຊຸມຊົນພວກເຮົາ | | ● | 30 ນາທີ |
| **ຂໍ້ສະຫລຸບ** | ກິດຈະກໍາ: ການປະເມີນ | ● | | 10 ນາທີ |
| | ກິດຈະກໍາ: ແບບທົດສອບຫຼັງຝຶກອົບຮົມ | ● | | 10 ນາທີ |
| | ພາກປິດ | ● | | 5 ນາທີ |
| | ພິທີປິດ | | ● | ສູງສຸດ 30 ນາທີ |

# ຂໍ້ແນະນຳພິເສດສຳລັບການຝຶກອົບຮົມການປົກປ້ອງເດັກ

## ເອົາໃຈໃສ່ຕໍ່ການອຳນວຍຄວາມສະດວກການສົນທະນາດ້ວຍຄວາມລະອຽດອ່ອນ

ການລ່ວງລະເມີດເດັກ, ໂດຍສະເພາະການລ່ວງລະເມີດທາງເພດ, ແມ່ນບັນຫາທີ່ຫຼໍ່ແຫຼມ ທີ່ຈຳເປັນຕ້ອງມີທົບທວນຄືນ ແລະ ການພິຈາລະນາ ໂດຍຜູ້ເຂົ້າຮ່ວມ. ກ່ອນການເລີ່ມຕົ້ນສົນທະນາ ກ່ຽວກັບການລ່ວງລະເມີດເດັກ, ຄວນໃຫ້ໂອກາດຜູ້ເຂົ້າຮ່ວມໄດ້ເວົ້າ ກ່ຽວກັບຫົວຂໍ້ທີ່ບໍ່ມີການພະເຊີນໜ້າກັນ ດັ່ງທີ່ໄດ້ກຳນົດ ໄວ້ຢູ່ໃນ*ຄູ່ມືພາບສະໄລ້* ໂດຍການໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນໄດ້ 'ເວົ້າ' ໃນລະຫວ່າງກິດຈະກຳການແນະນຳຕົວເວລາເລີ່ມຕົ້ນ, ພວກເຂົາຈະຮູ້ສຶກສະດວກຂຶ້ນ ໃນການເວົ້າກ່ຽວກັບບັນຫາການລ່ວງລະເມີດເດັກ ຕະຫຼອດໄລຍະຂອງການສົນທະນາ.

## ຈົ່ງກຽມພ້ອມຂໍ້ມູນການຕິດຕໍ່ ສຳລັບການໃຫ້ຄຳປຶກສາທີ່ຊຳນານງານ ຫຼື ການບໍລິການສົ່ງຕໍ່ຕ່າງໆ.

ຈົ່ງໄດ້ຄຳນຶງວ່ານັກສຳມະນາກອນບາງຄົນອາດຖືກຕົກເປັນຜູ້ເຄາະຮ້າຍຈາກການລ່ວງລະເມີດມາກ່ອນ. ຈົ່ງຄຳນຶງວ່າ ແຕ່ລະຄົນມີປະຕິກິລິຍາແຕກຕ່າງກັນຕໍ່ກັບ ການລ່ວງລະເມີດ; ຕົວຢ່າງ ບາງຄົນອາດຈະບໍ່ໄດ້ຄິດກ່ຽວກັບບັນຫານີ້ເປັນເວລາດົນແລ້ວ ແລະ ການສົນທະນາ ອາດພາໃຫ້ຄິດຄືນຄວາມຊົງຈຳທີ່ເຈັບປວດ. ພວກເຮົາສາມາດເຮັດຫຍັງແດ່ເພື່ອ ປົກປ້ອງເດັກໃຫ້ດີກວ່າເກົ່າ? ຖ້າວ່າຜູ້ເຂົ້າຮ່ວມຕ້ອງການທີ່ຈະເວົ້າກ່ຽວກັບ ປະສົບການສ່ວນຕົວຂອງເຂົາເຈົ້າ, ຂໍໃຫ້ເຂົາເວົ້າຢູ່ໃນສະຖານທີ່ ທີ່ເປັນສ່ວນຕົວ (ໃນໄລຍະພັກຜ່ອນ ຫຼື ໃນເວລາສະຫຼຸບການສົນທະນາ). ຜູ້ອຳນວຍຄວາມສະດວກຄວນກະກຽມຂໍ້ມູນຕິດຕໍ່ລາຍລະອຽດເພື່ອເຮັດການໃຫ້ຄຳປຶກສາຕາມຫຼັກວິຊາການ ແລະ ສົ່ງຕໍ່ໄປໃຫ້ພາກສ່ວນກ່ຽວຂ້ອງຖ້າຫາກວ່ານັກສຳມະນາກອນດັ່ງກ່າວຢາກຈະສົນທະນາກ່ຽວກັບສະພາບການຂອງພວກເຂົາໂດຍລະອຽດຕື່ມ.

## ລາຍງານໂດຍທັນທີ ຂໍ້ມູນຈາກການເປີດເຜີຍກ່ຽວກັບເດັກ ທີ່ອາດກຳລັງຖືກລ່ວງລະເມີດ

ມັນມີຄວາມເປັນໄປໄດ້ທີ່ຜູ້ເຂົ້າຮ່ວມບາງຄົນ ອາດຈະມີການແລກປ່ຽນຂໍ້ມູນ ທີ່ລະບຸວ່າ ໃນປະຈຸບັນນີ້ເດັກອາດຈະຖືກລ່ວງລະເມີດຢູ່ໃນຄອບຄົວ, ຊຸມຊົນຂອງເຂົາເຈົ້າ ຫຼື ບ່ອນອື່ນໆ. ການເປີດເຜີຍຂໍ້ມູນເຫຼົ່ານັ້ນ ຕ້ອງໄດ້ຖືກດຳເນີນການຢ່າງຈິງຈັງ, ໂດຍປິດເປັນຄວາມລັບ ແລະ ຢ່າງທັນການ ຍ້ອນເດັກກຳລັງມີຄວາມສ່ຽງ. ການເປີດເຜີຍຂໍ້ມູນດັ່ງກ່າວ ຕ້ອງໄດ້ສົ່ງຕໍ່ໃຫ້ແກ່ໜ່ວຍງານທ້ອງຖິ່ນທີ່ເໝາະສົມ (ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ເຈົ້າໜ້າທີ່ທ້ອງຖິ່ນ). ຜູ້ອຳນວຍຄວາມສະດວກຕ້ອງຮູ້ບັນດາສຳນັກງານທີ່ເຮັດວຽກການສົ່ງຕໍ່ຢູ່ທ້ອງຖິ່ນທີ່ເໝາະສົມເພື່ອເຮັດການສືບສວນຂໍ້ມູນທີ່ຖືກລາຍງານດັ່ງກ່າວ. **ການເປີດເຜີຍຂໍ້ມູນທັງໝົດຕ້ອງໄດ້ລາຍງານໃນທັນທີທັນໃດ.**

## ຮັບມືກັບຄຳຖາມ ແລະ/ຫຼື ພຶດຕິກຳຕ່າງໆທີ່ຫຍຸ້ງຍາກ ດ້ວຍຄວາມລະອຽດອ່ອນ

ມັນເປັນສິ່ງສຳຄັນໃນການພິຈາລະນາ ແລະ ເຄົາລົບຕໍ່ພື້ນຖານທາງດ້ານວັດທະນະທຳຂອງຜູ້ເຂົ້າຮ່ວມ. . ແນວໃດກໍຕາມ, ວັດທະນະທຳບໍ່ຄວນເອົາມາ ເປັນຂໍ້ອ້າງໃນການລ່ວງລະເມີດເດັກ.

ອາດຈະມີຄຳຖາມເກີດຂຶ້ນກ່ຽວກັບຄວາມເຊື່ອທາງເພດ ແລະ ເອກະລັກທາງເພດ. ຜູ້ອຳນວຍຄວາມສະດວກຕ້ອງກຽມພ້ອມຕອບຄຳຖາມໃນການສົນທະນາ ຢ່າງຈະແຈ້ງ ແລະ ກົງໄປກົງມາ. ຜູ້ອຳນວຍຄວາມສະດວກຄວນເນັ້ນຕື່ມວ່າ ເດັກທຸກໆຄົນມີສິດຕໍ່ການປົກປ້ອງ, ບໍ່ວ່າເຂົາຈະມີຄວາມເຊື່ອທາງເພດ ແລະ ລັກສະນະທາງເພດແນວໃດກໍຕາມ. ການປະນາມ, ຈຳແນກ ຫຼື ປິດລັບຄວາມເຊື່ອທາງເພດ ແລະ ລັກສະນະທາງເພດນັ້ນ ອາດຈະພັກດັນ ໃຫ້ເດັກ ບາງຄົນຕົກໃນສະພາບການທີ່ສ່ຽງ ຖ້າວ່າເຂົາເຈົ້າບໍ່ໄດ້ຮັບການສະໜັບສະໜູນຢູ່ພາຍໃນຊຸມຊົນ.

1 ສ່ວນໃຫຍ່ບຸກຄົນ ຜູ້ທີ່ທຸກທໍລະມານຈາກການຖືກລ່ວງລະເມີດທາງເພດຕອນຍັງເດັກ ມັກລະງັບຄວາມຊົງຈຳກ່ຽວກັບປະສົບການເຫຼົ່ານີ້ ເພື່ອເປັນກົນໄກການຮັບມື.

ຜູ້ອຳນວຍຄວາມສະດວກຄວນຮັບປະກັນວ່າ ຄຳເວົ້າຂອງຜູ້ເຂົ້າຮ່ວມ ທີ່ ບໍ່ມີມູນຄວາມຈິງ ຫຼື ບໍ່ເອື້ອອຳນວຍຕໍ່ການສ້າງສະພາບແວດລ້ອມທີ່ປອດໄພສຳລັບເດັກ ແມ່ນຕ້ອງໄດ້ຮັບການແກ້ໄຂຢ່າງລະອຽດອ່ອນ. ຕົວຢ່າງ, ຄວາມເຫັນກ່ຽວກັບການນຸ່ງຖືຂອງເດັກຍິງ ບໍ່ກ່ຽວຂ້ອງກັບປະເດັນການສົນທະນາ ແລະ ສາມາດສ້າງທັດສະນະຄະຕິ ທີ່ລຳອຽງທາງເພດ ຊຶ່ງເປັນການ 'ກ່າວໂທດຜູ້ເຄາະຮ້າຍ'. ຜູ້ອຳນວຍຄວາມສະດວກບໍ່ຄວນສົ່ງເສີມການສົນທະນະປະເພດນີ້ ແລະ ຄວນສຸມໃສ່ເນື້ອໃນສຳຄັນທີ່ລະບຸໃນເອກະສານຕ່າງໆ.

ໃນບາງຄັ້ງ, ຜູ້ອຳນວຍຄວາມສະດວກຈະປະເຊີນກັບຜູ້ເຂົ້າຮ່ວມທີ່ສະແດງພຶດຕິກຳທີ່ຮັບມືຍາກ (ມັກຖຽງ, ເວົ້າບໍ່ຢຸດ, ທັດສະນະຄະຕິໃນທາງລົບ, ກໍ່ກວນ ຫຼື ຄົນທີ່ຄິດວ່າຕົນເອງຮູ້ທຸກສິ່ງທຸກຢ່າງ). ເພື່ອຫຼີກເວັ້ນບໍ່ໃຫ້ມີການຂັດແຍ່ງ ໃຫ້ນັກສຳມະນາກອນປະເພດດັ່ງກ່າວມີສ່ວນຮ່ວມໃນການຊອກຫາວິທີການແກ້ໄຂບັນຫາທີ່ພວກເຂົາໄດ້ຍົກຂຶ້ນ. ຫຼີກເວັ້ນການປ່ອຍປະລະເລີຍຜູ້ເຂົ້າຮ່ວມຄົນອື່ນທີ່ເນື່ອງຈາກພຶດຕິກຳຂອງຜູ້ເຂົ້າຮ່ວມອີກຄົນໜຶ່ງ.

ບອກໃຫ້ຜູ້ເຂົ້າຮ່ວມຮັບຊາບວ່າ ເດັກບໍ່ຄວນຖືກກ່າວໂທດສຳລັບການຕົກເປັນຜູ້ເຄາະຮ້າຍຈາກ ການລ່ວງລະເມີດທາງເພດ.

# ບັນທຶກ

## ພາກທີ 2:

# ຄູ່ມືການໃຊ້ພາບສະໄລ້



# ຄູ່ມືການໃຊ້ພາບສະໄລ້

ພາກນີ້ໃຫ້ຂໍ້ແນະນໍາຕາມແຕ່ລະຂັ້ນຕອນ ເພື່ອຊ່ວຍຜູ້ອໍານວຍຄວາມສະດວກໃນການດໍາເນີນ ເວທີສົນທະນາ. ພາບສະໄລ້ສໍາລັບຜູ້ຕາງໜ້າຊຸມຊົນ (The Community Representative PowerPoint Presentation) ແມ່ນສາມາດ ດາວໂຫຼດທີ່ http://www.childsafetourism.org ແລະ http://wvi.org/asiapacific/childsafetourism ແລະ ຄວນໄດ້ຮັບການທົບທວນ ແລະ ດັດປັບ ກ່ອນເວທີສົນທະນາ ເພື່ອໃຫ້ລວມເອົາເນື້ອໃນທີ່ກ່ຽວຂ້ອງກັບທ້ອງຖິ່ນ ແລະ/ຫຼື ປະເທດ. ພາບສະໄລ້ແມ່ນເຄື່ອງມືທີ່ນໍາໃຊ້ເພື່ອສະໜັບສະໜູນຈຸດປະສົງຂອງການຮຽນຮູ້ ແລະ ຊຸກຍູ້ຄວາມຈໍາຂອງຜູ້ເຂົ້າຮ່ວມ ກ່ຽວກັບເນື້ອໃນຂອງເວທີສົນທະນາ. ຖ້າບໍ່ສາມາດໃຊ້ພາບສະໄລ້ເຫຼົ່ານີ້ເປັນເຄື່ອງມືປະຈັກຕາໄດ້ (ເຊັ່ນວ່າ ຂໍ້ມູນທີ່ສາຍໂດຍເຄື່ອງໂປຣເຈັກເຕີ້ ຫຼື ພິມອອກໃນເຈ້ຍແຜ່ນໃຫຍ່), ຜູ້ອໍານວຍຄວາມສະດວກສາມາດນໍາໃຊ້ຄູ່ມືການໃຊ້ພາບສະໄລ້ ເພື່ອເປັນຂໍ້ແນະນໍາສໍາລັບການເວົ້າ.

ຜູ້ອໍານວຍຄວາມສະດວກຄວນພະຍາຍາມສ້າງສະພາບແວດລ້ອມການຮຽນຮູ້ທີ່ ມີລັກສະນະຫຼາກຫຼາຍ ໂດຍເສີມຂະຫຍາຍພາບສະໄລ້ ແລະ ເສີມກິດຈະກໍາຕ່າງໆເຂົ້າໃນໄລຍະເວລາຕາມຄໍາແນະນໍາ. ຄູ່ມືການໃຊ້ພາບສະໄລ້ ຍັງມີຄໍາຖາມທີ່ຜູ້ອໍານວຍຄວາມສະດວກສາມາດຖາມ ເພື່ອກະຕຸ້ນໃຫ້ມີການສົນທະນາແລກປ່ຽນກັນໃນກຸ່ມ/ ຫຼື ການທົບທວນຄືນສ່ວນບຸກຄົນ ອີງຕາມຜູ້ເຂົ້າຮ່ວມ ແລະ ເວລາທີ່ມີ (ມີຫົວຂໍ້ຄື **'ຄໍາຖາມເພື່ອຄິດສະທ້ອນຄືນ/ສົນທະນາ'**). ຄວນຢາຍ ບັດເອົາກັບບ້ານ **(ເອກະສານຊ້ອນທ້າຍ 1)** ໃຫ້ຜູ້ເຂົ້າຮ່ວມໃນຕອນເລີ່ມຕົ້ນຂອງການສົນທະນາ ແລະ ໃຊ້ອ້າງອີງຕະຫຼອດການສົນທະນາ. ຜູ້ອໍານວຍຄວາມສະດວກຄວນຊຸກຍູ້ໃຫ້ຜູ້ເຂົ້າຮ່ວມໃຊ້ບັດດັ່ງກ່າວເພື່ອເປັນຂໍ້ມູນອ້າງອີງທີ່ມີປະໂຫຍດ ເມື່ອພວກເຂົາກັບ ໄປບ້ານ ແລະ ບ່ອນເຮັດວຽກ ກໍຄື ແລກປ່ຽນຂໍ້ມູນທີ່ເຂົາເຈົ້າໄດ້ຮຽນຮູ້ ກັບຄອບຄົວ ແລະ ເພື່ອນຮ່ວມງານຂອງເຂົາເຈົ້າ. ຜູ້ອໍານວຍຄວາມສະດວກ ສາມາດແຈກຢາຍ ໃບທົດສອບເບື້ອງຕົ້ນ **(ເອກະສານຊ້ອນທ້າຍ 3)** ພ້ອມດຽວກັນກັບ ບັດເອົາກັບບ້ານ ແລະ ໃຫ້ຜູ້ເຂົ້າປະກອບໃບທົດສອບເບື້ອງຕົ້ນ ຕາມເວລາທີ່ເໝາະສົມໃນໄລຍະການສົນທະນາ.

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ພາກສະເໜີ** | | |
| **ແຜ່ນສະໄລ້ 1** ●  | | • ພາກສະເໜີ – ສາມາດສະແດງ ຕອນທີ່ຜູ້ເຂົ້າຮ່ວມເລີ່ມເຂົ້າສູ່ເວທີການສົນທະນາ.<br>• ປັບພາບສະໄລ້ນີ້ໃຫ້ແທດເໝາະກັບທ້ອງຖິ່ນ ໂດຍການຕື່ມ ຊື່ຊຸມຊົນ, ຊື່ຂອງຜູ້ອຳນວຍຄວາມ ສະດວກ ແລະ ຜູ້ອຳນວຍຄວາມສະດວກຜູ້ທີສອງ, ແລະຖ້າເໝາະສົມ ໃຫ້ເອົາໂລໂກ້ຂອງອົງການ ຄູ່ຮ່ວມງານເຂົ້ານຳ.<br>• ຖ້າວ່າມີພິທີເປີດ ໂດຍມີການກ່າວເປີດຢ່າງເປັນທາງການ, ອາດເພີ່ມ ພາບສະໄລ້ເຂົ້າຕື່ມ ເພື່ອໃຫ້ສະແດງພິທີດັ່ງກ່າວ. |
| **ແຜ່ນສະໄລ້ 2** ●  | • ສະບາຍດີຕອນເຊົ້າ/ຕອນບ່າຍ.<br>• ຂໍຂອບໃຈທຸກຄົນທີ່ສະລະເວລາມາຮ່ວມ ເວທີສົນທະນາໃນຄັ້ງນີ້.<br>• ຜູ້ອຳນວຍຄວາມສະດວກເລີ່ມຕົ້ນດ້ວຍຄຳເວົ້າທີ່ເປັນ ກັນເອງ ແລະ ແນະນຳຕົນເອງໂດຍຫຍໍ້ ແລະ ຜູ້ອື່ນໆ ທີ່ຊ່ວຍຊຸກຍູ້ການຝຶກອົບຮົມໃນຄັ້ງນີ້. | • ຍ້ອນໄດ້ຈັດເວລາຈຳກັດສຳລັບເວທີສົນທະນາ ຂອງຜູ້ຕາງໜ້າຊຸມຊົນ, ໃຫ້ດຳເນີນພາກສະເໜີນີ້ ຢ່າງໄວ.<br>• ຈຸດປະສົງຂອງພາກສະເໜີ ແມ່ນເພື່ອເຮັດໃຫ້ ຜູ້ເຂົ້າຮ່ວມຮູ້ສຶກສະບາຍ ແລະ ເຂົ້າໃຈສິ່ງທີ່ ສະເໜີ ແລະ ໃຫ້ໂອກາດເຂົາເຈົ້າແນະນຳຕົນເອງ ແລະ ຮຽນຮູ້ກ່ຽວກັບຜູ້ອື່ນໃນກຸ່ມ ກ່ອນທີ່ຈະເຂົ້າໄປ ສູ່ບັນຫາທີ່ຫຼູແຫຼມກ່ຽວກັບ ການລ່ວງລະເມີດທາງ ເພດເດັກ ທີ່ຈະນຳສະເໜີໃນພາກຕໍ່ໆໄປ. |
| **ແຜ່ນສະໄລ້ 3** ●  | • ອະທິບາຍວ່າເອກະສານການຝຶກອົບຮົມນີ້ແມ່ນ ໄດ້ຖືກພັດທະນາຂຶ້ນ ໂດຍອົງການສຸພະນິມິດ ສຳລັບ ໂຄງການເດັກ - ເສົາຫຼັກປ້ອງກັນ, ຊຶ່ງເປັນ ແຜນງານລິເລີ່ມຂອງ ລັດຖະບານອົດສຕຣາລີ ເພື່ອ ປ້ອງກັນການລ່ວງລະເມີດທາງເພດເດັກ ໃນຂະແໜງ ການເດີນທາງ ແລະ ການທ່ອງທ່ຽວ. | • ຕາມຄວາມເໝາະສົມ, ຜູ້ອຳນວຍຄວາມສະ ດວກຄວນອະທິບາຍໂດຍຫຍໍ້ ວ່າ ຊຸມຊົນທ້ອງຖິ່ນມີ ການພົວພັນກັບການທ່ອງທ່ຽວແນວໃດ (ຕົວຢ່າງ: ເປັນແຫຼ່ງທ່ອງທ່ຽວທີ່ໄດ້ຮັບການສ້າງຂຶ້ນເປັນຢ່າງດີ, ເປັນບ່ອນທ່ອງທ່ຽວທີ່ ກຳລັງເຕີບໃຫຍ່ຂະຫຍາຍຕົວ, ມີການອົບພະຍົບຈາກຊຸມຊົນ ໄປຫາບ່ອນທ່ອງທ່ຽວ, ອື່ນໆ). ອັນນີ້ແມ່ນການສະເໜີຄວາມເປັນມາ ແລະ ວາງພື້ນຖານສຳລັບເວທີສົນທະນາ.<br>• ຖ້າເປັນໄປໄດ້, ຜູ້ອຳນວຍຄວາມສະ ດວກຄວນອະທິບາຍໃຫ້ຊັດເຈນວ່າ ການລ່ວງລະ ເມີດທາງເພດເດັກນັ້ນຍັງສາມາດ ເກີດຂຶ້ນໃນຊຸມຊົນ ທີ່ບໍ່ແມ່ນແຫຼ່ງທ່ອງທ່ຽວ. |
| **ແຜ່ນສະໄລ້ 4** ●  | • ມື້ນີ້ຂ້າພະເຈົ້າຄິດວ່າທ່ານເປັນຜູ້ຕາງໜ້າທີ່ມີຄວາມຮູ້ ຄວາມສາມາດມາຈາກຊຸມຊົນຂອງທ່ານ.<br>• ບາງຄົນກໍຮູ້ຈັກກັນແລ້ວ ແລະ ບາງຄົນກໍຍັງບໍ່ທັນ ຮູ້ຈັກກັນເທື່ອ.<br>• ສະນັ້ນ, ເພື່ອໃຫ້ຮູ້ຈັກກັນ, ຂໍໃຫ້ແຕ່ລະຄົນແນະນຳ ຕົນເອງໂດຍຕອບ ສອງຄຳຖາມງ່າຍ ຄື<br>– ເຈົ້າຊື່ຫຍັງ?<br>– ເຈົ້າເຮັດວຽກຫຍັງ? | • ເພື່ອເຮັດໃຫ້ພາກນີ້ມີຄວາມມ່ວນຊື່ນ ແລະ ແລກປ່ຽນກັນທັງສອງກ້ຳສອງຝ່າຍ, ການແນະ ນຳໂຕ ຈະເລີ່ມ ໂດຍການໂຍນ ໝາກບານເບົາ ໃຫ້ຜູ້ເຂົ້າຮ່ວມໜຶ່ງທ່ານ. ຫຼັງຈາກທີ່ເຂົາເຈົ້າໄດ້ ແນະນຳຕົນເອງແລ້ວ ເຂົາເຈົ້າສາມາດເລືອກຄົນຕໍ່ໄປ ໂດຍການໂຍນ ໝາກບານໄປໃຫ້ຜູ້ນັ້ນ. ຊຸກຍູ້ໃຫ້ ຜູ້ເຂົ້າຮ່ວມໂຍນໝາກບານໄປໃຫ້ຄົນທີ່ເຂົາເຈົ້າ ບໍ່ເຄີຍພົບມາກ່ອນ. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | • ພາຍຫຼັງການນຳສະເໜີຕົວສຳເລັດລົງ:<br>– ຄວນໃຫ້ຄວາມເຄົາລົບຜູ້ທີ່ມີປະສົບການສູງສຸດຢູ່ໃນຫ້ອງ.<br>– ສະແດງຄວາມຊົມເຊີຍ ແລະ ຍ້ອງຍໍຕໍ່ກັບປະສົບການທີ່ນຳມາຈາກຂະແໜງການຕ່າງໆ<br>– ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມສົນທະນາ ແລະ ແລກປ່ຽນປະສົບການໃຫ້ຫຼາຍຂຶ້ນ.<br>– ແນະນຳໃຫ້ຜູ້ເຂົ້າຮ່ວມຮູ້ວ່າ ເວທີການສົນທະນານີ້ແມ່ນສາມາດຊ່ວຍໃນການເຮັດວຽກຂອງພວກເຂົາ.<br>– ບອກໃຫ້ຜູ້ເຂົ້າຮ່ວມຮູ້ວ່າການສົນທະນາຈະຊ່ວຍໃຫ້ເຂົາເຈົ້າແລກປ່ຽນ ແລະ ພັດທະນາຄວາມຮູ້ ແລະ ທັກສະ ໃນການຊ່ວຍເຫຼືອໃຫ້ເດັກປອດໄພຈາກການລ່ວງລະເມີດທາງເພດ.<br>– ອະທິບາຍວ່າ ເວທີສົນທະນາ ຍັງເປີດໂອກາດໃຫ້ພວກເຂົາເຮັດວຽກຮ່ວມກັນໃຫ້ດີຂຶ້ນ. | • ໃນໄລຍະການແນະນຳ, ຄູຝຶກຄວນຮັບຮູ້ແຕ່ລະຄົນ ແລະ ບັນທຶກຕົວແທນຂອງຂະແໜງຕ່າງໆທີ່ມີຢູ່ (ຕົວຢ່າງ: ຂະແໜງການສຶກສາ, ສະທາລະນະສຸກ, ກົດໝາຍ, ສາດສະໜາ, ອື່ນໆ).<br>• ມັນຈະເປັນການດີຖ້າທ່ານ ສາມາດສັງເກດວ່າ ຜູ້ເຂົ້າຮ່ວມທ່ານໃດ ຮູ້ຈັກກັນ ຫຼື ບໍ່ ແລະ ຜູ້ເຂົ້າຮ່ວມແຕ່ລະຄົນ ເຂົ້າໃຈກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ແລະ ຂອງຄົນອື່ນ ຫຼື ບໍ່. ຄວາມເຂົ້າໃຈທີ່ດີຮ່ວມກັນຈະຊ່ວຍໃຫ້ພວກເຂົາເຮັດວຽກຮ່ວມກັນ ໃນການປົກປ້ອງເດັກ. |
| **ແຜ່ນສະໄລ້ 5** ●<br><br> | **ຍ້ອນຫຍັງພວກເຮົາຈຶ່ງມາທີ່ນີ້ ?**<br>• ໃນຖານະທີ່ທ່ານເປັນຕົວແທນຂອງຊຸມຊົນ ແລະ ບາງທ່ານກໍເຮັດວຽກກ່ຽວກັບເດັກໂດຍກົງ, ທ່ານມີບົດບາດສຳຄັນທີ່ສຸດໃນການຊ່ວຍເຫຼືອໃຫ້ເດັກປອດໄພຈາກ ການລ່ວງລະເມີດທາງເພດ.<br>• ໂດຍຜ່ານຄວາມຮູ້ຂອງທ່ານນັ້ນ:<br>– ທ່ານຈະເປັນບຸກຄົນທຳອິດທີ່ຈະຮັບຮູ້ ແລະ ເບິ່ງສັນຍານເຕືອນໄພອອກວ່າວ່າເດັກກຳລັງຕົກຢູ່ໃນພາວະຄວາມສ່ຽງທີ່ເປັນອັນຕະລາຍຕໍ່ກັບການລ່ວງລະເມີດທາງເພດ.<br>– ທ່ານຈຳເປັນຕ້ອງໄດ້ສອບຖາມ ແລະ ລາຍງານຕໍ່ເມື່ອເຫັນວ່າຈຳເປັນ, ແລະ<br>– ທ່ານສາມາດໃຫ້ຂໍ້ມູນ ແລະ ຊ່ວຍສຶກສາຊຸມຊົນເພື່ອໃຫ້ເຂົາເຈົ້າ ເຂົ້າໃຈ ແລະ ພະຍາຍາມປົກປ້ອງບໍ່ໃຫ້ການລ່ວງລະເມີດເກີດຂຶ້ນແຕ່ຕົ້ນ.<br>• ໃນຖານະທີ່ທ່ານເປັນຕົວແທນຂອງຊຸມຊົນ, ທ່ານ 'ມີໜ້າທີ່ແບກຫາບ' ພ້ອມກັບພັນທະທີ່ຈະແຈ້ງ ທີ່ໄດ້ກຳນົດໄວ້ ໃນກົດໝາຍຂອງປະເທດ.<br>• ເຖິງແມ່ນວ່າທ່ານເອງເປັນຜູ້ທີ່ມີຄວາມຮູ້, ພວກເຮົາຮັບຮູ້ວ່າມັນເປັນເລື່ອງຍາກທີ່ຈະເວົ້າກ່ຽວກັບເລື່ອງເພດ. ບາງເທື່ອມື້ນີ້ອາດເປັນເທື່ອທຳອິດສຳລັບທ່ານທີ່ຈະເວົ້າກ່ຽວກັບເລື່ອງນີ້.<br>• ແຕ່ວ່າ, ເພື່ອເຮັດໃຫ້ລູກຫຼານຂອງພວກເຮົາປອດໄພ, ມັນຈຶ່ງສຳຄັນທີ່ພວກເຮົາຮູ້ກ່ຽວກັບບັນຫາດັ່ງກ່າວ ແລະ ຈຳເປັນຕ້ອງອອກມາ ເວົ້າກ່ຽວກັບການລ່ວງລະເມີດທາງເພດ. | ອີງໃສ່ **ບັດເອົາກັບບ້ານ (ການປ້ອງກັນເດັກໃຫ້ປອດໄພຈາກ ການລ່ວງລະເມີດທາງເພດ)**<br><br> |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | • ໂດຍການເຂົ້າຮ່ວມເວທີການສົນທະນານີ້ ທ່ານກໍໄດ້ປະກອບສ່ວນໃນການ ປົກປ້ອງເດັກຢູ່ໃນຊຸມຊົນຂອງທ່ານຈາກ ການລ່ວງລະເມີດທາງເພດເດັກແລ້ວ.<br>*ຂໍ້ສະເໜີ:*<br>• ຂ້າພະເຈົ້າຮູ້ວ່າທຸກໆທ່ານແມ່ນມີວຽກຫຼາຍ ແລະ ພວກເຮົາກໍມີເວລາພຽງແຕ່ໜ້ອຍດຽວຄືມື້ນີ້, ສະນັ້ນ ຂໍໃຫ້ທ່ານຕັ້ງຄ່າໂທລະສັບມືຖືເປັນມອດສຽງໄວ້ ແລະ ຖ້າມີໂທລະສັບທີ່ດ່ວນ ແລະ ຈຳເປັນຂໍໃຫ້ໄປລົມຢູ່ຂ້າງນອກ.<br>• ທຸກຄຳເຫັນທີ່ແຕ່ລະທ່ານປະກອບສ່ວນແມ່ນມີຄວາມໝາຍ.<br>• ຖ້າທ່ານບໍ່ເຂົ້າໃຈອັນໃດແມ່ນໃຫ້ຖາມໂລດ, ບໍ່ໃຫ້ອາຍ. ບາງເທື່ອຜູ້ອື່ນກໍອາດບໍ່ເຂົ້າໃຈຄືກັນ. ຖ້າວ່າທ່ານສະບາຍໃຈກວ່າ, ມາລົມກັບຂ້າພະເຈົ້າໂດຍກົງກໍໄດ້ຫຼັງຈາກ ເວທີການສົນທະນາ.<br>• ຖ້າທ່ານມີຂໍ້ມູນຮູ້ວ່າມີເດັກນ້ອຍກຳລັງຕົກຢູ່ໃນຄວາມສ່ຽງຕໍ່ການລ່ວງລະເມີດທາງເພດ, ຂໍໃຫ້ມາບອກຂ້າພະເຈົ້າຫຼັງຈາກ ເວທີການສົນທະນາ, ແລະ ພວກເຮົາຈະຫາວິທີຊ່ວຍເຫຼືອເຂົາເຈົ້າ. | |
| **ແຜ່ນສະໄລ້ 6** ●<br> | *ກິດຈະກຳ: ແບບທົດສອບກ່ອນຝຶກອົບຮົມຢູ່ໃນນີ້*<br>ບາງທ່ານກໍ່ອາດມີຄວາມເຂົ້າໃຈຕໍ່ກັບເລື່ອງການລ່ວງລະເມີດທາງເພດມາກ່ອນແລ້ວແຕ່ບາງທ່ານກໍ່ອາດເປັນຄວາມຮູ້ໃໝ່. ເພື່ອຮັບປະກັນວ່າພວກເຮົາໃຫ້ຂໍ້ມູນຂ່າວສານທີ່ເໝາະສົມ ແລະ ເປັນປະໂຫຍດທີ່ສຸດສຳລັບທ່ານ, ກ່ອນອື່ນໝົດພວກເຮົາຂໍຖາມບາງຄຳຖາມ.<br>ໃຫ້ຜູ້ເຂົ້າຮ່ວມເບິ່ງສຳເນົາ *ແບບຟອມທົດສອບເບື້ອງຕົ້ນ* ຂອງພວກເຂົາ ແລະ ໃຫ້ເວລາຜູ້ເຂົ້າຮ່ວມ 3-5 ນາທີປະກອບໃຫ້ແລ້ວ. ຫຼັງຈາກນັ້ນໃຫ້ເກັບແບບຟອມທົດສອບກັບຄືນ.<br>ອີງຕາມຜູ້ເຂົ້າຮ່ວມ, ຜູ້ອຳນວຍຄວາມສະດວກສາມາດດຳເນີນການທົດສອບຕອນຕົ້ນໃຫ້ເປັນກິດຈະກຳແບບໂຕ້ກັນໂດຍການໃຊ້ຂໍ້ແນະນຳອະທິບາຍ (ຖັນເບື້ອງຂວາ). | *ແບບທົດສອບຕອນຕົ້ນ* ຢູ່ **ເອກະສານຊ້ອນທ້າຍ 3.** ແບບຟອມທົດສອບຕອນຕົ້ນ ແມ່ນສ່ວນໜຶ່ງຂອງການປະເມີນຜົນກ່ອນການຝຶກອົບຮົມ. ຖ້າວ່າຕ້ອງການ, *ແບບທົດສອບຕອນຕົ້ນ ແລະ ຕອນທ້າຍແມ່ນ*ສາມາດດຳເນີນແບບໂຕ້ກັນກໍໄດ້.<br>*ແບບທົດສອບຕອນຕົ້ນ – ກິດຈະກຳເປັນທາງເລືອກແບບຕອບໂຕ້ກັນ*<br>1. ແຈກຢາຍ*ບັດທົດສອບຕອນຕົ້ນ ແລະ ຕອນທ້າຍໜຶ່ງຊຸດ* (**ເອກະສານຊ້ອນທ້າຍ 5**) ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ ແລະ ຂໍໃຫ້ຜູ້ເຂົ້າຮ່ວມຍົກບັດ 'ການໝາຍຕິກ' ຂຶ້ນຖ້າເຂົາເຈົ້າຕອບວ່າ 'ແມ່ນ', ຍົກບັດ 'ໝາຍໄຂ່ວ' ຂຶ້ນຖ້າວ່າຄຳຕອບຂອງເຂົາເຈົ້າແມ່ນ 'ບໍ່' ແລະ ບັດ 'ໝາຍຄຳຖາມ' ຖ້າວ່າຄຳຕອບຂອງເຂົາເຈົ້າແມ່ນ 'ບໍ່ຮູ້' ຕອບແຕ່ລະຄຳຖາມຢູ່ໃນ*ແບບທົດສອບຕອນຕົ້ນ*. ຜູ້ອຳນວຍຄວາມສະດວກ (ຫຼື ຜູ້ຊ່ວຍ) ຕ້ອງໄດ້ ບັນທຶກຢ່າງລະມັດລະວັງຈຳນວນ ການໝາຍເລືອກເອົາ, ການໝາຍໄຂ່ວ ແລະ ໝາຍຖາມ ສຳລັບແຕ່ລະຄຳຖາມຕາມແບບຢ່າງໃນ **ເອກະສານຊ້ອນທ້າຍ 6.** |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | | 2. ອີກທາງເລືອກໜຶ່ງທີ່ງ່າຍກ່ວາແມ່ນໃຫ້ແຍກຫ້ອງເປັນສາມສ່ວນຕາມ 'ການໝາຍເອົາ', 'ໝາຍໄຂວ່' ແລະ 'ໝາຍຖາມ'. ຂີດການໝາຍເອົາຢູ່ບ່ອນໜຶ່ງ, ໝາຍໄຂວ່ໃນບ່ອນໜຶ່ງຕ່າງຫາກ, ແລະ ໝາຍຖາມໃສ່ຫ້ອງທີສາມ. ບອກໃຫ້ຜູ້ເຂົ້າຮ່ວມຍ້າຍໄປຫາພາກສ່ວນຂອງຫ້ອງຕາມຄຳຕອບຂອງເຂົາວ່າ 'ແມ່ນ' (ການໝາຍຕິກ), 'ບໍ່' (ກາໄຂ່ວ) ຫຼື 'ບໍ່ຮູ້' (ໝາຍຖາມ). |
| **ການລ່ວງລະເມີດທາງເພດເດັກແມ່ນຫຍັງ?** | | |
| **ແຜ່ນສະໄລ້ 7** ●  | ເພື່ອໃຫ້ເຂົ້າໃຈຕໍ່ກັບ 'ການລ່ວງລະເມີດທາງເພດເດັກ', ພວກເຮົາຕ້ອງເຂົ້າໃຈວ່າ 'ການລ່ວງລະເມີດເດັກ' ແມ່ນຫຍັງ. | |
| **ແຜ່ນສະໄລ້ 8** ●  | • ການລ່ວງລະເມີດເດັກແມ່ນການກະທຳ (ຫຼື ບໍ່ແມ່ນການກະທຳ) ໃດໜຶ່ງທີ່ບໍ່ແມ່ນໂດຍບັງເອີນ ແລະ ເຮັດໃຫ້ເດັກບາດເຈັບ ຫຼື ເຮັດໃຫ້ເດັກຕົກຢູ່ໃນອັນຕະລາຍ.<br>• ການລ່ວງລະເມີດເດັກມີໂອກາດເຮັດໃຫ້ເກີດອັນຕະລາຍຕົວຈິງ ຕໍ່ ສຸຂະພາບ, ການດຳລົງຊີວິດ, ການພັດທະນາ ແລະ/ຫຼື ສັກສີຂອງເດັກ. | ອີງໃສ່ **ບັດເອົາກັບບ້ານ (ການລ່ວງລະເມີດເດັກແມ່ນຫຍັງ?)**<br>ຜູ້ອຳນວຍຄວາມສະດວກຄວນອ້າງອີງເຖິງນິຍາມ ແລະ ມາດຕາຕ່າງໆທີ່ກ່ຽວຂ້ອງຢູ່ໃນກົດໝາຍພາຍໃນປະເທດ ຕາມຄວາມເໝາະສົມ.  |
| **ພາບສະໄລ້ 9** ●  | ການລ່ວງລະເມີດເດັກສາມາດເຂົ້າໃຈໄດ້ໃນສີ່ຮູບແບບຫຼັກ, ເຖິງແມ່ນວ່າມັນຈະມີການຊໍ້າຊ້ອນກັນຢູ່ຄື:<br>*ການລ່ວງລະເມີດທາງດ້ານຮ່າງກາຍ*<br>• ການລ່ວງລະເມີດທາງດ້ານຮ່າງກາຍແມ່ນເວລາບຸກຄົນໃດໜຶ່ງຕັ້ງໃຈຂົ່ມຂູ່ ແລະ ກະທຳເຮັດໃຫ້ເດັກນ້ອຍໄດ້ຮັບບາດເຈັບ.<br>• ການກະທຳລວມມີ: ການຕີ, ການກັດຂີ້, ການຊົກ, ຈັບສັ່ນ, ເຕະ, ເອົາໄຟຈູດ, ເອົາມີດແຖບາດ, ບີບຄໍຕາຍ, ຈັບທົ່ງຂື້ນລົງ, ວາງຢາພິດ ຫຼື ບັງຄັບບໍ່ໃຫ້ເຄື່ອນຍ້າຍໄປມາໄດ້. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | *ການລ່ວງລະເມີດທາງດ້ານຈິດໃຈ*<br>• ການລ່ວງລະເມີດທາງດ້ານຈິດໃຈແມ່ນການກະທຳທີ່ເຮັດໃຫ້ມີຜົນຕໍ່ຄວາມຮູ້ສຶກທາງອາລົມຈິດຢ່າງໜັກໜ່ວງແລະເຮັດຢ່າງຕໍ່ເນື່ອງ.<br>• ການລ່ວງລະເມີດທາງດ້ານຈິດໃຈສົ່ງຜົນຕໍ່ກັບຄວາມໝັ້ນໃຈຂອງເດັກ,<br>• ການກະທຳຕ່າງໆອາດລວມມີ ຄື ການເອີ້ນຊື່ທີ່ເດັກບໍ່ມັກ, ການຂົ່ມຂູ່ເດັກ, ການເວົ້າເຢາະເຢີ້ຍ, ການຂັງເດັກໄວ້ຄົນດຽວ. ທຸກຮູບແບບຂອງການລ່ວງລະເມີດ ແມ່ນມີຜົນບໍ່ດີຕໍ່ກັບດ້ານຈິດໃຈຂອງເດັກ.<br>• ການລ່ວງລະເມີດເດັກທຸກຮູບແບບ ແມ່ນມີຜົນບໍ່ດີຕໍ່ຈິດໃຈຂອງເດັກ.<br>*ການປ່ອຍປະລະເລີຍເດັກ*<br>• ການປ່ອຍປະລະເລີຍເດັກ ແມ່ນ/ສິ່ງທີ່ຫຼົ້ມເຫຼວທີ່ຍິ່ງໃຫ່ຍຂອງການເບິ່ງແຍງ.<br>• ຕົວຢ່າງ: ການປົກປ້ອງເຂົາເຈົ້າໃຫ້ປອດໄພຈາກອັນຕະລາຍ ຫຼື ບໍ່ສາມາດໄດ້ຮັບການປິ່ນປົວທາງການແພດ ຫຼື ຄວາມຈຳເປັນຂັ້ນພື້ນຖານຂອງການເຕີບໂຕ ແລະ ການພັດທະນາຂອງເດັກ (ເຊັ່ນ: ອາຫານການກິນ ແລະ ທີ່ພັກເຊົາ).<br>*ການລ່ວງລະເມີດທາງເພດ*<br>• ການລ່ວງລະເມີດທາງເພດມັນແມ່ນການທີ່ຜູ້ໃດຜູ້ໜຶ່ງນຳໃຊ້ອຳນາດຂອງຕົນ ຫຼື ຫລອກລວງເອົາເດັກໄປມີຮ່ວມເພດ.<br>• ການລ່ວງລະເມີດທາງເພດ ລວມເອົາທຸກຮູບແບບຂອງການມີເພດສຳພັນທີ່ບໍ່ເຈດຕະນາ. ໃນນັ້ນລວມທັງການສຳພັດ ຫຼື ບໍ່ສຳພັດກໍໄດ້.<br>• ການລ່ວງລະເມີດທາງເພດເດັກລວມມີ:<br>– ສ້າງຮູບໂປ້ອານາຈານ ຫຼື ວີດີໂອໜັງເຊັກຕ່າງໆ,<br>– ບັງຄັບໃຫ້ເດັກເບິ່ງຮູບໂປ້ ຫຼື ມີເພດສຳພັນ ຫຼື<br>– ບັງຄັບໃຫ້ເດັກມີເພດສຳພັນ ຫຼື ເຂົ້າຮ່ວມພຶດຕິກຳທາງເພດ ກັບເດັກຄົນອື່ນ ຫຼື ຜູ້ໃຫຍ່ຄົນອື່ນ.<br>ມື້ນີ້ ພວກເຮົາຈະສົນທະນາ ເນັ້ນໃສ່ຫມວດຂອງການລ່ວງລະເມີດທາງເພດ. ແຕ່ວ່າ ພວກເຮົາຕ້ອງເຂົ້າໃຈວ່າທັງຫມົດສີ່ຫໝວດແມ່ນມີສວ່ນພົວພັນກັນ. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 10** ●<br> | • ບໍ່ມີສະຖິຕິທີ່ຊັດເຈນ ກ່ຽວກັບຕົວເລກຂອງເດັກທີ່ຖືກລ່ວງລະເມີດທາງເພດ.<br>• ຕົວເລກດັ່ງກ່າວຫາຍາກ ຍ້ອນວ່າຄົນບໍ່ມັກລາຍງານກໍລະນີທີ່ເກີດຂຶ້ນ ແລະ ສ່ວນຫຼາຍບໍ່ໄດ້ມີການນັບກໍລະນີຕ່າງໆທີ່ເກີດຂຶ້ນ.<br>• ແຕ່ຄາດຄະເນວ່າ ຈະມີຢູ່ຫຼາຍລ້ານກໍລະນີ.<br>• ເດັກເຫຼົ່ານີ້ ແມ່ນມາຈາກທຸກໆພື້ນຖານດ້ານເສດຖະກິດ-ສັງຄົມ, ທຸກອາຍຸ, ທຸກສາດສະໜາ ແລະ ວັດທະນະທຳ.<br>• ການລ່ວງລະເມີດເດັກບໍ່ແມ່ນບັນຫາສະເພາະພາກພື້ນນີ້. ບັນຫາເຫຼົ່ານີ້ແມ່ນເກີດຂຶ້ນຢູ່ທຸກໆປະເທດໃນໂລກ<br>• ມັນເປັນເລື່ອງທຳມະດາສຳລັບເດັກທີ່ໄດ້ຜ່ານປະສົບການຈາກການລ່ວງລະເມີດໃນຮູບແບບຕ່າງໆ- ບາງກໍລະນີການລ່ວງລະເມີດແມ່ນການແຍກເອົາເດັກອອກໄປຕ່າງຫາກ. ຕົວຢ່າງ: ພໍ່ແມ່ປ່ອຍປະລະເລີຍເດັກ ແລະ ເຮັດໃຫ້ເດັກກາຍເປັນເດັກຢູ່ຂ້າງຖະໜົນ ແລະ ໃນທີ່ສຸດກໍ່ກາຍເປັນຜູ້ເຄາະຮ້າຍທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ/ຫຼື ການລ່ວງລະເມີດທາງເພດ. | ໃນລະດັບພາກພື້ນ, ບົດລາຍງານການທົບທວນ ປີ 2012 ໂດຍ ອົງການຢູນິເຊັບ (UNICEF) ປະຈຳພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ພົບວ່າ:<br>• ອັດຕາການລ່ວງລະເມີດທາງຮ່າງກາຍຢ່າງຮຸນແຮງຢູ່ລະຫວ່າງ 9% ເຖິງປະມານ 25% ຂອງເດັກນ້ອຍໃນພາກພື້ນ.<br>• ລະຫວ່າງ 14% ຫາ 30% ຂອງທັງເດັກຊາຍ ແລະ ເດັກຍິງ ໄດ້ລາຍງານວ່າ ເຄີຍມີປະສົບການ ຖືກບັງຄັບໃຫ້ມີເພດສຳພັນຕະຫຼອດໄລຍະການມີຊີວິດຂອງພວກເຂົາ.<br>• ໄວຈະເລີນພັນ ແລະ ຜູ້ໃຫຍ່ ທີ່ເຄີຍຖືກລ່ວງລະເມີດທາງເພດ ແລະ/ຫຼື ທາງຮ່າງກາຍໃນໄວເດັກ ແມ່ນມີຄວາມຄິດຢາກ ຫຼື ພະຍາຍາມຂ້າຕົວຕາຍ 4 ເທົ່າຫຼາຍກວ່າເດັກທີ່ບໍ່ມີປະຫວັດການລ່ວງລະເມີດ.<br>(ແຫຼ່ງຂໍ້ມູນ: UNICEF, *ການກະທຳຜິດຕໍ່ເດັກ: ຄວາມແຜ່ຫຼາຍ, ກໍລະນີ ແລະ ຜົນທີ່ຕາມມາ ໃນພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ,* 2012) |
| **ແຜ່ນສະໄລ້ 11**<br> | ? *ຄຳຖາມເພື່ອທົບທວນຄືນ/ສົນທະນາ (ເປັນທາງເລືອກ):*<br>• ຖາມກຸ່ມວ່າເຄີຍໄດ້ເຫັນ ຫຼື ໄດ້ຍິນກ່ຽວກັບການລ່ວງລະເມີດທາງເພດເດັກທີ່ເກີດຂຶ້ນຢູ່ບ່ອນເຮັດວຽກ ໃນຄຸ້ມບ້ານ, ໃນຊຸມຊົນ ຫຼື ໃນສື່ຕ່າງໆບໍ.<br>• ສິ່ງສຳຄັນຕ້ອງຖາມຜູ້ເຂົ້າຮ່ວມເພື່ອໃຫ້ເຂົາເຈົ້າແລກປ່ຽນເລື່ອງລາວຕ່າງໆ ທີ່ເຂົາເຈົ້າເຄີຍພົບເຫັນຜ່ານມາແຕ່ ແນະນຳ ບໍ່ໃຫ້ເວົ້າຊື່ແຈ້ງ ແລະ ເປີດເຜີຍຂໍ້ມູນທີ່ເປັນການເສື່ອມເສຍຕໍ່ ຜູ້ທີ່ຖືກເຄາະຮ້າຍ ຫຼື ຜູ້ລ່ວງລະເມີດ<br>• ຈາກເລື່ອງເລົ່າຂອງຜູ້ເຂົ້າຮ່ວມ, ຍົກໃຫ້ເຫັນບາງຂໍ້ມູນເບື້ອງຕົ້ນ ກ່ຽວກັບ ສິ່ງຕ່າງໆທີ່ຜູ້ຕາງໜ້າຊຸມຊົນເຮັດຢູ່ແລ້ວ ເພື່ອປົກປ້ອງເດັກຂອງຕົນ ຈາກ ການລ່ວງລະເມີດທາງເພດ.<br>• ເພື່ອເນັ້ນໜັກໃຫ້ມັນສອດຄ່ອງກັບສະພາບຕົວຈິງຂອງທ້ອງຖິ່ນ, ຜູ້ອຳນວຍຄວາມສະດວກ ຄວນຍົກຕົວຢ່າງທີ່ເອົາຈາກສື່ຕ່າງໆໃນເລື່ອງທີ່ສະທ້ອນເຖິງການລ່ວງລະເມີດທາງເພດເດັກທີ່ເກີດຂຶ້ນຢູ່ພາຍໃນປະເທດ ຫຼື ໃນທ້ອງຖິ່ນ. ໂດຍສະເພາະແມ່ນຍົກຕົວຢ່າງໃນກໍລະນີສຶກສາ ທີ່ສາມາດສະທ້ອນບັນຫາຕ່າງໆ ທີ່ຊ່ວຍປ່ຽນຄວາມເຊື່ອແບບຜິດໆ ວ່າການລ່ວງລະເມີດທາງເພດເດັກເກີດຂຶ້ນໄດ້ແນວໃດ. ຕົວຢ່າງ ຜູ້ທີ່ລະເມີດເປັນຄົນທີ່ຖືກໄວ້ເນື້ອເຊື່ອໃຈ, ຜູ້ຕົກເປັນເຍື່ອແມ່ນເດັກຊາຍ. | • ຈຸດປະສົງຂອງພາກນີ້ ແມ່ນເພື່ອເລີ່ມການສົນທະນາກ່ຽວກັບຄວາມເຂົ້າໃຈຕ່າງໆທີ່ມີ ກ່ຽວກັບການລ່ວງລະເມີດທາງເພດເດັກ. ພາກນີ້ຍັງຈະຊ່ວຍໃຫ້ຜູ້ອຳນວຍຄວາມສະດວກ ເຂົ້າໃຈຕື່ມກ່ຽວກັບສະພາບໃນທ້ອງຖິ່ນ ແລະ ລະດັບຄວາມຮັບຮູ້ ພາຍໃນກຸ່ມຜູ້ເຂົ້າຮ່ວມ.<br>• ການສົນທະນາດັ່ງກ່າວ ບໍ່ຄວນເປັນລັກສະນະບັງຄັບ ຖ້າວ່າກຸ່ມຜູ້ເຂົ້າຮ່ວມຍັງບໍ່ພ້ອມທີ່ຈະເວົ້າ ຫຼື ຮູ້ສຶກອາຍ.<br>• ອະນຸຍາດໃຫ້ຜູ້ເຂົ້າຮ່ວມເລົ່າເລື່ອງປະມານ ສອງ ຫາ ສາມ ເລື່ອງ<br>• ຕັ້ງໃຈຟັງເລື່ອງທີ່ເລົ່າ ຖ້າວ່າເລື່ອງທີ່ເລົ່າ ຊີ້ໃຫ້ເຫັນວ່າ ໃນປະຈຸບັນເດັກແມ່ນກຳລັງຕົກຢູ່ໃນສະພາບຄວາມສ່ຽງ ຕໍ່ການລ່ວງລະເມີດ, ໃຫ້ແນະນຳກຸ່ມຜູ້ເຂົ້າຮ່ວມ ວ່າອັນນີ້ແມ່ນບັນຫາທີ່ຮ້າຍແຮງ ແລະ ທ່ານ ຈະໂອ້<br>ລົມກັບຜູ້ເຂົ້າຮ່ວມອີກຕ່າງຫາກ ໃນເວລາພັກຜ່ອນ (ຫຼືເວລາສະຫລຸບ ການສົນທະນາ) ເພື່ອໃຫ້ໄດ້ຂໍ້ມູນຕື່ມ ເພື່ອສົ່ງຕໍ່ກໍລະນີດັ່ງກ່າວ.<br>• ໃຫ້ບັນທຶກສະເພາະທຸກໆຂໍ້ມູນ ກ່ຽວກັບການກະທຳ ແລະ ການປະພຶດຂອງຜູ້ຕາງໜ້າຊຸມຊົນ ໃນການປົກປ້ອງເດັກໃນຊຸມຊົນຂອງຕົນ ຈາກ ການລ່ວງລະເມີດທາງເພດ. ສາມາດຍົກປະເດັນນີ້ ໃນເວລາທີ່ມີການສົນທະນາກ່ຽວກັບຄຳຕອບຕ່າງໆ. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
| --- | --- | --- |
| | • ມັນຍັງອາດຈະເປັນປະໂຫຍດ ຖ້າຜູ້ອຳນວຍຄວາມສະດວກສາມາດສະເໜີສະຖິຕິ ຫຼື ທ່າອ່ຽງພາຍໃນປະເທດ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ເຫັນພາບລວມ ວ່າຊຸ່ມຊົນ ຫຼື ເຈົ້າໜ້າທີ່ມີຄວາມເຫັນແນວໃດ ກ່ຽວກັບປະເດັນດັ່ງກ່າວນີ້ | |
| **ແຜ່ນສະໄລ້ 12** ●<br><br> | • ການລ່ວງລະເມີດທາງເພດເດັກ ມີຜົນກະທົບຢ່າງຮຸນແຮງຕໍ່ເດັກ. ສິ່ງດັ່ງກ່າວມີຜົນກະທົບທີ່ເປັນອັນຕະລາຍ ໃນໄລຍະສັ້ນ ແລະ ໄລຍະຍາວໄດ້.<br>• ຜົນກະທົບຕໍ່ເດັກລວມມີ:<br>– ທາງຮ່າງກາຍ (ບາດເຈັບ, ພະຍາດຕິດຕໍ່ທາງເພດສຳພັນ, ຕິດເຊື້ອ ທາງເພດສຳພັນ, ຕິດສິ່ງເສບຕິດ).<br>– ທາງຈິດໃຈ (ສຸຂະພາບຈິດ ແລະ ບັນຫາທາງດ້ານອາລົມລວມທັງ ຊຶມເສົ້າ, ມີຄວາມກັງວົນ, ການຂ້າຕົວຕາຍ, ທຳຮ້າຍຕົນເອງ).<br>– ກ່າວໂທດຜູ້ເຄາະຮ້າຍ ແທນທີ່ ທີ່ຈະກ່າວໂທດຜູ້ລ່ວງລະເມີດ.ບັນຫາທາງສັງຄົມ (ບັນຫາເລື່ອງຄວາມເຊື່ອໃຈ, ບໍ່ມີສະມາທິ ຫຼື ບໍ່ສາມາດສ້າງສາຍພົວພັນ, ບໍ່ສາມາດເຂົ້າສັງຄົມ ຫຼື ໄດ້ຮັບການຈ້າງງານ).<br>– ຜົນກະທົບໄລຍະຍາວລວມມີ: ການຖືກພູນໃຊ້ ຫຼື ມີ'ວຽກເຮັດ' ທີ່ບໍ່ເພິ່ງປາດຖະໜາ.<br>– ຜົນກະທົບສືບຕໍ່ຮຸ່ນຄົນຕໍ່ໄປ ຄື ຕໍ່ກັບເດັກທີ່ເກີດຈາກການພົວພັນທີ່ມີການລ່ວງລະເມີດ ຫຼື ຫຼັງຈາກການ ພົວພັນທີ່ມີການລະເມີດ.<br>• ຜົນກະທົບຂອງການລະເມີດ ຍັງແຜ່ລາມໄປຫາຄົນອ້ອມແອ້ມຜູ້ຖືກເຄາະຮ້າຍ ແລະ ກະທົບຕໍ່ຄອບຄົວ ແລະ ຊຸມຊົນໃນທົ່ວຮຸ່ນຄົນ.<br>• ຜົນກະທົບຕໍ່ເດັກລວມມີ:<br>– ການປະນາມຕໍ່ຄອບຄົວ.<br>– ການຢຽບຫຍາມ ຫຼື ປະຕິເສດຄອບຄົວຈາກຊຸມຊົນ.<br>– ທຳລາຍຊື່ສຽງຂອງຄອບຄົວ.<br>– ວັດທະນະທຳທີ່ມີຄວາມຢ້ານກົວ ແລະ ຄວາມບໍ່ເຊື່ອໃຈກັນ.<br>– ມີຄວາມຮັບຜິດຊອບທາງດ້ານການເງິນເພີ່ມຂຶ້ນ ເນື່ອງຈາກມີຄວາມຈຳເປັນ ໃນການເບິ່ງແຍງຜູ້ທີ່ເຄາະຮ້າຍຈາກການລ່ວງລະເມີດ.<br>– ການຖືເບົາຕໍ່ການລ່ວງລະເມີດ. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | • ຜົນກະທົບຕໍ່ເດັກລວມມີ:<br>– ຊື່ສຽງໃນທາງບໍ່ດີ.<br>– ສະພາບຂອງຄວາມຢ້ານກົວ.<br>– ການເພີ່ມຂຶ້ນຂອງບັນຫາທາງສັງຄົມ.<br>– ຜົນກະທົບທາງລົບຕໍ່ເສດຖະກິດ.<br>– ຊັກຈູງໃຫ້ຜູ້ລ່ວງລະເມີດອື່ນໆເຂົ້າໄປໃນຊຸມຊົນ.<br>– ເກີດປະກົດການທຫຍໍ້ທໍ້ທາງວັດທະນະທຳ ແລະ ປະເພນີ.<br>• ເດັກບໍ່ຄວນຖືກກ່າວໂທດ ສຳລັບເຫດການທີ່ຕົນຖືກລ່ວງລະເມີດ ຫຼື ສຳລັບຜົນກະທົບຕໍ່ຄອບຄົວ ແລະ ຊຸມຊົນຂອງຕົນ. ຕ້ອງຮັບປະກັນຕໍ່ເດັກທີ່ຖືກລ່ວງລະເມີດວ່າ ເຫດການທີ່ເກີດຂຶ້ນບໍ່ແມ່ນຄວາມຜິດຂອງເຂົາ. | |
| **ຜູ້ຕາງໜ້າຊຸມຊົນຕ້ອງຮູ້ຂໍ້ມູນໃດແດ່?** | | |
| **ແຜ່ນສະໄລ້ 13** ●<br><br> | • ພວກເຮົາຕ້ອງຮູ້ຫຍັງກ່ຽວກັບການລ່ວງລະເມີດທາງເພດເດັກ? (ເບິ່ງແຜ່ນສະໄລ້ຕໍ່ໄປ) | |
| **ແຜ່ນສະໄລ້ 14** ●<br> | **ໃຜແມ່ນຜູ້ເຄາະຮ້າຍ?**<br>• ການລ່ວງລະເມີດທາງເພດສາມາດເກີດຂຶ້ນໄດ້ກັບເດັກທຸກໆຄົນ ບໍ່ວ່າຈະມາຈາກພື້ນຖານແນວໃດກໍ່ຕາມ.<br>• ຜູ້ເຄາະຮ້າຍອາດເປັນເດັກຍິງ ແລະ ເດັກຊາຍ.<br>• ອີງຕາມສົນທິສັນຍາວ່າດ້ວຍສິດທິເດັກ, ເດັກທຸກຄົນອາຍຸຕໍ່າກວ່າ 18 ປີລົງມາ ຖືວ່າເປັນເດັກ. ອັນນີ້ໝາຍວ່າ ຜູ້ເຄາະຮ້າຍສາມາດຢູ່ໃນເກນອາຍຸລະຫວ່າງ 0 – 17 ປີ. ສະນັ້ນ ຜູ້ເຄາະຮ້າຍ ອາດເປັນເດັກນ້ອຍ ຫຼື ໄວລຸ້ນ<br>• ບາງເທື່ອເດັກທີ່ຖືກເຄາະຮ້າຍແມ່ນມາຈາກພື້ນຖານທີ່ຫຍຸ້ງຍາກ ພວກເຂົາອາດເປັນເດັກຢູ່ຂ້າງຖະໜົນ, ທຸກຍາກ, ບໍ່ໄດ້ເຂົ້າໂຮງຮຽນ, ມາຈາກຊຸມຊົນຊົນເຜົ່າສ່ວນນ້ອຍ, ຫຼື ຄອບຄົວແຕກແຍກກັນ. ສ່ວນໃຫຍ່ຜູ້ເຄາະຮ້າຍໄດ້ພົບພໍ້ຮູບແບບການລ່ວງລະເມີດອື່ນຢູ່ໃນບ້ານຂອງເຂົາເຈົ້າ ຫຼື ຕາມຖະໜົນຫົນທາງ.<br>• ແຕ່ວ່າ ບາງເທື່ອຜູ້ເຄາະຮ້າຍກໍ່ມາຈາກຄອບຄົວທີ່ມີຖານະພໍປານກາງ ຫຼື ຮັ່ງມີ. ພວກເຂົາອາດໄດ້ຮັບການແຊກແຊງຈາກແຮງກົດດັນພາຍນອກທາງດ້ານການບໍລິໂພກວັດຖຸນິຍົມ (ສ່ວນຫລາຍແມ່ນແຮງກົດດັນຈາກໝູ່ເພື່ອນ) ພວກເຂົາອາດຈະຮູ້ເທົ່າບໍ່ເຖິງການກ່ຽວກັບອັນຕະລາຍທີ່ກ່ຽວຂ້ອງກັບສະພາບການທີ່ພວກເຂົາພົບພໍ້ຢູ່. | • ຜູ້ອຳນວຍຄວາມສະດວກຄວນເກັບກຳ ແລະ ຍົກຕົວຢ່າງ ລັກສະນະຕ່າງໆຂອງຜູ້ເຄາະຮ້າຍໃນປະເທດຕົນ ເຊັ່ນ ອາຍຸ, ເພດ, ສະຖານທີ່, ອື່ນໆ.<br>• ຕົວຢ່າງຕ່າງໆຈາກສື່ (ໂດຍບໍ່ລະບຸຕົວຕົນຂອງຜູ້ເຄາະຮ້າຍ) ຈະຊ່ວຍໄດ້ໃນທີ່ນີ້. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | • ເດັກເພດທີສາມ ຫຼື ເດັກທີ່ກຳລັງຄົ້ນຫາເພດແທ້ຂອງຕົນເອງ ແມ່ນມີຄວາມສ່ຽງເພີ່ມຂຶ້ນ.<br>• ເດັກທີ່ພິການ (ຄວາມພິການທຸກໆຮູບແບບ) ແມ່ນຢູ່ໃນຄວາມສ່ຽງທີ່ເພີ່ມຂຶ້ນຕໍ່ການ ຖືກລ່ວງລະເມີດ ແລະ ຄວນໄດ້ຮັບການເບິ່ງແຍງເອົາໃຈໃສ່ເປັນພິເສດ ເພື່ອປົກປ້ອງເດັກເຫຼົ່ານັ້ນ. ອັນນີ້ລວມທັງ ການພິການທຸກປະເພດ ເຊັ່ນ ການພິການທາງຮ່າງກາຍ, ການພິການທາງດ້ານປະສາດສຳພັດ (ເຊັ່ນວ່າ ການໄດ້ຍິນ, ຄວາມບົກພ່ອງທາງດ້ານສາຍຕາ), ການພິການທາງດ້ານປັນຍາ ແລະ  ການພິການທາງຈິດ.<br>• ເດັກນ້ອຍຈະຖືກຕົກເປັນຜູ້ເຄາະຮ້າຍຢູ່ສະເໝີ. ຜູ້ໃຫຍ່ແມ່ນມີໜ້າທີ່ປົກປ້ອງເຂົາເຈົ້າໃຫ້ພົ້ນຈາກການທາລຸນທາງເພດ. ບາງຄັ້ງ ການກ່າວໂທດອາດເປັນໃນລັກສະນະທາງອ້ອມ. ຕ້ອງຮັບປະກັນຢ່າງຕັ້ງໜ້າ ວ່າເດັກທີ່ເຄີຍເປັນຜູ້ເຄາະຮ້າຍ ແມ່ນບໍ່ຖືກກ່າວໂທດສຳລັບສິ່ງທີ່ເກີດຂຶ້ນກັບເຂົາເຈົ້າ. | ໃຫ້ຄວາມເອົາໃຈໃສ່ຢ່າງຖີ່ຖ້ວນ ຕໍ່ການອະຄະຕິ ຫຼື ທັດສະນະຄະຕິຈຳແນກ ທີ່ອາດຈະແຜ່ຫຼາຍ ເພື່ອເນັ້ນໜັກກ່ຽວກັບ ຄວາມສະເໝີພາບສຳລັບເດັກທຸກຄົນ. ຜູ້ອຳນວຍຄວາມສະດວກ ຄວນເອົາໃຈໃສ່ຢ່າງເຕັມທີ ແລະ ລະມັດລະວັງ ບໍ່ໃຫ້ສະແດງ ທັດສະນະຄະຕິ ຫຼື ມຸມມອງທີ່ຈຳແນກໃດໜຶ່ງ ໂດຍທາງກົງ ແລະ ທາງອ້ອມ ລວມທັງ ຄວາມເຊື່ອທາງເພດ ແລະ ລັກສະນະທາງເພດຂອງຕົນ. ການຮັກສາທັດສະນະຄະຕິຈຳແນກ ໂດຍອີງໃສ່ເພດ, ຄວາມເຊື່ອທາງເພດ, ເຊື້ອຊາດ ແລະ ອື່ນໆ ອາດຈະບໍ່ສອດຄ່ອງກັບ ສິດທິສາກົນຂອງເດັກ ແລະ ຍັງອາດຈະນຳໄປສູ່ຄວາມອ່ອນແອ ທີ່ເຮັດໃຫ້ເດັກຕົກຢູ່ໃນສະພາບຄວາມສ່ຽງຂອງການລ່ວງລະເມີດ. |
| **ແຜ່ນສະໄລ້ 15** ●<br> | • ມີຄວາມເຂົ້າໃຈຜິດທີ່ວ່າເດັກຊາຍ ບໍ່ສາມາດຕົກເປັນຜູ້ເຄາະຮ້າຍຂອງການລ່ວງລະເມີດທາງເພດໄດ້.<br>• ດັ່ງນັ້ນ, ບາງຄັ້ງຊຸມຊົນແມ່ນໃຫ້ການປົກປ້ອງເດັກຍິງຫຼາຍກ່ວາເດັກຊາຍ.<br>• ອັນນີ້ສາມາດເປັນເຫດໃຫ້ເດັກຊາຍຖືກປ່ອຍປະໂດຍມີຄວາມສ່ຽງຫຼາຍຂຶ້ນຕໍ່ການຖືກລ່ວງລະເມີດ.<br>• ມັນຍັງເປັນການຍາກສຳລັບເດັກຊາຍ ທີ່ຈະບອກໃຫ້ຜູ້ອື່ນຮັບຮູ້ກ່ຽວກັບການລ່ວງລະເມີດ ຍ້ອນການປະນາມ ແລະ ຄວາມເຂົ້າໃຈຜິດທີ່ກ່ຽວຂ້ອງຂອງສັງຄົມ. | ຜົນການສຳຫຼວດ ສະແດງໃຫ້ເຫັນວ່າ ສ່ວນໃຫຍ່ຊຸມຊົນຕ່າງໆຈະບໍ່ເຊື່ອວ່າເດັກຊາຍ ສາມາດຕົກເປັນເປົ້າຂອງການລ່ວງລະເມີດທາງເພດ. ອັນນີ້ມັນສົ່ງຜົນທີ່ຕາມມາທີ່ຮ້າຍແຮງ ສຳລັບຄຸນນະພາບຊີວິດຂອງເດັກຊາຍ ແລະ ໝາຍຄວາມວ່າ ຊຸມຊົນຕ່າງໆຈະບໍ່ວາງກົນໄກໃນການປົກປ້ອງທີ່ຮັດກຸມຕໍ່ເດັກຊາຍ ຖ້າທຽບໃສ່ເດັກຍິງ.<br><br>ຕົວຢ່າງ, ໄດ້ພົບເຫັນວ່າ ຢູ່ໃນບາງປະເທດ, ໂດຍສະເພາະເດັກຊາຍແມ່ນມີຄວາມສ່ຽງຕໍ່ກັບການຄ້າມະນຸດເພື່ອຜົນປະໂຫຍດທາງເພດ ຍ້ອນວ່າ ຜູ້ປົກຄອງເລືອກທີ່ຈະໃຫ້ລູກຊາຍຂອງພວກເຂົາເຄື່ອນຍ້າຍແບບບໍ່ປອດໄພຫຼາຍກ່ວາ ລູກສາວຂອງພວກເຂົາ. |
| **ແຜ່ນສະໄລ້ 16** ●<br> | **ໃຜແມ່ນຜູ້ລ່ວງລະເມີດ?**<br>ຜູ້ລ່ວງລະເມີດອາດແມ່ນຜູ້ໃດຜູ້ໜຶ່ງກໍ່ເປັນໄດ້:<br>• ຜູ້ຊາຍ ຫຼື ຜູ້ຍິງ.<br>• ຜູ້ອຳນວຍຄວາມສະດວກສາມາດອະທິບາຍລະອຽດຕື່ມກ່ຽວກັບຂໍ້ມູນຈາກກໍລະນີສຶກສາໃນລະດັບທ້ອງຖິ່ນ/ຊາດ/ສາກົນ.<br>• ເພື່ອນບ້ານ, ໝູ່ເພື່ອນ, ຫຼື ບຸກຄົນທີ່ໄວ້ໃຈໄດ້ (ອາຈານ, ເຈົ້າໜ້າທີ່ຢູ່ສູນກິລາ, ແພດໝໍ, ອື່ນໆ) ຈົ່ງຄຳນຶງວ່າ, ເດັກສ່ວນຫຼາຍຖືກລ່ວງລະເມີດໂດຍບຸກຄົນທີ່ພວກເຂົາຮູ້ຈັກດີ.<br>• ຄົນແປກໜ້າ.<br>• ເດັກ ແລະ ໄວໜຸ່ມຄົນອື່ນ. ເປັນສິ່ງທີ່ສຳຄັນທີ່ຕ້ອງສັງເກດຢ່າງລະມັດລະວັງການລ່ວງລະເມີດທາງເພດທີ່ບາງເທື່ອແມ່ນກະທຳໂດຍເດັກຄົນອື່ນ, ຜູ້ທີ່ອາຍຸຫຼາຍກວ່າ. | ຜູ້ອຳນວຍຄວາມສະດວກສາມາດອະທິບາຍລະອຽດລົງເລິກກ່ຽວກັບຂໍ້ມູນຈາກກໍລະນີສຶກສາໃນລະດັບທ້ອງຖິ່ນ/ຊາດ/ສາກົນ. ຄວນນຳໃຊ້ກໍລະນີສຶກສາເພື່ອສະແດງຮູບພາບຜູ້ລ່ວງລະເມີດທາງເພດທີ່ຫຼາກຫຼາຍຜູ້ທີ່ເຄີຍກໍ່ຄະດີໃນປະເທດ.<br><br>ອີກເທື່ອໜຶ່ງ, ເປັນສິ່ງທີ່ສຳຄັນທີ່ຈະເນັ້ນໜັກທັດສະນະຄະຕິທີ່ມີຕໍ່ເພດທີ່ຕາຍຕົວຂອງຜູ້ລ່ວງລະເມີດ. ເຖິງວ່າກໍລະນີທີ່ຖືກລາຍງານສະແດງໃຫ້ເຫັນວ່າຜູ້ລ່ວງລະເມີດທາງເພດສ່ວນຫຼາຍແລ້ວຈະແມ່ນຜູ້ຊາຍ, ແຕ່ຜູ້ຍິງທີ່ລ່ວງລະເມີດທາງເພດເດັກກໍເພີ່ມຂຶ້ນຢູ່ເລື້ອຍໆ ແລະ ຜົນກະທົບທີ່ມີຕໍ່ເດັກກໍມີຄວາມຮຸນແຮງເທົ່າໆກັນກັບຜູ້ຊາຍ.<br><br>ຊີ້ໃຫ້ເຫັນວ່າຫຼາຍໆກໍລະນີຂອງການລ່ວງລະເມີດທາງເພດບໍ່ໄດ້ຖືກລາຍງານຍ້ອນເຫດຜົນຫຼາຍໆປະການ, ດັ່ງນັ້ນຈຶ່ງບໍ່ສາມາດມະໂນພາບບັນຫາໄດ້ຢ່າງຈະແຈ້ງ. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | • ບຸກຄົນຈາກຊຸມຊົນ, ປະເທດ, ມີອາຍຸ, ຈາກອາຊີບ ຫຼື ສາດສະໜາໃດກໍຕາມ.<br>• ຜູ້ລ່ວງລະເມີດທາງເພດສ່ວນຫຼາຍຈະແມ່ນຄົນໃນຊຸມຊົນທ້ອງຖິ່ນ.<br>ເຖິງແມ່ນວ່າຈະເປັນໄປບໍ່ໄດ້ທີ່ຈະບົ່ງບອກຜູ້ລ່ວງລະເມີດທາງເພດຈາກຮູບຮ່າງພາຍນອກ, ແຕ່ກໍເປັນໄປໄດ້ທີ່ຈະບົ່ງບອກຈາກພຶດຕິກຳທີ່ໜ້າສົງໃສທີ່ພວກເຂົາສະແດງອອກ. | |
| **ແຜ່ນສະໄລ້ 17** ●<br> | ຜູ້ລ່ວງລະເມີດດຳເນີນການແນວໃດ?<br>• ຜູ້ລ່ວງລະເມີດເຂົ້າຫາເດັກ ແລະ ລ່ວງລະເມີດທາງເພດດ້ວຍຫຼາຍວິທີການ.<br>• ຕາມປົກກະຕິ ຄົນມັກຄິດວ່າ ການຖືກລ່ວງລະເມີດທາງເພດມັກເກີດຂຶ້ນແບບບັງເອີນຍ້ອນມີຄົນແປກໜ້າເຂົ້າບຸກທຳລາຍ. ແທ້ຈິງແລ້ວ, ຜູ້ລ່ວງລະເມີດ ແລະ/ຫຼື ຜູ້ເຈລະຈາສ່ວນໃຫຍ່ຈະໃຊ້ເວລາສ້າງສາຍສຳພັນກັບເດັກ (ແລະບາງເທື່ອກັບຄອບຄົວພວກເຂົາ). | ອີງໃສ່ **ບັດເອົາກັບບ້ານ (ຜູ້ລ່ວງລະເມີດທາງເພດເຄື່ອນໄຫວແນວໃດ?)**<br><br>ຈາກການສຶກສາພຶດຕິກຳຂອງຜູ້ລ່ວງລະເມີດທາງເພດຜູ້ທີ່ໄດ້ຮັບການລົງໂທດຈາກສານ,ນັກຄົ້ນຄວ້າໄດ້ສາມາດເຫັນໄດ້ແຈ້ງ ວິທີການ ແລະ ຄວາມຄ້າຍຄືກັນໃນການລົງມືຂອງຜູ້ລ່ວງລະເມີດ. ຂໍ້ມູນນີ້ສ່ວນຫຼາຍອີງໃສ່ຂໍ້ມູນຈາກປະເທດທາງຕາເວັນຕົກ ແລະ/ຫຼື ຜູ້ຖືກດຳເນີນຄະດີທີ່ເປັນຊາວຕະເວັນຕົກ. ຈຳເປັນຕ້ອງມີການຄົ້ນຄວ້າເພີ່ມ ກ່ຽວກັບວິທີທີ່ຜູ້ຖືກດຳເນີນຄະດີການລ່ວງລະເມີດທາງເພດເດັກໃນອາຊີ. |
| **ແຜ່ນສະໄລ້ 18** ●<br> | • ຂັ້ນຕອນຂອງການສ້າງສາຍສຳພັນກັບເດັກ ແລະ/ຫຼື ຄອບຄົວຂອງພວກເຂົາເອີ້ນວ່າ "ຂັ້ນຕອນຂອງຜູ້ລ່ວງລະເມີດ" ແລະປະກອບມີຫຼາຍຂັ້ນຕອນ.<br>• ທຳອິດ, ຜູ້ລ່ວງລະເມີດຈະສັງເກດ ແລະຕັ້ງເດັກເປັນເປົ້າໝາຍ. ສ່ວນໃຫຍ່ພວກເຂົາ ເລັງໃສ່ເດັກທີ່ມີບັນຫາແລະມີຄວາມອ່ອນໄຫວງ່າຍ<br>• ເດັກທີ່ອ່ອນແອອາດຈະເປັນຜູ້ທີ່ບໍ່ສາມາດຈົ່ມວ່າ, ຢູ່ໂດດດ່ຽວ ຫຼື ບໍ່ຕິດຕໍ່ກັບຜູ້ໃຫຍ່ທີ່ພວກເຂົາໄວ້ໃຈ ຫຼື ພົວພັນກັບຊຸມຊົນ. ຕົວຢ່າງ, ບ້ານທີ່ມີພໍ່ ຫຼື ແມ່ທີ່ລ້ຽງລູກດ້ວຍໂຕຄົນດຽວແຕ່ມີລູກຫຼາຍຄົນ, ເດັກທີ່ບໍ່ໄດ້ອາໃສຢູ່ກັບຄອບຄົວ, ເດັກທີ່ມີບັນຫາກັບຊີວິດ, ເດັກທີ່ປະເຊີນກັບຄວາມຮຸນແຮງພາຍໃນຄອບຄົວ, ອື່ນໆ. | ໃນບາງປະເທດ "ຂັ້ນຕອນຂອງຜູ້ລ່ວງລະເມີດ" ແມ່ນການກະທຳທີ່ຜິດກົດໝາຍ ຍ້ອນເປັນທີ່ຮັບຮູ້ກັນວ່າມັນເປັນອັນຕະລາຍຕໍ່ເດັກ. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 19** ●<br> | • ຫຼັງຈາກນັ້ນ, ຜູ້ລ່ວງລະເມີດສ້າງຄວາມໄວ້ວາງໃຈກັບເດັກ ໂດຍການບອກເລົ່າສິ່ງທີ່ໜ້າສົນໃຈ, ໃຫ້ຄວາມສົນໃຈກັບພວກເຂົາຫຼາຍໆ, ໃຫ້ຂອງຂວັນ ແລະ ເປັນໝູ່ກັບພວກເຂົາ. ບາງຄັ້ງອາດມີການກາຍເປັນເພື່ອນກັບຄອບຄົວຂອງເດັກ<br>• ຕົວຢ່າງ, ຜູ້ລ່ວງລະເມີດອາດຈະຕີສະນິດເປັນໝູ່ກັບແມ່ທີ່ລ້ຽງລູກຜູ້ດຽວ ເພື່ອໃຫ້ໄດ້ຮັບຄວາມໄວ້ວາງໃຈຈາກລາວ ແລະ ຫຼັງຈາກນັ້ນກໍເຂົ້າຫາລູກລາວ ເພື່ອໄປລ່ວງລະເມີດເດັກ. ຊຶ່ງອາດມີທັງການຊ່ວຍເຫຼືອດ້ານການເງິນ ເພື່ອຊຸກຍູ້ຄອບຄົວ ຫຼື ອາໃສຢູ່ໃນຄອບຄົວ ຫຼື ໃຫ້ການຊ່ວຍເຫຼືອດ້ານການເງິນຕໍ່ເດັກເອງ (ເຊັ່ນ ຊ່ວຍຄ່າຮຽນ ແລະ ອື່ນໆ).<br>• ເກືອບໝົດທຸກກໍລະນີ, ຄົນຮ້າຍແມ່ນມີອຳນາດເໜືອບາງຢ່າງ ຍ້ອນການເສຍປຽບທາງດ້ານ ອາຍຸ, ຄວາມເປັນຜູ້ໃຫຍ່, ຄວາມເຂັ້ມແຂງທາງດ້ານກຳລັງ ແລະ ອຳນາດ. | |
| **ແຜ່ນສະໄລ້ 20** ●<br> | • ໃນໄລຍະທີ່ຜູ້ລ່ວງລະເມີດສ້າງສາຍສຳພັນກັບ ເດັກ, ພວກເຂົາຈະເລີ່ມສ້າງຄວາມລັບກັບເດັກ ເພື່ອຮັບປະກັນວ່າເດັກນັ້ນຈະບໍ່ເປີດເຜີຍເລື່ອງການລ່ວງລະເມີດ<br>• ສ່ວນຫຼາຍການຮັກສາຄວາມລັບຈະເປັນໃນຮູບແບບການໃຫ້ຄຳສັນຍາ, ການຂົ່ມຂູ່ ບາງເທື່ອຜູ້ລ່ວງລະເມີດເດັກເອີ້ນສິ່ງນີ້ວ່າ "ການພົວພັນພິເສດ" ກັບເດັກ. ເດັກຈະຖືກລ່ວງລະເມີດທາງດ້ານຈິດໃຈ ແລະ ຖືກຜູ້ລ່ວງລະເມີດບັງຄັບບັນຊາ.<br>• ຕົວຢ່າງ, ເດັກອາດຈະຮູ້ສຶກວ່າຜູ້ລ່ວງລະເມີດເປັນຄົນຜູ້ດຽວທີ່ເຂົ້າໃຈພວກເຂົາ ແລະ ເປັນຄົນທີ່ພວກເຂົາໄວ້ວາງໃຈໄດ້.<br>• ເດັກອາດຈະມີບັນຫາທີ່ພວກເຂົາຮູ້ສຶກວ່າຜູ້ໃຫຍ່ບໍ່ເຂົ້າໃຈພວກເຂົາ. ດັ່ງນັ້ນ, ເດັກຈຶ່ງຖືກລໍ້ລວງໄດ້ຢ່າງງ່າຍ ເມື່ອພວກເຂົາພົວພັນກັບຜູ້ໃຫຍ່ທີ່ບໍ່ເຂົ້າໃຈພວກເຂົາ. | |
| **ແຜ່ນສະໄລ້ 21** ●<br> | • ການໃຊ້ເວລາອາດແຕກຕ່າງກັນໄປ, ແຕ່ວ່າຜູ້ລ່ວງລະເມີດເດັກມັກຈະຮີບເລັ່ງໃຫ້ມີເພດສຳພັນໂດຍໄວ. ນີ້ອາດຈະລວມເຖິງການເອົາອຸປະກອນທາງເພດໃຫ້ເບິ່ງດັ່ງນັ້ນເພື່ອສ້າງຄວາມ "ລຶ້ງເຄີຍ" ຫຼື ໂອກາດທີ່ຈະຕົກໃຈ ຫຼື ເຄັ່ງຄຽດຈະມີໜ້ອຍ.<br>• ຕົວຢ່າງ, ຜູ້ລ່ວງລະເມີດອາດຈະເລີ່ມຈັບບາຍເດັກ ຫຼື ເອົາຮູບລໍ້ແຫຼມໃຫ້ເບິ່ງ. ອີກວິທີໜຶ່ງ, ຜູ້ລ່ວງລະເມີດອາດຈະເລີ່ມລົມກັບເດັກກ່ຽວກັບກິດຈະກຳທາງເພດ. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 22** ●   | • ຜູ້ລ່ວງລະເມີດຈະສືບຕໍ່ແຕະເນື້ອຕ້ອງຕົວຊຶ່ງພົວພັນກັບທາງເພດ ແລະ ພຶດຕິກຳການລ່ວງລະເມີດທາງເພດອື່ນໆ.<br>• ຈົ່ງຈື່ໄວ້ວ່າ ການລ່ວງລະເມີດທາງເພດເດັກບໍ່ໄດ້ໝາຍພຽງແຕ່ວ່າການຂົ່ມຂືນເທົ່ານັ້ນ. ມັນສາມາດເປັນກິດຈະກຳທາງເພດ ຊຶ່ງລວມທັງການຈັບບາຍ ຫຼື ບໍ່ມີການສຳພັດກັນເລີຍກໍໄດ້.<br>• ການລ່ວງລະເມີດອາດຈະເພີ່ມຄວາມຮຸນແຮງຂຶ້ນເລື້ອຍໆ ໂດຍເລີ່ມຈາກສິ່ງນ້ອຍໆ.<br>• ໃນໄລຍະທີ່ເຫດການດັ່ງກ່າວເກີດຂຶ້ນນັ້ນ, ແມ່ນໂອກາດທີ່ຈະປົກປ້ອງການລ່ວງລະເມີດບໍ່ໃຫ້ຮຸນແຮງຂຶ້ນກວ່າເກົ່າຖ້າເຮົາສາມາດລະບຸການລະເມີດທີ່ຢູ່ໃນໄລຍະຕົ້ນ.<br>• ໃນຕອນນີ້, ເດັກອາດຈະຕົກຢູ່ໃນ "ຂັ້ນຕອນຂອງຜູ້ລ່ວງລະເມີດ" ໄປແລ້ວ ແລະ ຢູ່ພາຍໃຕ້ການຄວບຄຸມຂອງຜູ້ລ່ວງລະເມີດ.<br>• ຂັ້ນຕອນຂອງຜູ້ລ່ວງລະເມີດເກີດຂຶ້ນໃນຫລາຍຮູບແບບ ແລະ ສະຖານທີ່ (ຢູ່ເຮືອນ, ໂຮງຮຽນ, ສະໂມສອນກິລາ, ສວນສາທາລະນະ, ຫ້ອງຫຼິ້ນອິນເຕີແນັດ). | |
| **ແຜ່ນສະໄລ້ 23** ●  | **ການຈູ່ໂຈມທັນທີ**<br>• ຜູ້ລ່ວງລະເມີດທຸກຄົນຈະບໍ່ໃຊ້ວິທີການລ່ວງລະເມີດແບບຕາຍຕົວ.<br>• ວິທີການອື່ນໆຊຶ່ງຜູ້ລ່ວງລະເມີດສາມາດເຂົ້າຫາເດັກລວມດ້ວຍ ການຈູ່ໂຈມທັນທີ.<br>• ຜູ້ລ່ວງລະເມີດອາດຈູ່ໂຈມເດັກທັນທີເມື່ອມີໂອກາດ. | |
| **ແຜ່ນສະໄລ້ 24** ●  | **ການຊື້ຈ້າງ**<br>• ຜູ້ລ່ວງລະເມີດອາດຈະຈ້າງໃຫ້ຜູ້ໃດຜູ້ໜຶ່ງຫາເດັກໃຫ້ຕົນລ່ວງລະເມີດ. ຫຼັງຈາກນັ້ນ ຜູ້ຈັດຈ້າງຈະເລັ່ງເປົ້າໝາຍຫາເດັກ ຫຼື ຄອບຄົວຂອງເດັກນັ້ນ.<br>• ຕົວຢ່າງ: ຖ້າຜູ້ລ່ວງລະເມີດບໍ່ແມ່ນຄົນຈາກຊຸມຊົນດຽວກັບເດັກ, ພວກເຂົາອາດຈະໃຊ້ເຄືອຂ່າຍທ້ອງຖິ່ນ ຫຼື ຜູ້ຈັດຈ້າງເພື່ອຊ່ວຍໃຫ້ພວກເຂົາຊອກຫາເດັກ ແລະ ລ່ວງລະເມີດທາງເພດເດັກ. | ຜູ້ອຳນວຍຄວາມສະດວກສາມາດອະທິບາຍລະອຽດຕື່ມກ່ຽວກັບຂໍ້ມູນຈາກກໍລະນີສຶກສາໃນລະດັບທ້ອງຖິ່ນ/ຊາດ/ສາກົນ.<br>ບາງຕົວຢ່າງລວມມີ:<br>• ກໍລະນີທີ່ລາຍງານກ່ຽວກັບລົດແທັກຊີທ້ອງຖິ່ນ ຫຼື ຜູ້ຂັບລົດໂດຍສານທີ່ພາຜູ້ລ່ວງລະເມີດໄປສະຖານທີ່ຕ່າງໆທີ່ເດັກຢູ່. ຫຼື ບາງບ່ອນ, ຜູ້ຂັບລົດໂດຍສານທ້ອງຖິ່ນພາເດັກມາຫາຜູ້ລ່ວງລະເມີດຕາມຄຳຂໍຂອງພວກເຂົາແລກກັບຄ່າຕອບແທນ.<br>• ມີການລາຍງານ ວ່າມີເຄືອຂ່າຍ ແລະ ການຄ້າມະນຸດ, ບ່ອນທີ່ເດັກຖືກຂົນສົ່ງພາຍໃນປະເທດ ຫຼື ໄປຕ່າງປະເທດເພື່ອນຳໄປຂາຍບໍລິການທາງເພດ.<br>• ມີຫຼາຍກໍລະນີທີ່ເດັກຜູ້ທີ່ເປັນຜູ້ເຄາະຮ້າຍຈາກການຖືກລ່ວງລະເມີດທາງເພດ ແນະນຳເດັກຄົນອື່ນໃຫ້ຜູ້ລ່ວງລະເມີດທາງເພດ. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 25** ●<br> | **ໂດຍຜ່ານການສໍ້ໂກງ ແລະ ການຫຼອກລວງ**<br>• ກ່ຽວກັບການຊື້ຈ້າງ, ຜູ້ລ່ວງລະເມີດ ຫຼື ຜູ້ຊື້ຈ້າງອາດຈະຫຼອກລວງ ຫຼື ສໍ້ໂກງເດັກ ຫຼື ຄອບຄົວຂອງພວກເຂົາ. ເດັກ ຫຼື ຄອບຄົວທີ່ຕົກຢູ່ໃນສະພາບຄວາມຫຍຸ້ງຍາກ ຍິ່ງມີຄວາມສ່ຽງທີ່ຈະຖືກຫຼອກລວງ ຫຼື ສໍ້ໂກງ.<br>**ໂດຍຜ່ານການຂົ່ມຂູ່**<br>• ນີ້ອາດຈະກ່ຽວກັບວິທີການຕ່າງໆທີ່ກ່າວໄວ້ຂ້າງເທິງ, ແຕ່ກໍຍັງອາດມີ ການທັກຫຼັງ, ການຂົ່ມຂູ່ ແລະ ການລ່ວງລະເມີດຮູບແບບອື່ນໆ. | |
| **ແຜ່ນສະໄລ້ 26** ●<br> | **ມີໃຜແດ່ທີ່ມີສ່ວນຮ່ວມ?**<br>• ເມື່ອພວກເຮົາເບິ່ງວິທີການເຄື່ອນໄຫວຕ່າງໆຂອງຜູ້ລ່ວງລະເມີດ, ພວກເຮົາເຮັດໄດ້ແຈ້ງວ່າສ່ວນຫຼາຍຜູ້ລ່ວງລະເມີດບໍ່ໄດ້ເຄື່ອນໄຫວຜູ້ດຽວ.<br>• ຜູ້ລ່ວງລະເມີດອາດຈະໄດ້ຮັບການຊ່ວຍເຫຼືອ ຫຼື ການສະໜັບສະໜູນໂດຍບຸກຄົນອື່ນ ເພື່ອຊ່ວຍໃຫ້ລາວເຂົ້າເຖິງເດັກ ແລະ ລົງມືລ່ວງລະເມີດ.<br>• ບຸກຄົນເຫຼົ່ານີ້ລວມທັງຜູ້ຊ່ວຍ, ຜູ້ຊື້ຈ້າງ, ນາຍໜ້າ, ຜູ້ເຈລະຈາ, ຜູ້ອຳນວຍຄວາມສະດວກ ແລະ ອື່ນໆ.<br>• ຕົວຢ່າງ, ໃນຫຼາຍໆກໍລະນີ ຜູ້ກະທຳຜິດຜູ້ຊາຍຈະໃຊ້ "ແຟນ" ຂອງລາວຊ່ວຍຊື້ຈ້າງ ແລະ ຫລອກລວງເດັກ. ເດັກມັກເຊື່ອຜູ້ຍິງຫຼາຍກວ່າ. ມີຫຼາຍກໍລະນີທີ່ຜູ້ຍິງເປັນຜູ້ຊ່ວຍເຫຼືອຜູ້ກະທຳຜິດຊາຍ ໃນການລ່ວງລະເມີດເດັກ. ຕົວຢ່າງ: ໃນຖານະໝູ່, ແຟນ, "ມາມາຊັງ" ຫຼື ຜູ້ສົ່ງເດັກ. | ຕາມຄວາມເໝາະສົມ, ຜູ້ອຳນວຍຄວາມສະດວກສາມາດ ດຶງຄວາມສົນໃຈຂອງຜູ້ເຂົ້າຮ່ວມໃຫ້ມາສົນໃຈກ່ຽວກັບ ແນວໂນ້ມໃນການແຍກເດັກອອກຈາກຄອບຄົວເພື່ອໄປຢູ່ທີ່ສະຖາບັນ ຫຼື "ບ້ານພັກເດັກກຳພ້າ" ຕ່າງໆ. ໃນບາງກໍລະນີ, ພໍ່ແມ່ ແລະ ຄອບຄົວໄດ້ຍິນຍອມເຊື່ອ ແລະ/ ຫຼື ຕົກລົງເຫັນດີທີ່ຈະສົ່ງລູກຂອງພວກເຂົາໄປຢູ່ "ບ້ານພັກເດັກກຳພ້າ" ຫຼື ສະຖາບັນຕ່າງໆທີ່ໃຫ້ໂອກາດ ແລະ ການສຶກສາທີ່ດີກວ່າ. ໂດຍຄິດວ່າພວກເຂົາຈະໃຫ້ຊີວິດຕໍ່ລູກທີ່ດີກວ່າ, ພໍ່ແມ່ເຫັນດີທີ່ຈະສົ່ງລູກອອກໄປຈາກສະພາບແວດລ້ອມທີ່ປອດໄພ ແລະ ໄປສູ່ສະພາບແວດລ້ອມທີ່ບໍ່ປອດໄພບ່ອນທີ່ພວກເຂົາອ່ອນແອ ແລະ ຖືກລ່ວງລະເມີດທາງເພດໄດ້. |
| **ແຜ່ນສະໄລ້ 27** ●<br> | **ສັນຍານອັນໃດທີ່ຊີ້ບອກວ່າເດັກອາດຈະມີຄວາມສ່ຽງ?**<br>ມີ ຫ້າສັນຍານຫຼັກໆ ທີ່ຊີ້ບອກວ່າເດັກອາດຈະອ່ອນແອ ຫຼື ໄດ້ຖືກລ່ວງລະເມີດທາງເພດ. | ອີງໃສ່ **ບັດເອົາກັບບ້ານ (ຂ້ອຍຄວນຈະສັງເກດອັນໃດແດ່?)**<br><br> |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 28** ●<br> | *1. ພຶດຕິກຳຂອງເດັກເອງ*<br><br>ສັງເກດຢ່າງໃກ້ຊິດຕໍ່ກັບພຶດຕິກຳຂອງເດັກ ມັນຈະມີສັນຍານເຕືອນໄພບອກໃຫ້ຮູ້ວ່າ ເດັກ ອາດມີການຖືກລ່ວງລະເມີດທາງເພດ.<br><br>ໃນຂະນະທີ່ອາການເຫຼົ່ານີ້ບໍ່ໄດ້ໝາຍວ່າເດັກຖືກລ່ວງລະເມີດ, ແຕ່ມັນອາດຈະບອກໃຫ້ເຮົາເອົາໃຈໃສ່ເພີ່ມຕື່ມຕໍ່ສະຖານະການຕໍ່ໄປນີ້:<br><br>• ອາລົມປັ່ນປ່ວນ, ແຍກຕົວອອກຈາກກຸ່ມ, ຊຶມເສົ້າ, ມັກໃຈຮ້າຍ ຫຼື ໃຊ້ຄວາມຮຸນແຮງ.<br>• ໜີອອກຈາກບ້ານ ຫຼື ຫາຍອອກໄປເປັນເວລາດົນ.<br>• ຜົນການຮຽນໃນໂຮງຮຽນປ່ຽນໄປ ຫຼື ມັກຂາດຮຽນໂດຍບໍ່ມີເຫດຜົນ.<br>• ມີເງິນ, ຂອງຂວັນ, ໂທລະສັບມືຖື ໂດຍບໍ່ຮູ້ວ່າໄດ້ມາແນວໃດ.<br>• ຕິດສານເສບຕິດ (ລວມທັງ ຕິດຢາ ແລະ ຕິດເຫຼົ້າ).<br>• ມີພຶດຕິກຳທາງເພດທີ່ບໍ່ເໝາະສົມກັບອາຍຸຂອງພວກເຂົາ.<br>• ເດັກທີ່ຖືວ່າເປັນ 'ເດັກກໍ່ບັນຫາ'. | ຈຸດສຳຄັນແມ່ນ ໃຫ້ສັງເກດການປ່ຽນແປງທາງພຶດຕິກຳ. ມັນອາດຈະປ່ຽນຈາກພຶດຕິກຳ "ດີ" ເຖິງ "ບໍ່ດີ" ສ່ວນຫຼາຍເດັກຜູ້ທີ່ເລີ່ມປະພຶດ 'ບໍ່ດີ' ມັກຖືກຕີຄວາມໝາຍວ່າເປັນ 'ເດັກກໍ່ບັນຫາ' ແທນທີ່ ທີ່ຈະເປັນຜູ້ຖືກເຄາະຮ້າຍ. ອັນນີ້ເຮັດໃຫ້ພວກເຂົາຍິ່ງສ່ຽງຕໍ່ການຖືກລະເມີດເລື້ອຍໆ ແລະ ສ່ວນຫຼາຍຈະບໍ່ມີຄົນເຊື່ອ ຄຳຕຳນິ ແລະ ການລາຍງານຂອງພວກ. ອັນນີ້ແມ່ນຄວາມຫຼົ້ມເຫຼວທີ່ຮ້າຍແຮງຂອງຄວາມຮັບຜິດຊອບຂອງພວກເຮົາທີ່ມີຕໍ່ພວກເຂົາ. |
| **ແຜ່ນສະໄລ້ 29** ●<br> | *2. ພຶດຕິກຳຂອງຄົນອື່ນ*<br><br>ຈົ່ງເຝົ້າສັງເກດເບິ່ງພຶດຕິກຳຂອງຜູ້ໃຫຍ່ທຸກຄົນທີ່ຢູ່ອ້ອມຂ້າງເດັກ, ລວມທັງ ສະມາຊິກພາຍໃນຄອບຄົວ, ໝູ່ເພື່ອນ, ບຸກຄົນທີ່ເດັກໄວ້ວາງໃຈ ແລະ ຄົນແປກໜ້າ. ພຶດຕິກຳນີ້ລວມມີ:<br><br>• ໃຫ້ຄວາມສົນໃຈເປັນພິເສດ<br>• ໃຫ້ຂອງຂວັນ.<br>• ສະແດງຄວາມຮັກເປັນພິເສດ.<br>• ຂໍໃຊ້ເວລາສອງຕໍ່ສອງ.<br>• ມາຢ້ຽມຢາມຍາມຢູ່ຄົນດຽວ. | |
| **ແຜ່ນສະໄລ້ 30** ●<br> | *3. ອາການແລະສັນຍານບອກຈາກພາຍນອກ*<br><br>ອາການທີ່ບົ່ງບອກຈາກພາຍນອກອາດມີການໄດ້ຮັບບາດເຈັບ ຫຼື ສິ່ງຕ່າງໆທີ່ກ່ຽວຂ້ອງກັບການຕິດເຊື້ອ (ເຊັ່ນ: ພະຍາດຕິດຕໍ່ທາງເພດສຳພັນ). | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 31** ●  | *4. ການເປີດເຜີຍຂໍ້ມູນໂດຍເດັກ*<br>• ບາງເທື່ອເດັກຮູ້ສຶກບໍ່ສະບາຍໃຈທີ່ຈະລົມກັບພໍ່ແມ່ ຫຼື ຜູ້ເບິ່ງແຍງ, ພວກເຂົາຈຶ່ງເປີດເຜີຍຂໍ້ມູນກ່ຽວກັບການລ່ວງລະເມີດຕໍ່ກັບຜູ້ໃຫຍ່ຄົນອື່ນທີ່ພວກເຂົາໄວ້ໃຈ.<br>• ທ່ານເອງອາດຈະກາຍເປັນຄົນທີ່ເຂົາຈະເປີດເຜີຍໃນອະນາຄົດ.ມັນເປັນສິ່ງທີ່ສຳຄັນທີ່ທ່ານຕ້ອງຟັງ, ບໍ່ຄວນກ່າວໂທດພວກເຂົາ ແລະ ບອກເດັກວ່າທ່ານເຊື່ອລາວ.<br>• ເດັກອາດຈະເປີດເຜີຍຂໍ້ມູນຜ່ານວິທີອື່ນໆບໍ່ແມ່ນດ້ວຍວາຈາ ເຊັ່ນ: ການແຕ້ມຮູບ, ການລະບາຍສີ, ອື່ນໆ.<br>• ອີກຈັກໜ້ອຍ, ພວກເຮົາຈະສົນທະນາກ່ຽວກັບວິທີການຮັບມືກັບການເປີດເຜີຍ. | ມັນເປັນສິ່ງທີ່ສຳຄັນທີ່ຈະຈື່ໄວ້ວ່າ ຜູ້ລ່ວງລະເມີດທາງເພດເດັກບາງຄົນພະຍາຍາມຫາຂໍ້ອ້າງ ຫຼື ເຫດຜົນ ເພື່ອອະທິບາຍພຶດຕິກຳຂອງພວກເຂົາ ໂດຍການບອກຜູ້ຄົນວ່າ "ເປັນອຸບັດຕິເຫດ" ຫຼື ເດັກຕີຄວາມໝາຍສະຖານະການນັ້ນ "ບໍ່ຖືກ". ຜູ້ລ່ວງລະເມີດທາງເພດບາງຄົນເນັ້ນໜັກວ່າເດັກໄດ້ຕົວະບາງຢ່າງທີ່ເກີດຂຶ້ນໃນອະດີດ ຫຼື ເປັນ "ຄົນສ້າງບັນຫາ" ຫຼື ເປັນຄົນເກົ່ງດ້ານກິດຈະກຳທາງເພດ. ສິ່ງດັ່ງກ່າວນີ້ ແມ່ນພວກເຂົາພະຍາຍາມເຮັດໃຫ້ລັກສະນະ ຫຼື ຄວາມໜ້າເຊື່ອຖືຂອງເດັກທີ່ຖືກເຄາະຮ້າຍ ຫລຸດລົງ. ມັນເປັນສິ່ງທີ່ສຳຄັນທີ່ ຜູ້ຕາງໜ້າຊຸມຊົນຕ້ອງຮັບຮູ້ກົລະນີດັ່ງກ່າວນີ້ ແລະ ບໍ່ໃຫ້ປະລະຕໍ່ຄວາມຮັບຜິດຊອບຂອງພວກເຂົາທີ່ມີຕໍ່ເດັກ. ເຊັ່ນດຽວກັນ, ມັນເປັນສາຍເຫດທີ່ສຳຄັນທີ່ຈະຮັບເວົ້າຢ້ຳກັບເດັກວ່າທ່ານຍອມຮັບຟັງ ແລະ ເຊື່ອພວກເຂົາ. |
| **ແຜ່ນສະໄລ້ 32** ●  | *5. ສັນຍານເຕືອນໄພຂອງຊຸມຊົນ*<br>• ໃນຂະນະທີ່ເດັກສາມາດເປັນຜູ້ເຄາະຮ້າຍໃນການຖືກລ່ວງລະເມີດທາງເພດນັ້ນ, ມີບາງປັດໄຈທີ່ເຮັດໃຫ້ເດັກຍິ່ງມີຄວາມສ່ຽງຕໍ່ການຖືກລ່ວງລະເມີດ, ລວມທັງການລ່ວງລະເມີດທາງເພດ.<br>• ໃນຂັ້ນຊຸມຊົນ ພວກເຮົາຄວນສັງເກດເບິ່ງ:<br>– ເດັກຂໍທານ, ເດັກຂາຍເຄື່ອງຍ່ອຍຕາມທ້ອງຖະໜົນ, ເດັກບໍ່ເຂົ້າໂຮງຮຽນ.<br>– ເດັກຜູ້ທີ່ໜີອອກຈາກບ້ານ, ເດັກຜູ້ທີ່ຢູ່ຕາມທ້ອງຖະໜົນໂດຍບໍ່ມີການເບິ່ງແຍງຈາກພໍ່ແມ່.<br>– ເດັກຜູ້ທີ່ຢູ່ໃນຄອບຄົວທີ່ອ່ອນແອ (ຄອບຄົວຂອງຊົນເຜົ່າກຸ່ມນ້ອຍ, ມີສະຖານະທາງເສດຖະກິດຕ່ຳ, ເປັນຜູ້ອົບພະຍົບພາຍໃນປະເທດ, ມີຄວາມຮຸນແຮງພາຍໃນຄອບຄົວ).<br>– ເດັກທີ່ຕິດຫຼິ້ນອິນເຕີເນັດ ແລະ ເກມ.<br>– ສະຖານທີ່ບັນເທີງ ແລະ ການບໍລິການການທ່ອງທ່ຽວທີ່ມີສ່ວນກ່ຽວຂ້ອງທາງກົງ ຫຼື ທາງອ້ອມກັບອຸດສະຫະກຳການຄ້າການບໍລິການທາງເພດ. | |
| **ສາຍພົວພັນລະຫວ່າງເຕັກໂນໂລຊີ ແລະ ການລ່ວງລະເມີດເດັກມີຄືແນວໃດ?** | | |
| **ແຜ່ນສະໄລ້ 33** ●  | ດີຈິຕອນ ເຕັກໂນໂລຊີ: ມີຄວາມໝາຍແນວໃດ?<br>• ແຕ່ລະມື້, ມີການພັດທະນາດ້ານເຕັກໂນໂລຊີທີ່ໃຫ້ໂອກາດພວກເຮົາຢ່າງໜ້າເຫຼືອເຊື່ອໃນການເຂົ້າເຖິງຂໍ້ມູນ ແລະ ການສື່ສານກັບຜູ້ຄົນຢູ່ທົ່ວມຸມໂລກ. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | • ຕົວຢ່າງ, ທຸກມື້ນີ້ຜູ້ຄົນບໍ່ໄດ້ໃຊ້ພຽງແຕ່ໂທລະສັບມືຖືເພື່ອລົມກັນເທົ່ານັ້ນ. ໂດຍການໃຊ້ໂທລະສັບມືຖື, ຜູ້ຄົນສາມາດສົ່ງຂໍ້ຄວາມ (ຕົວຢ່າງ: ສົ່ງ SMS), ລົມກັນຜ່ານລະບົບວິດີໂອ, ສົ່ງຮູບ ຫຼື ວິດີໂອໃຫ້ຄົນອື່ນ, ນຳໃຊ້ລະບົບນຳທາງ GPS (ຕົວຢ່າງ: ລະບົບແຜນທີ່), ໃຊ້ອິນເຕີເນັດ ແລະ ອື່ນໆອີກຫຼາຍຢ່າງ.<br>• ອິນເຕີເນັດກາຍເປັນສ່ວນໜຶ່ງທີ່ສຳຄັນໃນຊີວິດຫຼາຍໆຄົນ. ເວົ້າສັ້ນໆ ແມ່ນ ອິນເຕີເນັດເຮັດໃຫ້ຜູ້ຄົນເຂົ້າເຖິງ ຫຼື ກະຈາຍຂໍ້ມູນ ແລະ ສື່ສານ, ໂດຍຜ່ານເຄືອຂ່າຍຄອມພິວເຕີທົ່ວໂລກ.<br>• ຜູ້ຄົນສາມາດໃຊ້ອິນເຕີຢູ່ຄອມພິວເຕີ, ຢູ່ໂທລະສັບ ແລະ ໄອແພັດ, ແທັບເລັດ ຫຼື ອຸປະກອນອື່ນໆ. ເມື່ອຜູ້ຄົນໃຊ້ອິນເຕີເນັດ ຫຼື "ອອນໄລ" ຢູ່ນັ້ນ, ພວກເຂົາສາມາດເຮັດໄດ້ຫຼາຍຢ່າງ ລວມມີ: ການເຂົ້າຫາ ຫຼື ການເຜີຍແຜ່ຂໍ້ມູນ, ຮູບພາບ ແລະ ວິດີໂອ, ພາບ ແລະ ສົ່ງອີເມວ, ສົ່ງຂໍ້ຄວາມ ຫຼື ລົມກັນ, ສັງຄົມໃນລະບົບອອນໄລ (ຕົວຢ່າງ: ມີໝູ່ ແລະ ລົມກັນຜ່ານ ເຟດສບຸກ) ແລະ ຫຼິ້ນເກມ.<br>• ດັ່ງນັ້ນ, ເມື່ອພວກເຮົາເວົ້າເຖິງ 'ດິຈິຕອນເຕັກໂນໂລຍີ', ພວກເຮົາເວົ້າເຖິງເຄື່ອງມື, ເຄື່ອງຈັກ ຫຼື ລະບົບເຫຼົ່ານີ້, ລວມທັງເປັນຮູບເປັນຮ່າງ ແລະ ເປັນໄປແກມ. | |
| **ແຜ່ນສະໄລ້ 34** ●<br><br> | **ມີຄວາມສ່ຽງໃດທີ່ຈະມາຄຽງຄູ່ກັບເຕັກໂນໂລຊີໃໝ່?**<br>• ໃນຂະນະທີ່ ໃນສະພາບແວດລ້ອມທາງກາຍະພາບນັ້ນເຮັດໃຫ້ເດັກສາມາດພົວພັນກັບຜູ້ໃຫຍ່ໄດ້, ໂລກດິຈິຕອນແມ່ນສະພາບແວດລ້ອມອີກແບບທີ່ເດັກສາມາດຕິດຕໍ່ກັບຜູ້ຄົນຜູ້ທີ່ພວກເຂົາບໍ່ຮູ້ຈັກ, ຊຶ່ງລວມທັງເດັກ ແລະ ຜູ້ໃຫຍ່ຄົນອື່ນ.<br>• ດິຈິຕອນເຕັກໂນໂລຊີເລີ່ມຈະມີຄວາມສຳຄັນສຳລັບຄົນລຸ້ນໃໝ່ຂຶ້ນເລື້ອຍໆ. ເປັນສິ່ງທີ່ສຳຄັນທີ່ເດັກຈະຮັບຮູ້ກ່ຽວກັບເຕັກໂນໂລຊີເພື່ອກະກຽມພວກເຂົາໃນການນຳໃຊ້ເຕັກໂນໂລຊີໃນການເຮັດວຽກ ແລະ ການດຳລົງຊີວິດ ເວລາທີ່ພວກເຂົາກາຍເປັນຜູ້ໃຫຍ່. ດັ່ງນັ້ນການເຂົ້າໃຈກ່ຽວກັບຜົນດີ ແລະ ຄວາມສ່ຽງຕ່າງໆຂອງດິຈິຕອນເຕັກໂນໂລຊີຈຶ່ງສຳຄັນ.<br>• ດິຈິຕອນເຕັກໂນໂລຊີໃຫ້ໂອກາດທີ່ດີຫຼາຍຢ່າງ; ແຕ່ກັບທຸກໆ "ສະພາບແວດລ້ອມ" ນັ້ນ, ພວກເຮົາຕ້ອງຮັບປະກັນວ່າເດັກຂອງພວກເຮົາ ຮູ້ວິທີການປະພຶດ, ຮູ້ຈັກຄວາມສ່ຽງ ແລະ ຮູ້ຈັກວິທີການປົກປ້ອງຕົວເອງຈາກຄວາມສ່ຽງ, ລວມທັງການລ່ວງລະເມີດທາງເພດເດັກ. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | *ຄຳຖາມເພື່ອຄິດສະທ້ອນຄືນ/ສົນທະນາ (ເປັນທາງເລືອກ):*<br>• ໃຫ້ຜູ້ເຂົ້າຮ່ວມ ຄິດກ່ຽວກັບຄວາມສ່ຽງທີ່ອາດຈະເປັນໄປໄດ້ຕໍ່ຄວາມປອດໄພຂອງເດັກຈາກການນຳໃຊ້ດິຈິຕອນເຕັກໂນໂລຊີ. | ຄຳຕອບທີ່ເປັນໄປໄດ້ ຕໍ່ຄຳຖາມ ກ່ຽວກັບຄວາມສ່ຽງຈາກດິຈິຕອນເຕັກໂນໂລຊີລວມມີ:<br>• ເມື່ອພວກເຮົາແລກປ່ຽນຂໍ້ມູນ/ຮູບພາບໃນອິນເຕີເນັດ, ພວກເຮົາບໍ່ສາມາດລຶບມັນອອກໄດ້.<br>• ເດັກອາດຈະແລກປ່ຽນຂໍ້ມູນສ່ວນຕົວຂອງຕົນໃຫ້ກັບຄົນແປກໜ້າໂດຍຜ່ານດິຈິຕອນ ເຕັກໂນໂລຊີ.<br>• ເດັກອາດຈະເປັນໝູ່ກັບຄົນທີ່ພວກເຂົາບໍ່ຮູ້ຈັກໂດຍຜ່ານດິຈິຕອນ ເຕັກໂນໂລຊີ, ແລະ ນັດພົບພວກເຂົາ.<br>• ຜູ້ລ່ວງລະເມີດອາດຈະໃຊ້ດິຈິຕອນ ເຕັກໂນໂລຊີເພື່ອເຮັດໃຫ້ເດັກຕົກຢູ່ໃນຂັ້ນຕອນຂອງການລ່ວງລະເມີດ, ຜູ້ລ່ວງລະເມີດທີ່ເປັນຜູ້ໃຫຍ່ອາດສະແດງໂຕເປັນເດັກເພື່ອສ້າງສາຍສຳພັນກັບເດັກ ແລະ ຫຼັງຈາກນັ້ນຫຼອກລວງໃຫ້ເຂົາຕົກເປັນເຫຍື່ອ ແລະ ຮ້ອງຂໍການມີເພດສຳພັນກັບເດັກ.<br>• ການແລກປ່ຽນຮູບພາບທີ່ແຫຼມຜ່ານໃນດິຈິຕອນເຕັກໂນໂລຊີ.<br>• ຜູ້ລ່ວງລະເມີດສາມາດນຳໃຊ້ດິຈິຕອນເຕັກໂນໂລຊີເພື່ອລະບຸບ່ອນຢູ່ ແລະ ລາຍລະອຽດສ່ວນຕົວຂອງເດັກ.<br>• ຜູ້ລ່ວງລະເມີດນຳໃຊ້ດິຈິຕອນ ເຕັກໂນໂລຊີເພື່ອຕິດຕໍ່ ແລະ ນັດພົບກັບຜູ້ເຄາະຮ້າຍ.<br>• ຜູ້ລ່ວງລະເມີດໃຊ້ເກມອອນໄລເພື່ອຫາເດັກເປົ້າໝາຍແລ້ວ ສ້າງການຕິດຕໍ່ເພື່ອການລ່ວງລະເມີດທາງເພດ. |
| **ແຜ່ນສະໄລ້ 35** ●<br><br> | **ຜູ້ໃຫຍ່ສາມາດຮັບມືຕໍ່ຄວາມສ່ຽງຈາກເຕັກໂນໂລຊີໃໝ່ໆຄືແນວໃດ?**<br>• ຜູ້ໃຫຍ່ຫຼາຍຄົນເວົ້າວ່າໂລກດິຈິຕອນເປັນໂລກທີ່ພັດທະນາໄປໄວຫຼາຍ ແລະ ພວກເຂົາບໍ່ສາມາດນຳທັນ.<br>• ຜູ້ໃຫຍ່ມີບາງວິທີການລຽບງ່າຍເພື່ອເຮັດໃຫ້ເດັກປອດໄພເມື່ອພວກເຂົາໃຊ້ເຕັກໂນໂລຊີເຊັ່ນ: ຄອມພິວເຕີ, ແທັບເລັດ, ແລະ/ຫຼື ໂທລະສັບມືຖື.<br>• ຊ່ວຍເດັກໃຫ້ເຂົ້າໃຈວ່າ ມີວິທີການເພື່ອຮັກສາຄວາມປອດໄພເວລາສື່ສານຜ່ານດິຈິຕອນເຕັກໂນໂລຊີ ທີ່ຄ້າຍຄືກັບ ເວລາເຮົາລົມກັນໜ້າຕໍ່ໜ້າ. ຕົວຢ່າງ:<br>– ແນະນຳເດັກບໍ່ໃຫ້ແລກປ່ຽນຂໍ້ມູນສ່ວນຕົວຂອງຕົນເອງ (ເຊັ່ນ ເບີໂທລະສັບ, ທີ່ຢູ່, ຊື່ໂຮງຮຽນ: ອື່ນໆ) ຫຼື ຮູບຂອງຕົນເອງໂດຍຜ່ານ ດິຈິຕອນເຕັກໂນໂລຊີ.<br>– ທຸກໆຂໍ້ມູນສ່ວນຕົວອອນໄລຄວນຕັ້ງຄ່າຄວາມເປັນສ່ວນຕົວສູງທີ່ສຸດ ແລະ ຂໍ້ມູນໃດໆກໍບໍ່ຄວນໃຫ້ຄົນທົ່ວໄປເຂົ້າເຖິງໄດ້. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | – ສອນໃຫ້ເດັກຮູ້ກ່ຽວກັບ "ການລາຍງານອອນໄລ" ມີຫຼາຍເວັບໄຊ ແລະ ໂປແກມ (ຕົວຢ່າງ: ເຟສບຸກ, ທວິດເຕີ, ຢູທູບ, ອິນສຕຣາແກມ, ສະໄກພ) ທີ່ມີວິທີງ່າຍໆໃນການ "ລາຍງານ" ຜູ້ໃຊ້ທີ່ລ່ວງລະເມີດ ຫຼື ການລ່ວງລະເມີດເອກະສານຕ່າງໆ.<br>– ປູກລະດົມໃຫ້ເດັກບອກທ່ານຖ້າພວກເຂົາຮູ້ສຶກບໍ່ສະບາຍໃຈໃນການສື່ສານຜ່ານເຕັກໂນໂລຊີ.<br>– ເຕືອນເດັກວ່າພວກເຂົາຄວນຈະມີການຄວບຄຸມຂໍ້ມູນຂອງພວກເຂົາເອງ ແລະ ສິ່ງທີ່ເຂົາເຫັນທາງອອນໄລ.<br>• ຜູ້ໃຫຍ່ສາມາດດຳເນີນການໄດ້ເຊັ່ນ:<br>– ຕິດຕາມ ແລະ ຮັບຮູ້ສິ່ງທີ່ເດັກເຮັດຜ່ານດີຈິຕອນເຕັກໂນໂລຊີ.<br>– ຖາມເດັກກ່ຽວກັບເວັບໄຊ ແລະ ຫ້ອງແຊັດທີ່ພວກເຂົາເຂົ້າໄປ.<br>– ຈັດເວລາທີ່ເໝາະສົມເພື່ອໃຫ້ເດັກໃຊ້ດີຈິຕອນເຕັກໂນໂລຊີ. | ຖ້າມີການຕິດຕໍ່ເດັກຜ່ານດີຈິຕອນ ເຕັກໂນໂລຊີໂດຍບຸກຄົນທີ່ເຮັດໃຫ້ພວກເຂົາກັງວົນ ຫຼື ເສຍໃຈ, ທ່ານສາມາດລາຍງານໂດຍກົງກັບເວັບໄຊ ຫຼື ໂປຼແກມຕົ້ນຕໍທີ່ລິເລີ່ມການສື່ສານດັ່ງກ່າວ. ຕົວຢ່າງ:<br>• http://www.facebook.com/help/reportlinks<br>• https://support.twitter.com/forms/abusiveuser<br>• http://www.youtube.com/yt/policyandsafety/reporting.html<br>• http://help.instagram.com/165828726894770<br>• https://support.skype.com/en/faq/FA10001/how-do-i-report-abuse-by-someone-in-skype? |
| **ການພົວພັນລະຫວ່າງການທ່ອງທ່ຽວ ແລະ ການລ່ວງລະເມີດທາງເພດເດັກມີຫຍັງແດ່?** | | |
| **ແຜ່ນສະໄລ້ 36** ●<br><br> | • ການທ່ອງທ່ຽວມີການເພີ່ມຂຶ້ນທົ່ວໂລກ ແລະ ໃນພາກພື້ນນີ້.<br>• ການເຕີບໃຫຍ່ຂະຫຍາຍຕົວຂອງການທ່ອງທ່ຽວສົ່ງຜົນດີຕໍ່ປະເທດ ແລະ ຊຸມຊົນ.<br>• ນັກທ່ອງທ່ຽວສ່ວນໃຫຍ່ແມ່ນກຸ່ມຄົນທີ່ມີຄວາມຮັບຜິດຊອບ, ນັບຖືວັດທະນາທຳທ້ອງຖິ່ນ, ສະພາບແວດລ້ອມ, ໃຫ້ກຽດແລະ ເຄົາລົບນັບຖືກຸ່ມຄົນທີ່ດຳລົງຊີວິດໃນຂົງເຂດ ຫຼື ປະເທດນັ້ນ.<br>• ແຕ່ມັນກໍ ມີຄວາມສ່ຽງຈຳນວນໜຶ່ງຕໍ່ເດັກທີ່ເກີດຂຶ້ນຈາກນັກທ່ອງທ່ຽວທີ່ເພີ່ມຂຶ້ນ ແລະ ການພັດທະນາວຽກງານການທ່ອງທ່ຽວ. | |
| **ແຜ່ນສະໄລ້ 37**<br> | **?** *ຄຳຖາມເພື່ອທົບທວນຄືນ/ສົນທະນາ:*<br>• ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບຄວາມສ່ຽງທີ່ເປັນໄປໄດ້ຕໍ່ຄວາມປອດໄພຂອງເດັກຊຶ່ງມາຈາກການຂະຫຍາຍຕົວຂອງການທ່ອງທ່ຽວໃນຊຸມຊົນ. | ຄຳຕອບທີ່ເປັນໄປໄດ້ລວມມີ:<br>• ຄວາມແຕກຕ່າງລະຫວ່າງຜູ້ຄົນ ແລະ ວັດທະນາທຳທີ່ສາມາດນຳໄປສູ່ຄວາມຂັດແຍ່ງ, ການລ່ວງລະເມີດທາງອຳນາດ ແລະ/ຫຼື ເງິນຄຳ.<br>• ເດັກສາມາດໄດ້ຮັບອິດທິພົນທີ່ບໍ່ດີຈາກການຄ້າ.<br>• ເດັກອາດຈະເຄີຍຫາລາຍໄດ້ຈາກນັກທ່ອງທ່ຽວໂດຍການຂໍທານ ຫຼື ການຂາຍເຄື່ອງຕາມທ້ອງຖະໜົນ. ຍ້ອນພັກອາໄສ ຫຼື ເຮັດວຽກຕາມທ້ອງຖະໜົນ, ເດັກອາດສ່ຽງຕໍ່ການຖືກລ່ວງລະເມີດໄດ້. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | | • ນັກທ່ອງທ່ຽວອາດຈະຢ້ຽມຢາມສະຖານທີ່ ທີ່ຈຳກັດໄວ້ສະເພາະຜູ້ໃຫຍ່ທີ່ໄວ້ໃຈໄດ້, ເຊັ່ນ: 'ບ້ານລ້ຽງເດັກກຳພ້າ', ໂຮງຮຽນ, ບ້ານ, ແລະ ອື່ນໆ. ການປ່ອຍໃຫ້ຜູ້ໃຫຍ່ແປກໜ້າມີການຕິດຕໍ່ກັບເດັກອາດຈະເຮັດໃຫ້ເດັກສ່ຽງຕໍ່ການຖືກລ່ວງລະເມີດໄດ້.<br>• ການເພີ່ມຈຳນວນ'ສະຖານບັນເທີງຕອນຄ່ຳ' ຫຼື ສະຖານທີ່ຄ້າປະເວນີເພື່ອບໍລິການນັກທ່ອງທ່ຽວ. ເດັກອາດຈະຖືກຫຼອກລວງໄປ ຫຼື ຖືກພາໄປສະຖານທີ່ເຫຼົ່ານີ້.<br>• ຜູ້ປົກຄອງ ຫຼື ຜູ້ເບິ່ງແຍງອາດຈະເຫັນດີຕໍ່ຄຳສະເໜີຂອງນັກທ່ອງທ່ຽວຕ່າງປະເທດ ຜູ້ທີ່ສະເໜີໃຫ້ທີ່ພັກພາອາໃສ ຫຼື ໃຫ້ການສຶກສາ ຫຼື ພາພວກເຂົາອອກຈາກສະພາບແວດລ້ອມທີ່ປອດໄພ ເຮັດໃຫ້ພວກເຂົາສ່ຽງຕໍ່ການຖືກລ່ວງລະເມີດ. |
| **ແຜ່ນສະໄລ້ 38** ●<br><br> | • ຄົນຕ່າງປະເທດສ່ວນໜ້ອຍໃຊ້ການທ່ອງທ່ຽວເພື່ອເປັນໂອກາດໃນການລ່ວງລະເມີດທາງເພດເດັກ.<br>• ນັກເດີນທາງທີ່ສະແຫວງຫາການຮ່ວມເພດກັບເດັກແມ່ນກຸ່ມນັກທ່ອງທ່ຽວ ຄົນເດີນທາງ ຫຼື ຄົນຕ່າງປະເທດທີ່ພວກເຂົາຕັ້ງໃຈຢາກມີເພດສຳພັນກັບເດັກໃນປະເທດທີ່ພວກເຂົາໄປທ່ຽວ ຫຼື ດຳລົງຊີວິດຢູ່.<br>• ທ່າມກາງທີ່ອຸດສາຫະກຳທ່ອງທ່ຽວນຳເອົາຜົນປະໂຫຍດທີ່ດີຫຼາຍຢ່າງມາໃຫ້ປະເທດ ແລະ ຊຸມຊົນ, ມັນເປັນສິ່ງສຳຄັນທີ່ສຸດທີ່ພວກເຮົາຈະຕ້ອງຮັບຮູ້ຄວາມສ່ຽງໄພທີ່ອາດເກີດຂຶ້ນໄດ້ຕໍ່ເດັກ. ພວກເຮົາຄວນປົກປ້ອງເດັກຂອງພວກເຮົາໃຫ້ປອດໄພຈາກການລ່ວງລະເມີດຈາກຄົນຕ່າງປະເທດ ແລະ ຄົນທ້ອງຖິ່ນ.<br>• ຂໍ້ມູນທີ່ພວກເຮົາໄດ້ສະເໜີກ່ຽວກັບຜູ້ລ່ວງລະເມີດທາງເພດເດັກ ແມ່ນສາມາດນຳໃຊ້ກັບ ນັກທ່ອງທ່ຽວທີ່ກະທຳຜິດໃນການລ່ວງລະເມີດເພດເດັກ. | |
| **ແຜ່ນສະໄລ້ 39** ●<br><br> | • ດັ່ງທີ່ໄດ້ສົນທະນາກັນນັ້ນ, ຜູ້ລ່ວງລະເມີດທາງເພດເດັກເຄື່ອນໄຫວດ້ວຍຫຼາຍໆວິທີ. ອັນນີ້ກໍເຊັ່ນດຽວກັນກັບ ນັກທ່ອງທ່ຽວທີ່ກະທຳຜິດໃນການລ່ວງລະເມີດເພດເດັກ.<br>• ສຳລັບສະພາບຂອງການທ່ອງທ່ຽວໂດຍສະເພາະ:<br>– ຜູ້ລ່ວງລະເມີດບາງຄົນ ວາງແຜນລ່ວງໜ້າ ເພື່ອລ່ວງລະເມີດເດັກໃນສະຖານທີ່ສະເພາະໃດໜຶ່ງ.<br>– ຜູ້ລ່ວງລະເມີດບາງຄົນໃຊ້ໂອກາດໃນວັນພັກເພື່ອລ່ວງລະເມີດເດັກ.<br>– ຜູ້ລ່ວງລະເມີດບາງຄົນເດີນທາງໄປຕ່າງປະເທດບ່ອນທີ່ມີການລາຍງານວ່າ ມີເດັກໃຫ້ພວກເຂົາລ່ວງລະເມີດທາງເພດ. | ຜູ້ອຳນວຍຄວາມສະດວກສາມາດຊີ້ແຈງກ່ຽວກັບຂໍ້ມູນຈາກກໍລະນີສຶກສາໃນລະດັບທ້ອງຖິ່ນ, ຊາດ, ສາກົນ. ແລະ ຢ້ຳຕື່ມອີກວ່າໃນຊຸມຊົນໃດກໍຕາມສ່ວນໃຫຍ່ຜູ້ລ່ວງລະເມີດມັກຈະເປັນຄົນທ້ອງຖິ່ນ. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | – ຜູ້ລ່ວງລະເມີດບາງຄົນອາດຢ້ຽມຢາມປະເທດໃດໜຶ່ງ ແລະ ພັກຢູ່ເປັນເດືອນ ຫຼື ເປັນປີຕໍ່ຄັ້ງ. ໃນກໍລະນີນີ້, ບໍ່ຖືວ່າພວກເຂົາເປັນນັກທ່ອງທ່ຽວ ແຕ່ ພວກເຂົາເປັນຜູ້ພັກອາໄສຕ່າງປະເທດທີ່ມີບ້ານ ຫຼື ຫ້ອງພັກເປັນຂອງຕົນເອງຫຼາຍກວ່າ.<br>– ຜູ້ລ່ວງລະເມີດບາງຄົນ ນຳໃຊ້ເຕັກໂນໂລຊີດີຈີຕອນ ເພື່ອລ່ວງລະເມີດເດັກຢູ່ປະເທດອື່ນ (ຕົວຢ່າງ, ໂດຍນຳໃຊ້ ກ້ອງຂອງຄອມພິວເຕີ້ ຫຼື 'webcams').<br>– ຜູ້ລ່ວງລະເມີດບາງຄົນ ເຮັດວຽກເປັນອາສາສະໝັກ, ຄູສອນ, ຫຼື ທ່ານໝໍ ຢູ່ຕ່າງປະເທດ ແລະ ລະເມີດເດັກທີ່ພວກເຂົາໄດ້ພົບໃນວຽກຂອງພວກເຂົາຜ່ານງານການກຸສົນ, 'ສະຖານລ້ຽງເດັກກຳພ້າ', ໂຮງຮຽນ, ຄຣີນິກທາງການແພດ, ອື່ນໆ.<br>– ຜູ້ລະເມີດບາງຄົນຈະນຳໃຊ້ ຜູ້ຈັດຫາ ແລະ ເຄືອຂ່າຍທ້ອງຖິ່ນ ເພື່ອຊ່ວຍພວກເຂົາໃນການຊອກຫາ ແລະ ລະເມີດເດັກ. ດັ່ງທີ່ໄດ້ລະບຸ, ມີຄົນຫຼາຍປະເພດ ທີ່ອາດຈະຊ່ວຍຜູ້ລ່ວງລະເມີດໃນການເຂົ້າຫາ ແລະ ລ່ວງລະເມີດເດັກ. | |
| **ຜູ້ຕາງໜ້າຊຸມຊົນ ມີຄວາມຮັບຜິດຊອບຫຍັງແດ່ພາຍໃຕ້ກົດໝາຍ & ນະໂຍບາຍ?** | | |
| **ແຜ່ນສະໄລ້ 40** ●<br> | ໃນຖານະເປັນຜູ້ຕາງໜ້າຂອງຊຸມຊົນ, ທ່ານອາດມີໜ້າທີ່ເປັນ 'ຜູ້ຮັບພັນທະ' ພ້ອມກັບຄວາມຮັບຜິດຊອບທີ່ຊັດເຈນຕາມທີ່ໄດ້ກຳນົດໃນກົດໝາຍ ແລະ ນະໂຍບາຍຂອງປະເທດ. | |
| **ແຜ່ນສະໄລ້ 41** ●<br> | ອະທິບາຍໂຄງຮ່າງຫຍໍ້ ຂອງກົດໝາຍ ແລະ ໜ້າທີ່ຮັບຜິດຊອບທີ່ກ່ຽວຂ້ອງ ຂອງຜູ້ຕາງໜ້າຊຸມຊົນພາຍໃຕ້ກົດໝາຍ ແລະ ນະໂຍບາຍ/ຍຸດທະສາດຕ່າງໆ.<br>**?** *ຄຳຖາມເພື່ອຄິດສະທ້ອນຄືນ/ສົນທະນາ (ເປັນທາງເລືອກ):*<br>• ນະໂຍບາຍ ຫຼື ແຜນດຳເນີນງານແຫ່ງຊາດມີຜົນແນວໃດຕໍ່ ວຽກງານຂັ້ນຊຸມຊົນຂອງພວກເຮົາ?<br>• ຜົນດັ່ງກ່າວນີ້ ມີອິດທິພົນຕໍ່ວຽກງານໃນການປົກປ້ອງເດັກຈາກການລ່ວງລະເມີດທາງເພດແນວໃດ? | • ຖ້າເໝາະສົມ, ພາກນີ້ແມ່ນສາມາດນຳສະເໜີໂດຍຜູ້ຕາງໜ້າລັດຖະບານກໍໄດ້.<br>• ອີງຕາມສະພາບການຂອງຊຸມຊົນ, ຜູ້ອຳນວຍຄວາມສະດວກສາມາດອ້າງອີງເຖິງນະໂຍບາຍການທ່ອງທ່ຽວ ຫຼື ກອບວຽກທີ່ກ່ຽວຂ້ອງ. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ພວກເຮົາສາມາດເຮັດຫຍັງແດ່ເພື່ອ ປົກປ້ອງເດັກໃຫ້ດີກວ່າເກົ່າ?** | | |
| **ແຜ່ນສະໄລ້ 42**<br> | *ກິດຈະກຳ: ເດັກມີຄວາມປອດໄພແນວໃດໃນຊຸມຊົນ? (ເປັນທາງເລືອກສຳລັບກິດຈະກຳທີ່ໃຊ້ເວລາພິເສດ)*<br>• ໃຫ້ຜູ້ເຂົ້າຮ່ວມ ປະກອບແບບຟອມສອບຖາມໃນບັດເອົາກັບບ້ານ ໃຫ້ສຳເລັດ ແລະ ຄຳນວນເບິ່ງຄະແນນຂອງຕົນເອງ.<br>• ບອກໃຫ້ຜູ້ເຂົ້າຮ່ວມຍົກມືຂຶ້ນ ຖ້າວ່າພວກເຂົາມີຮອດ '7' ຄະແນນ. ຊົມເຊີຍຕົວແທນຂອງຊຸມຊົນທີ່ພະຍາຍາມປົກປ້ອງເດັກຂອງພວກເຂົາ. ຖາມພວກເຂົາບາງຄຳຖາມກ່ຽວກັບວິທີການການຈັດຕັ້ງປະຕິບັດການປົກປ້ອງເດັກ ແລະ ຜົນສຳເລັດທີ່ປະກົດຂຶ້ນມາ.<br>• ໃຫ້ນັກສຳມະນາທີ່ມີຄະແນນ 6 ຫຼື ຕ່ຳກວ່າ 6 ຍົກມືຂຶ້ນ. ອະທິບາຍວ່າ ພວກເຂົາຢູ່ໃນຕຳແໜ່ງທີ່ກຽມພ້ອມຈະເຄື່ອນໄຫວ ແລະ ປົກປ້ອງໃຫ້ເດັກປອດໄພຈາກການຕົກເປັນເຫຍື່ອຂອງການຖືກລ່ວງລະເມີດທາງເພດ<br>• ອະທິບາຍວ່ານັກສຳມະນາ ກ່ອນບາງຈຳນວນອາດຈະບໍ່ຮູ້ຄຳຕອບໄດ້ທັງໝົດ ແລະ ນີ້ໝາຍຄວາມວ່າພວກເຮົາຕ້ອງປັບປຸງແນວຄິດຊຸມຊົນໃຫ້ຈະແຈ້ງຂຶ້ນເພື່ອດຳເນີນການໃດໜຶ່ງໃນການປົກປ້ອງເດັກ. | ໂດຍອີງໃສ່ **ບັດເອົາກັບບ້ານ ('ເດັກມີຄວາມປອດໄພແນວໃດໃນຊຸມຊົນ?')**<br><br>• ກ່ອນການຝຶກອົບຮົມ, ຜູ້ປະສານງານຄວາມຮວບຮວມຄຳຕອບຕ່າງໆຈາກບົດສອບ. ນຳໃຊ້ຄຳຕອບດັ່ງກ່າວໃນການແນະນຳໃຫ້ຜູ້ຕາງໜ້າຊຸມຊົນ ເມື່ອພວກເຂົາກຳລັງພິຈາລະນາ ເຖິງ ວິທີການທີ່ເໝາະສົມໃນການສ້າງສະພາບແວດລ້ອມໃນການປົກປ້ອງ ເດັກ.<br>• ສັງເກດເບິ່ງລະດັບຄວາມຮັບຮູ້ ກ່ຽວກັບຄຳຖາມ. ຜົນການສັງເກດການດັ່ງກ່າວ ແມ່ນສາມາດລາຍງານໃນ ບົດລາຍງານ ຫຼັງການຝຶກອົບຮົມ (**ເອກະສານຊ້ອນທ້າຍ 9**). |
| **ແຜ່ນສະໄລ້ 43** ●<br> | • ໃນນາມຕົວແທນຊຸມຊົນ ພວກເຮົາຕ້ອງເປັນຜູ້ທີ່ມີຄວາມເອົາໃຈໃສ່ຊ່ວຍແກ້ໄຂບັນຫາການລ່ວງລະເມີດທາງເພດເດັກ ລວມທັງໃນຂະແໜງການທ່ອງທ່ຽວ.<br>• ວິທີການທີ່ຜູ້ຕາງໜ້າຊຸມຊົນສາມາດເຮັດເພື່ອປົກປ້ອງເດັກສາມາດຈັດເປັນ ສາມຂົງເຂດຄື:<br>1. ການສົນທະນາ ແລະ ການສື່ສານແບບເປີດເຜີຍ<br>2. ການປ້ອງກັນ<br>3. ການປົກປ້ອງ<br>• ພວກເຮົາຕ້ອງເຮັດວຽກ ແລະ ປະສານສົມທົບຮ່ວມກັນ ໃນແຕ່ລະຂົງເຂດດັ່ງກ່າວ.<br>• ພວກເຮົາມາເບິ່ງນຳກັນແຕ່ລະຂົງເຂດເຫຼົ່ານີ້ໂດຍລະອຽດຕື່ມ. | ອີງໃສ່**ບັດເອົາກັບບ້ານ (ພວກເຮົາຈະເຮັດແນວໃດໃຫ້ເດັກນ້ອຍໃນຊຸມຊົນມີຄວາມປອດໄພ?)**<br> |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 44** ●<br> | *1. ການສົນທະນາ ແລະ ການສື່ສານແບບເປີດເຜີຍ*<br>• ການບໍ່ເວົ້າກ່ຽວກັບ ບັນຫາການລ່ວງລະເມີດທາງເພດເດັກ ເປັນ ອຸປະສັກຕໍ່ການຮັກສາເດັກໃຫ້ປອດໄພ.<br>• ດັ່ງທີ່ພວກເຮົາຮູ້, ເດັກນ້ອຍ ແລະ ຜູ້ໃຫຍ່ບໍ່ມັກລາຍງານ ຫຼື ບອກວ່າເຂົາເຈົ້າຖືກລ່ວງລະເມີດ. ໃນກໍລະນີດັ່ງກ່າວນັ້ນ ຜູ້ກະທຳຜິດສືບຕໍ່ລ່ວງລະເມີດ ແລະ ຜູ້ເຄາະຮ້າຍ ກໍຄື ຊຸມຊົນ ສືບຕໍ່ໄດ້ຮັບຜົນກະທົບທີ່ໜັກໜ່ວງ.<br>• ການສົນທະນາ ແລະ ການສື່ສານແບບເປີດເຜີຍຈຳເປັນຕ້ອງດຳເນີນໃນສອງລະດັບ. | ຜູ້ອຳນວຍຄວາມສະດວກຄວນຄົ້ນຫາ ແລະ ແລກປ່ຽນຕົວຢ່າງຂອງທ້ອງຖິ່ນ ແລະ ພາຍໃນປະເທດກ່ຽວກັບການສົນທະນາ ແລະ ການສື່ສານແບບເປີດເຜີຍທີ່ຈະເໝາະສົມ/ກ່ຽວຂ້ອງທີ່ສຸດ ກັບຊຸມຊົນທີ່ກຳລັງດຳເນີນເວທີການສົນທະນາ. |
| **ແຜ່ນສະໄລ້ 45** ●<br> | • ທຳອິດ, ຊຸກຍູ້ຄວາມສຳພັນ ແລະ ການສື່ສານໂດຍກົງ ລະຫວ່າງ ເດັກນ້ອຍ ແລະ ພໍ່ແມ່/ຜູ້ເບິ່ງແຍງ.<br>• ເດັກນ້ອຍຍັງຄວນສາມາດລົມກັບຜູ້ໃຫຍ່ຄົນອື່ນທີ່ຕົນໄວ້ໃຈໄດ້ ຖ້າວ່າເຂົາເຈົ້າຮູ້ສຶກບໍ່ປອດໄພ.<br>• ຖ້າເຈົ້າໄດ້ມີໂອກາດເປັນຜູ້ໃຫຍ່ຄົນນັ້ນຍາມໃດກໍຕາມ, ສຳຄັນແມ່ນເຈົ້າ ຄວນຮັບຟັງ ແລະ ບໍ່ໃຫ້ກ່າວໂທດຖ້າເດັກມາລາຍງານນຳເຈົ້າກ່ຽວກັບການລ່ວງລະເມີດ. | |
| **ແຜ່ນສະໄລ້ 46** ●<br> | • ລະດັບຄວາມສຳຄັນທີສອງຂອງການສົນທະນາແບບເປີດເຜີຍຢູ່ໃນລະດັບຊຸມຊົນ.<br>• ໃນຖານະເປັນຕົວແທນຊຸມຊົນ, ພວກເຮົາມີບົດບາດທີ່ສຳຄັນ ເພື່ອຍົກສູງຈິດສຳນຶກໃນການຊຸກຍູ້ໃຫ້ມີການສົນທະນາ ແລະ ປຶກສາຫາລືແບບເປີດເຜີຍກັບເດັກ, ຄອບຄົວ, ຊຸມຊົນ ແລະ ຜ່ານສື່ຕ່າງໆ.<br>• ພວກເຮົາຊຸກຍູ້ໃຫ້ມີໂອກາດສຳລັບການສົນທະນາແບບເປີດເຜີຍກ່ຽວກັບ ການປົກປ້ອງເດັກຢູ່ໂຮງຮຽນ, ສະຖາບັນ ແລະ ສູນຊຸມຊົນຕ່າງໆ. ອັນນີ້ລວມທັງການປູກຈິດສຳນຶກ ແລະ ການສຶກສາອົບຮົມ ເດັກ ແລະ ໄວໜຸ່ມກ່ຽວກັບວິທີການທີ່ເຂົາເຈົ້າສາມາດປົກປ້ອງຕົນເອງຈາກການລ່ວງລະເມີດທາງເພດ.<br>• ວິທີການດັ່ງກ່າວ ໄດ້ຮັບການຢັ້ງຢືນວ່າເປັນວິທີການໂຄສະນາຊຸກຍູ້ໃຫ້ມີການປ່ຽນແປງທາງສັງຄົມ ແລະ ຫລຸດຜ່ອນການປະຕິບັດທີ່ເປັນອັນຕະລາຍຕໍ່ເດັກຂອງພວກເຮົາ.<br>• ການສົນທະນາ ແລະ ການສື່ສານແບບເປີດເຜີຍຊ່ວຍສົ່ງເສີມການປ່ຽນແປງທັດສະນະຄະຕິໃນລະດັບກ້ວາງຂວາງຂຶ້ນ. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 47**<br> | *ຕົວຢ່າງ ກ່ຽວກັບ ແບບພາກປະຕິບັດຕົວຈິງທີ່ດີ:*<br>ການປູກຈິດສຳນຶກສາໃທສາທາລະນະຊົນກ່ຽວກັບ ການປົກປ້ອງເດັກ. ສ່ວນໃຫຍ່ຈະເປັນໃນຮູບແບບ ຂອງການສຶກສາ ຜ່ານສື່ຕ່າງໆເປັນຫຼັກ (ເຊັ່ນ ວິທະຍຸ, ໂທລະພາບ, ໜັງສືພິມ) ແລະ ທາງອອນໄລ. ຕົວຢ່າງ ຂອງວິທີການທາງອອນໄລທີ່ໃຊ້ ແມ່ນມາຈາກອັງກິດ, ຊື່ງສູນປົກປ້ອງເດັກຈາກການຂູດຮີດ ແລະ ທາງອອນໄລ (Child Exploitation and Online Protection Centre) ໄດ້ສ້າງເວບໄຊ໌ຂື້ນມາເພື່ອ ໃຫ້ຂໍ້ມູນແກ່ເດັກ, ພໍ່ແມ່ ແລະ ຄູອາຈານ ກ່ຽວກັບວິທີການປົກປ້ອງເດັກໃຫ້ ປອດໄພ ໃນສະພາບແວດລ້ອມທາງອອນໄລ.<br>**?** *ຄຳຖາມເພື່ອຄິດສະທ້ອນຄືນ/ສົນທະນາ (ເປັນທາງເລືອກ):*<br>• ຕົວຢ່າງທີ່ດີຂອງການສົນທະນາ ແລະ ສື່ສານແບບ ເປີດເຜີຍທີ່ເກີດຂຶ້ນຢູ່ຊຸມຊົນ ຫຼື ປະເທດ ຂອງທ່ານ ມີຫຍັງແດ່?<br>• ໂອກາດອື່ນໆທີ່ສາມາດສານຕໍ່ຈາກຕົວຢ່າງເຫຼົ່ານີ້ ມີຄືແນວໃດ? | ຜູ້ອຳນວຍຄວາມສະດວກຄວນຮີບໂຮມຕົວຢ່າງຢູ່ ທ້ອງຖິ່ນ ແລະ ພາຍໃນປະເທດ ທີ່ເໝາະສົມຕໍ່ຊຸມຊົນ. ຕົວຢ່າງກ່ຽວກັບການສົນທະນາແບບເປີດເຜີຍອາດ ລວມມີ: ຄວາມປອດໄພເທິງທ້ອງຖະໜົນ (ເຊັ່ນ ຈຳເປັນຕ້ອງມີໃບຂັບຂີ່, ພວກເຮົາບອກເດັກວ່າຕ້ອງ ເຮັດແນວເພື່ອໃຫ້ຂ້າມທາງຢ່າງປອດໄພ), ນ້ຳຖ້ວມ ແລະ ການເຕືອນໄພກ່ຽວກັບສະພາບອາກາດ (ຊຸມຊົນເວົ້າ ແລະ ກະກຽມແນວໃດຕໍ່ສະພາບດັ່ງກ່າວ). |
| **ແຜ່ນສະໄລ້ 48** ●<br> | *2. ການປ້ອງກັນ*<br>• ການປ້ອງກັນດີກວ່າການແກ້ໄຂ.<br>• ຄວາມພະຍາຍາມທີ່ຕັ້ງໜ້າຂອງທ່ານ ໃນການປ້ອງ ກັນການລ່ວງລະເມີດທາງເພດເດັກ ແມ່ນສາມາດ ປົກປ້ອງເດັກຈາກຄວາມອັນຕະລາຍທີ່ຮ້າຍແຮງ ແລະ ຜົນກະທົບທີ່ເປັນອັນຕະລາຍຕະຫຼອດຊີວິດ.<br>• ຍຸດທະສາດໃນການປ້ອງກັນ ແມ່ນສາມາດນຳໃຊ້ໃນ ຫຼາກຫຼາຍສະພາບການ<br>• ຕົວຢ່າງ: ໂຮງຮຽນ, ສະຖານທີ່ລ້ຽງເດັກ, ເດີ່ນຫຼິ້ນ ແລະ ສະຖານທີ່ສາທາລະນະອື່ນໆ. | ຜູ້ອຳນວຍຄວາມສະດວກຄວນຄົ້ນຫາ ແລະ ແລກປ່ຽນ ຕົວຢ່າງຂອງທ້ອງຖິ່ນ ແລະ ພາຍໃນປະເທດ ກ່ຽວກັບການສົນທະນາ ແລະ ການສື່ສານແບບເປີດເຜີຍ ທີ່ຈະເໝາະສົມ/ກ່ຽວຂ້ອງທີ່ສຸດ ກັບຊຸມຊົນທີ່ກຳລັງດຳ ເນີນເວທີການສົນທະນາ. |
| **ແຜ່ນສະໄລ້ 49** ●<br> | • ຕົວຢ່າງຂອງຍຸດທະສາດການປ້ອງກັນ ຢູ່ໃນອົງການ ການຈັດຕັ້ງຕ່າງໆລວມມີ:<br>– ດຳເນີນການກວດກາ ປະຫວັດຄວາມເປັນມາ ຂອງຜູ້ເຮັດວຽກ ກັບເດັກນ້ອຍ, ເຊັ່ນ ຄູອາຈານ. ອັນນີ້ລວມທັງຄົນພາຍໃນປະເທດ ແລະ ຕ່າງປະເທດ.<br>– ລາຍງານ ແລະ ສືບຫາຂໍ້ສົງໃສຢ່າງຈິງຈັງ.<br>– ຈຳກັດການເຂົ້າຫາເດັກຂອງຄົນແປກໜ້າ.<br>– ຈຳກັດສະຖານທີ່ ທີ່ເດັກສາມາດຢູ່ກັບຜູ້ໃຫຍ່ ສອງຕໍ່ສອງ.<br>• ນະໂຍບາຍເຫຼົ່ານີ້ ແມ່ນສາມາດພັດທະນາຢ່າງເປັນ ທາງການ ສຳລັບ ອົງການຈັດຕັ້ງທ້ອງຖິ່ນທັງໝົດ. | |

<table>
<tr><th>ສະໄລ້</th><th>ຂໍ້ຄວາມສຳຄັນ</th><th>ຂໍ້ແນະນຳຊ່ວຍອະທິບາຍ</th></tr>
<tr><td>ແຜ່ນສະໄລ້ 50 ●<br></td><td>• ສະແດງໃຫ້ຮູ້ວ່າການລ່ວງລະເມີດທາງເພດເດັກ ໃນຊຸມຊົນ ແມ່ນເປັນທີ່ຍອມຮັບບໍ່ໄດ້. ຕົວຢ່າງ, ໃນກິດຈະກຳສັງຄົມ, ກອງປະຊຸມໃຫຍ່ ແລະ ຜ່ານການແຈ້ງການ ຕາມຄວາມເໝາະສົມ. ວິທີການດັ່ງກ່າວນັ້ນ ບໍ່ພຽງແຕ່ຈະຮັບປະກັນການສະກັດກັ້ນໃນຊຸມຊົນເທົ່ານັ້ນ, ແຕ່ຍັງມີຜົນຕໍ່ຜູ້ທີ່ອາດເປັນຜູ້ລ່ວງລະເມີດ.</td><td></td></tr>
<tr><td>ແຜ່ນສະໄລ້ 51 ●<br></td><td>• ອີກຕົວຢ່າງຂອງການປ້ອງກັນ ແມ່ນໂຄງການເຂົ້າຫາຊຸມຊົນກ່ອນ ເພື່ອຊ່ວຍເຫຼືອຄອບຄົວທີ່ອ່ອນແອ.<br>• ອັນນີ້ລວມເຖິງຂໍ້ສົງໄສທີ່ເກີດຂຶ້ນ ແລະ ການລາຍງານຕ່າງໆ ກ່ຽວກັບພຶດຕິກຳທີ່ບໍ່ເໝາະສົມ. ຖ້າໄດ້ຮັບມາດຕະການຢ່າງໄວວາ ຕໍ່ກັບເຫດການດັ່ງກ່າວ ແມ່ນຈະສາມາດປ້ອງກັນການລ່ວງລະເມີດທີ່ຈະເກີດຂຶ້ນຕໍ່ໄປ.</td><td></td></tr>
<tr><td>ແຜ່ນສະໄລ້ 52<br><br></td><td>ຕົວຢ່າງ ແບບພາກປະຕິບັດຕົວຈິງທີ່ດີ:<br>ຢູ່ຫຼາຍປະເທດ, ມັນເປັນພາກບັງຄັບສຳລັບບຸກຄົນທີ່ເຮັດວຽກ ຫຼື ອາສາສະໝັກ ເຮັດວຽກກ່ຽວກັບເດັກນ້ອຍ ທີ່ຕ້ອງຖືກ 'ຄັດເລືອກ' ຫຼື 'ກວດສອບ' ລ່ວງໜ້າ. ນາຍຈ້າງຈະກວດສອບກັບຕຳຫຼວດທ້ອງຖິ່ນ/ສູນກາງ ເພື່ອເບິ່ງວ່າ ຜູ້ທີ່ຈະເປັນລູກຈ້າງ ອາດຖືກກ່າວຫາ ຫຼື ລົງໂທດ ຈົນເຮັດໃຫ້ເຂົາເຈົ້າບໍ່ເໝາະສົມສຳລັບເຮັດວຽກກັບເດັກ (ຕົວຢ່າງ: ການກະທຳຜິດໃດໆກໍຕາມຕໍ່ກັບເດັກ, ມີຄະດີຢາເສບຕິດ, ການກະທຳຜິດກ່ຽວກັບການທຳຮ້າຍຮ່າງກາຍ ຫຼື ໃຊ້ຄວາມຮຸນແຮງ).<br>? ຄຳຖາມເພື່ອທົບທວນຄືນ/ສົນທະນາ (ເປັນທາງເລືອກ):<br>• ຕົວຢ່າງທີ່ດີຂອງວິທີການປ້ອງກັນ ທີ່ເກີດຂຶ້ນຢູ່ເຂດທີ່ທ່ານຢູ່ຊຸມຊົນ ຫຼື ປະເທດ ຂອງທ່ານ ມີຫຍັງແດ່?<br>• ໂອກາດອື່ນໆທີ່ສາມາດສານຕໍ່ຈາກຕົວຢ່າງເຫຼົ່ານີ້ ມີຄືແນວໃດ?</td><td></td></tr>
<tr><td>ແຜ່ນສະໄລ້ 53 ●<br></td><td>3. ການປົກປ້ອງ<br>• ການປົກປ້ອງແມ່ນການລະບຸ ເດັກທີ່ຕົກໃນສະພາບຄວາມສ່ຽງ ແລະ ດຳເນີນມາດຕະການທີ່ເໝາະສົມ.<br>• ຂໍ້ສຳຄັນແມ່ນຕ້ອງຮູ້ວ່າຈະເຮັດແນວໃດ ແລະ ຈະຮັບມືແນວໃດ ຖ້າວ່າທ່ານໄດ້ຮັບຂໍ້ມູນ ກ່ຽວກັບກໍລະນີການລ່ວງລະເມີດທີ່ສາມາດເກີດຂຶ້ນ.<br>• ວິທີຕ່າງໆທີ່ທ່ານສາມາດໄດ້ຮັບຂໍ້ມູນ ລວມມີ:<br>– ຂໍ້ສົງໄສຂອງທ່ານເອງ.<br>– ຂໍ້ມູນຈາກເດັກ.<br>– ຂໍ້ມູນຈາກຜູ້ໃຫຍ່.<br>– ຂໍ້ມູນທາງອ້ອມຈາກໃຜກໍໄດ້.</td><td></td></tr>
</table>

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 54** ●<br><br> | **ເຈົ້າຈະຮັບມືແນວໃດຕໍ່ກັບການເປີດເຜີຍຂໍ້ມູນ?**<br>ຖ້າວ່າເດັກເປີດເຜີຍວ່າເຂົາເຈົ້າໄດ້ຖືກລ່ວງລະເມີດ:<br>• ຟັງເດັກເວົ້າ ຢ່າງຕັ້ງອົກຕັ້ງໃຈ ແລະ ປະຕິບັດຕໍ່ເຂົາເຈົ້າຢ່າງເອົາຈິງເອົາຈັງ.<br>• ສ້າງຄວາມໝັ້ນໃຈໃຫ້ກັບເດັກ ວ່າມັນເປັນສິ່ງທີ່ດີແລ້ວ ທີ່ເຂົາເຈົ້າໄດ້ບອກຂໍ້ມູນນີ້ ແລະ ເຂົາເຈົ້າບໍ່ ຄວນຮັບຜິດຊອບໃດໆ ແລະ ຖືກກ່າວໂທດຕໍ່ເຫດການທີ່ເກີດຂຶ້ນ.<br>• ອະທິບາຍວ່າທ່ານ ຈຳເປັນຕ້ອງໄດ້ແລກປ່ຽນຂໍ້ມູນ ຕໍ່ກັບບຸກຄົນທີ່ກ່ຽວຂ້ອງ ເພື່ອຮັກສາຄວາມປອດໄພຂອງເດັກ (ຫ້າມສັນຍາວ່າຈະຮັກສາຂໍ້ມູນເປັນຄວາມລັບ).<br>• ບໍ່ໃຫ້ເປັນຜູ້ສືບສວນສອບສວນ – ເວັ້ນເສຍແຕ່ທ່ານເປັນ ນັກສັງຄົມສົງເຄາະ ຫຼື ເຈົ້າໜ້າທີ່ຕຳຫຼວດ, ທ່ານບໍ່ມີບົດບາດໃນການສືບສວນສອບສວນ.<br>• ທ່ານສາມາດຖາມຄຳຖາມ – ແຕ່ວ່າບໍ່ຄວນຖາມ 'ຄຳຖາມທີ່ຊີ້ນຳ ຫຼື ຊັກຈູງ' (ເຊັ່ນ ຄຳຖາມທີ່ເຍືອງທາງໄປຫາຄຳຕອບສະເພາະໃດໜຶ່ງ).<br>• ເຮັດບົດລາຍງານເປັນລາຍລັກອັກສອນ ກ່ຽວກັບສິ່ງທີ່ເຈົ້າໄດ້ຮັບຟັງ ໄວເທົ່າທີ່ຈະໄວໄດ້ ຫຼັງຈາກ ການສົນທະນາ. ທ່ານບໍ່ຄວນຂຽນລາຍງານດັ່ງກ່າວ ຕໍ່ໜ້າເດັກ. ເພື່ອຫຼີກເວັ້ນຄວາມຊັບສົນ, ຄວາມວິຕົກກັງວົນ ຫຼື ຮູ້ສຶກຜິດ, ເດັກບໍ່ຄວນ ໄດ້ຮັບຟັງ ການສົນທະນາ ກ່ຽວກັບການເປີດເຜີຍຂໍ້ມູນຂອງພວກເຂົາ.<br>• ຂໍ້ມູນຕ້ອງຖືກຮັກສາໄວ້ເປັນຄວາມລັບ ແລະ ເຜີຍແຜ່ໃຫ້ກັບນັກວິຊາຊີບທີ່ເໝາະສົມເທົ່ານັ້ນ.<br>• ຢ່າປະເມີນຄ່າຄວາມສຳຄັນຂອງຕົນເອງຕ່ຳ– ແຕ່ທ່ານຄວນຫຼີກລ້ຽງໜ້າທີ່ຮັບຜິດຊອບແກ້ໄຂບັນຫາພຽງຜູ້ດຽວ.<br>• ທ່ານຄວນນຳຂໍ້ມູນໄປບອກກັບນັກວິຊາຊີບ ທີ່ສາມາດຊ່ວຍທ່ານໄດ້ກັບສະຖານະການດັ່ງກ່າວ. ບັນດາຜູ້ຕາງໜ້າຊຸມຊົນອື່ນໆ (ລວມທັງຂະແໜງການສາທາລະນະສຸກ, ຕຳຫຼວດ, ບ້ານ, ມູນລະນິທິ ແລະ ນັກສັງຄົມສົງເຄາະ) ອາດຈະໄດ້ຮັບຂໍ້ມູນກ່ຽວກັບຄວາມປອດໄພຂອງເດັກແລ້ວ. ຂໍ້ມູນດັ່ງກ່າວ ບວກກັບຂໍ້ມູນທີ່ເປີດເຜີຍໂດຍເດັກຈະເປັນການ ຊີ້ບອກຄວາມໜ້າເປັນຫ່ວງທີ່ຕ້ອງເອົາ ໃຈໃສ່ ກ່ຽວກັບຄວາມປອດໄພຂອງເດັກ. ຖ້າບໍ່ມີການແລກປ່ຽນຂໍ້ມູນລະຫວ່າງນັກວິຊາຊີບທີ່ກ່ຽວຂ້ອງ, ເດັກອາດຈະຖືກປ່ອຍປະໃຫ້ຕົກຢູ່ໃນສະພາບແວດ ລ້ອມທີ່ບໍ່ປອດໄພ ພ້ອມກັບຄວາມເສຍຫາຍ ກະທົບຢ່າງຫຼວງຫຼາຍ.<br>• ຈົ່ງຈື່ໄວ້ວ່າຄວາມປອດໄພຂອງເດັກເປັນບຸລິມະສິດຕົ້ນຕໍ. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 55** ●<br> | ບອກຂໍ້ມູນຕິດຕໍ່ກັບອຳນາດການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆທີ່ສາມາດລາຍງານໄດ້. | ອີງຕາມ **ບັດເອົາກັບບ້ານ ('ໃຜອີກແດ່ທີ່ຊ່ວຍໄດ້?')** ແລະ ບອກຂໍ້ມູນຕິດຕໍ່ຂັ້ນທ້ອງຖິ່ນ ແລະ ສູນກາງໃຫ້ຜູ້ເຂົ້າຮ່ວມ.<br> |
| **ແຜ່ນສະໄລ້ 56** ●<br> | *ສະຫຼຸບ:*<br>• ໃຫ້ປະຕິບັດການທັນທີ ຖ້າໄດ້ຮັບທຸກຂໍ້ມູນວ່າ ເດັກກຳລັງຕົກຢູ່ໃນຄວາມສ່ຽງຈາກການລ່ວງລະເມີດ ຫຼື ກຳລັງຕົກເປັນຜູ້ເຄາະຮ້າຍຂອງການລ່ວງລະເມີດ.<br>• ປົກປ້ອງໂຕເດັກທີ່ກຳລັງສົງໄສວ່າອາດຈະຖືກລ່ວງລະເມີດ.<br>• ສົ່ງຕໍ່ກໍລະນີຕ່າງໆໃຫ້ບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ຮັບມອບໝາຍ.<br>• ປະຕິບັດຕາມຂັ້ນຕອນຂອງຊຸມຊົນທີ່ໄດ້ຕົກລົງໄວ້. | |
| | **?** *ຄຳຖາມເພື່ອທົບທວນຄືນ/ ສົນທະນາ:*<br>• ກວດເບິ່ງວ່າບັນດາຜູ້ເຂົ້າຮ່ວມເຂົ້າໃຈດີກ່ຽວກັບຂັ້ນຕອນການປະຕິບັດ ເມື່ອພົບເຫັນເດັກທີ່ມີຄວາມສ່ຽງ.<br>• ຂັ້ນຕອນຕົວຈິງທີ່ທ່ານຈະດຳເນີນ ແມ່ນຂຶ້ນກັບຕຳແໜ່ງໃນຊຸມຊົນຂອງທ່ານ ແລະ ສິດອຳນາດທາງການຂອງທ່ານ. ຕົວຢ່າງ: ເຈົ້າໜ້າທີ່ຕຳຫຼວດມີສິດໃນການຈັບຕົວ ແລະ ສືບສວນອາດຊະຍາກຳ, ລວມທັງການແຍກຕົວຜູ້ທີ່ເຮັດໃຫ້ເດັກຖືກລ່ວງລະເມີດ.<br>• ສິ່ງສຳຄັນທີ່ສຸດໃນທຸກກໍລະນີແມ່ນຕ້ອງຖືຄວາມປອດໄພຂອງເດັກ ເປັນຫຼັກ. ຕົວຢ່າງ, ໃນກໍລະນີຂອງການລ່ວງລະເມີດ, ຕ້ອງປະຕິບັດທັນທີປົກປ້ອງເດັກໂດຍການນຳໂຕເດັກອອກໄປ. ນັ້ນໝາຍຄວາມວ່າ ຕ້ອງເອົາຜູ້ຕ້ອງສົງໄສອອກຫ່າງຈາກເດັກ. ນອກຈາກວ່າຄອບຄົວເປັນຜູ້ກໍ່ເຫດ, ບໍ່ຄວນນຳເດັກນອອກຈາກຄອບຄົວຂອງລາວ. | |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 57**<br><br> | *ກິດຈະກຳ:*<br>*ກໍລະນີສຶກສາ*<br>• ແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມນ້ອຍ.<br>• ປະສົມແຕ່ລະກຸ່ມໃຫ້ມີຕົວແທນຈາກຫຼາຍຂະ<br>• ແໜງການ (ຕົວຢ່າງ: ຂະແໜງການສຶກສາ, ສາທາລະນະສຸກ, ນັກສັງຄົມສົງເຄາະ, ນັກກົດໝາຍ).<br>• ແຈກຢາຍສຳເນົາເອກະສານກ່ຽວກັບ ໜຶ່ງກໍລະນີສຶກສາຈາກ ບັດກໍລະນີສຶກສາສຳລັບ ຜູ້ຕາງໜ້າຊຸມຊົນ **(ເອກະສານຊ້ອນທ້າຍ7).**<br>• ໃຫ້ແຕ່ລະກຸ່ມປຶກສາຫາລືກັນກ່ຽວກັບກໍລະນີສຶກສາ ແລະ ຕອບຄຳຖາມທີ່ໃຫ້ໃນເອກະສານ. ຖ້າມີເວລາພຽງພໍ, ທ່ານສາມາດເອົາກໍລະນີສຶກສາ ໃຫ້ແຕ່ລະກຸ່ມຕື່ມອີກກໍ່ໄດ້.<br>• ໃຫ້ສົນທະນາ ຄຳຕອບຂອງແຕ່ລະກຸ່ມ. ພາຍຫຼັງການນຳສະເໜີຂອງແຕ່ລະກຸ່ມ, ຖາມກຸ່ມອື່ນ ໆວ່າພວກເຂົາມີຫຍັງເພີ່ມເຕີມອີກບໍ່. | ຜູ້ອຳນວຍຄວາມສະດວກຄວນເລືອກກໍລະນີ ສຶກສາທີ່ກ່ຽວຂ້ອງ ຈາກ**ເອກະສານຊ້ອນທ້າຍ 7** ແລ້ວສຳເນົາເອກະສານໄວ້ລ່ວງໜ້າ. |
| **ແຜ່ນສະໄລ້ 58**<br><br> | *ກິດຈະກຳ: ສ້າງຊຸມຊົນທີ່ປອດໄພສຳລັບ ເດັກ–ແຜນການປົກປ້ອງເດັກຂອງພວກເຮົາ (ເປັນທາງເລືອກ, ສຳລັບກິດຈະກຳພິເສດນີ້)*<br>• ໂດຍອີງໃສ່ຂະໜາດຂອງແຕ່ລະກຸ່ມ ແລະ ເວລາທີ່ມີ, ກິດຈະກຳນີ້ສາມາດເຮັດເປັນກຸ່ມສົນທະນາກຸ່ມໃຫຍ່ ຫຼື ກຸ່ມສົນທະນານ້ອຍ.<br>• ແນະນຳໃຫ້ຜູ້ເຂົ້າຮ່ວມຮູ້ວ່າພວກເຂົາແມ່ນຄະນະກຳ ມະການໃໝ່ ທີ່ມີໜ້າທີ່ຮັບຜິດຊອບ ໃນການປົກປ້ອງ ເດັກໃນຊຸມຊົນຂອງພວກເຂົາ.<br>• ແນະນຳພວກເຂົາວ່າ ດຽວນີ້ພວກເຂົາຕ້ອງສ້າງ ແຜນປະຈຳປີ.<br>– ມີປັດໄຈສຳຄັນໃດ ທີ່ເຮັດໃຫ້ເດັກ ມີຄວາມສ່ຽງຕໍ່ການລ່ວງລະເມີດ (ລວມທັງການລ່ວງລະເມີດທາງເພດ) ໃນຊຸມຊົນນີ້?<br>– ເຈົ້າມີວິທີການເຄື່ອນໄຫວໃດເພື່ອປົກປ້ອງເດັກ ໃນຊຸມຊົນນີ້ໃຫ້ປອດໄພຈາກການຖືກລ່ວງລະ ເມີດ? (ລວມມີການທີ່ຖືກທຳຮ້າຍທາງເພດ)<br>– ມີກິດຈະກຳ ບຸລິມະສິດອັນໃດເພື່ອຊ່ວຍປົກປ້ອງ ເດັກໃຫ້ປອດໄພຈາກການຖືກລ່ວງລະເມີດ ທາງເພດ?<br>– ຜູ້ຕາງໜ້າຊຸມຊົນໃດທີ່ຕ້ອງເຂົ້າຮ່ວມໃນເຄືອ ຂ່າຍດັ່ງກ່າວ?<br>– ມີໃຜອີກທີ່ຈະມີສ່ວນຮ່ວມ?<br>– ຂະແໜງການໃດທີ່ຈະຮັບຜິດຊອບໃນການນຳພາ (ຫຼື ບໍລິຫານເຄືອຂ່າຍຂອງຊຸມຊົນ?) | ຕົວຢ່າງຄວນມີ:<br>• ນະໂຍບາຍໃນໂຮງຮຽນ ແລະ ສູນການແພດ.<br>• ຂໍ້ຕົກລົງນຳສົ່ງ ລະຫວ່າງ ບັນດາອົງການ ແລະ ກົມກອງຕ່າງໆພ້ອມທັງ ແບບຟອມນຳສົ່ງ ທີ່ໄດ້ຕົກລົງເຫັນດີ.<br>• ຄວາມລັບ, ຄວາມເປັນສ່ວນຕົວ ແລະ ຄວາມປອດໄພຂອງຜູ້ເຄາະຮ້າຍ ແລະ ຄອບຄົວ. |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| | – ພາລະບົດບາດສະເພາະຂອງແຕ່ລະຂະແໜງການແມ່ນຫຍັງ (ຕົວຢ່າງ: ການສຶກສາ, ສາທາລະນະສຸກ, ນັກສັງຄົມສົງເຄາະ)?<br>– ຊັບພະຍາກອນດ້ານໃດພວກທ່ານຕ້ອງການ?<br>• ສົນທະນາຄຳຕອບຕ່າງໆ.<br>• ຍົກໃຫ້ເຫັນແນວຄວາມຄິດທີ່ສຳຄັນທີ່ແຕ່ລະກຸ່ມໄດ້ຍົກຂຶ້ນ ແລະ ຊຸກຍູ້ໃຫ້ພວກເຂົາສືບຕໍ່ປະຕິບັດແນວຄວາມຄິດ ນີ້ຫຼັງຈາກຈົບເວທີສົນທະນາ. | |
| **ສະຫຼຸບ** | | |
| **ແຜ່ນສະໄລ້ 59** ●<br><br> | *ກິດຈະກຳ: ການປະເມີນ*<br>• ເພື່ອໃຫ້ພວກເຮົາສາມາດປັບປຸງກິດຈະກຳຂອງພວກເຮົາໃນຕໍ່ໜ້າ, ພວກເຮົາຂໍຄຳເຫັນຈາກທ່ານກ່ຽວກັບການສົນທະນາໃນມື້ນີ້. ໃຫ້ທຸກຄົນຕອບຄຳຖາມລຸ່ມນີ້:<br>– ບົດຮຽນໃນຄັ້ງນີ້ ມີຜົນປະໂຫຍດບໍ່?<br>– ຂໍ້ມູນໃດ ແລະ ບົດຮຽນບົດໃດທີ່ມີເປັນປະໂຫຍດຫຼາຍທີ່ສຸດທີ່ເຈົ້າໄດ້ຮຽນມື້ນີ້?<br>– ມີສິ່ງໃດທີ່ເຈົ້າຕ້ອງການຢາກໃຫ້ປັບປຸງຄືນໃໝ່ໃນຕໍ່ໜ້າ?<br>• ອີກວິທີໜຶ່ງແມ່ນ ຜູ້ອຳນວຍຄວາມສະດວກສາມາດແຈກຢາຍແບບຟອມຄວາມເຫັນຂອງຂ້ອຍ **(ເອກະສານຊ້ອນທ້າຍ 8)** ເພື່ອໃຫ້ຜູ້ເຂົ້າຮ່ວມຕື່ມແບບຟອມໃຫ້ສົມບູນ.<br>*ກິດຈະກຳ: ແບບທົດສອບຫຼັງຝຶກອົບຮົມ*<br>• ຕໍ່ໄປນີ້, ຂ້າພະເຈົ້າຂໍກວດເບິ່ງວ່າ ຄຳຕອບຂອງບັນດາທ່ານແຕກຕ່າງຈາກຄຳຕອບທີ່ທ່ານໄດ້ໃຫ້ໃນເບື້ອງຕົ້ນຂອງການສົນທະນາບໍ່.<br>• ແຈກຢາຍ ບົດທົດສອບຫຼັງການຝຶກອົບຮົມ **(ເອກະສານຊ້ອນທ້າຍ 4)** ແລະ ໃຫ້ເວລາຜູ້ເຂົ້າຮ່ວມຕື່ມແບບຟອມ3-5 ນາທີ. ຈາກນັ້ນເກັບແບບຟອມນັ້ນຄືນ (ຜູ້ເຂົ້າຮ່ວມບໍ່ຈຳເປັນຕ້ອງໃສ່ຊື່).<br>• ຈາກນັ້ນ, ບອກຄຳຕອບທີ່ຖືກຕ້ອງເພື່ອຮັບປະກັນວ່າທຸກຄົນເຂົ້າໃຈເນື້ອໃນຫຼັກ ກ່ອນທີ່ພວກເຂົາຈະອອກຈາກເວທີສົນທະນາ. | ແບບຟອມຄວາມເຫັນຂອງຂ້ອຍ ຢູ່ໃນ**ເອກະສານຊ້ອນທ້າຍ 8.** ຕ້ອງສຳເນົາເອກະສານດັ່ງກ່າວໃຫ້ຜູ້ເຂົ້າຮ່ວມກ່ອນທີ່ຈະເລີ່ມເວທີການສົນທະນາ ເວັ້ນແຕ່ວ່າ ຈະດຳເນີນການປະເມີນຜົນນັ້ນແບບປາກເປົ່າ.<br>ບົດທົດສອບຫຼັງການຝຶກອົບຮົມ ຢູ່ໃນ**ເອກະສານຊ້ອນທ້າຍ 4.** ເຊັ່ນດຽວກັນກັບບົດທົດສອບກ່ອນການຝຶກອົບຮົມ, ແມ່ນສາມາດດຳເນີນດ້ວຍວິທີຕອບໂຕ້ຊື່ໆກັນ ແລະ ກັນ ໂດຍໃຊ້ ບັດຄຳຕອບທີ່ຢູ່ໃນ**ເອກະສານຊ້ອນທ້າຍ 5** ຫຼື ໃຫ້ຜູ້ເຂົ້າຮ່ວມໄປຂ້າງຫ້ອງທີ່ມີໝາຍໄຂ່ວຕົນກາ, ໝາຍຕົກ ຫຼື ໝາຍຖາມ'.<br>ຜູ້ອຳນວຍຄວາມສະດວກຕ້ອງບັນທຶກບັນດາຄຳຕອບຕໍ່ການປະເມີນການສົນທະນາ ແລະ ບົດສອບຖາມພາຍຫຼັງການຝຶກອົບຮົມ (ຖ້າຫາກດຳເນີນໄປດ້ວຍວິທີການໂຕ້ຕອບ) ເພື່ອຈະສາມາດນຳຂໍ້ມູນທີ່ສຳຄັນດັ່ງກ່າວ ເຂົ້າໃນບົດລາຍງານພາຍຫຼັງການຝຶກອົບຮົມ **(ເອກະສານຊ້ອນທ້າຍ 9).** |

| ສະໄລ້ | ຂໍ້ຄວາມສຳຄັນ | ຂໍ້ແນະນຳຊ່ວຍອະທິບາຍ |
|---|---|---|
| **ແຜ່ນສະໄລ້ 60** ●   | • ຂໍສະແດງຄວາມຂອບໃຈຕໍ່ນັກສຳມະນາກອນທັງຫຼາຍທີ່ເອົາໃຈໃສ່ ແລະ ຕັ້ງໃຈປະກອບສ່ວນເຂົ້າໃນການ ແລກປ່ຽນຄຳຄິດຄຳເຫັນໃນຄັ້ງນີ້.<br>• ຢ້ຳຕໍ່ຜູ້ເຂົ້າຮ່ວມກ່ຽວກັບ ພາລະບົດບາດອັນສຳຄັນທີ່ພວກເຂົາຕ້ອງເຮັດໃນນາມເປັນຜູ້ຕາງໜ້າຊຸມຊົນ ເພື່ອປົກປ້ອງເດັກຈາກການລ່ວງລະເມີດທາງເພດ.<br>• ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມນຳໃຊ້ ແລະ ແບ່ງປັນຂໍ້ມູນທີ່ພວກເຂົາຮຽນຮູ້ໃນການສົນທະນາມື້ນີ້ ເພື່ອສ້າງສະພາບແວດລ້ອມທີ່ປອດໄພໃຫ້ແກ່ເດັກ.<br>• ເຊີນຊວນໃຫ້ຜູ້ເຂົ້າຮ່ວມຕິດຕໍ່ ແລະ ເຮັດວຽກຮ່ວມກັນຖ້າພວກເຂົາມີຂໍ້ກັງວົນກ່ຽວກັບການລ່ວງລະເມີດທາງເພດເດັກ ໂດຍນຳໃຊ້ເບີຕິດຕໍ່ທີ່ໄດ້ໃຫ້ກັນໄວ້.<br>• ຢ້ຳຄືນວ່າ ພວກເຮົາສາມາດເຮັດໃຫ້ຊຸມຊົນປອດໄພຂຶ້ນ ສຳລັບເດັກດ້ວຍວິທີປະຕິບັດທີ່ງ່າຍດາຍ. | |

# ບັນທຶກ

# ບັນທຶກ

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

# ພາກທີ 3:
# ເອກະສານຊ້ອນທ້າຍ



# ເອກະສານຊ້ອນທ້າຍ 1: ບັດເອົາກັບບ້ານ

ສຳເນົາບັດເຫຼົ່ານີ້ຕ້ອງແຈກຢາຍໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ. ຜູ້ເຂົ້າຮ່ວມສາມາດເອົາບັດດັ່ງກ່າວກັບບ້ານ ໃຫ້ພວກເຂົາສາມາດທວນຄືນເນື້ອໃນຫຼັກທີ່ຕົນໄດ້ຮຽນ. ສຳເນົາບັດກັບບ້ານຄວນຈະແມ່ນຂະໜາດເຈ້ຍ A5 ຫຼື A6 ຫຼື ແບບໜ້າຫຼັງ. ວິທີການດັ່ງກ່າວຈະເຮັດໃຫ້ຈົດຈຳ ແລະ ນຳໃຊ້ໄດ້ງ່າຍຂຶ້ນ.

# ການປ້ອງກັນເດັກຂອງພວກເຮົາໃຫ້ປອດໄພຈາກການລ່ວງລະເມີດທາງເພດ

## ຜູ້ຕາງໜ້າຊຸມຊົນ



Australian Aid

World Vision

# ການປົກປ້ອງເດັກແມ່ນຄວາມ ຮັບຜິດຊອບຂອງໝົດທຸກຄົນ

'ເດັກ' ແມ່ນບຸກຄົນທີ່ອາຍຸຕໍ່າກວ່າ 18 ປີ. ເດັກຈໍາເປັນຕ້ອງໄດ້ຮັບການປົກປ້ອງເປັນພິເສດ. ທຸກຄົນທີ່ມີການພົວພັນກັບເດັກຢູ່ໃນຊຸມຊົນ (ເຊັ່ນ ຄູອາຈານ, ພະນັກງານແພດໝໍ, ນັກສັງຄົມສົງເຄາະ, ຊາວໜຸ່ມ, ຜູ້ນໍາທາງສາດສະໜາ, ຕໍາຫຼວດ, ເຈົ້າໜ້າທີ່ຊຸມຊົນ) ແມ່ນມີບົດບາດສໍາຄັນ ໃນການປົກປ້ອງ, ລະບຸ ແລະ ຮັບມືກັບຄວາມສ່ຽງຕ່າງໆ ທີ່ເດັກພົບພໍ້.




**ຮ່ວມກັນສ້າງຊຸມຊົນໃຫ້ເປັນຊຸມຊົນທີ່ປອດໄພສໍາລັບເດັກ.**

# ການລ່ວງລະເມີດເດັກແມ່ນຫຍັງ?

ການລ່ວງລະເມີດເດັກແມ່ນການກະທຳ (ຫຼື ບໍ່ແມ່ນການກະທຳ) ທີ່ເຈດຕະນາ ແລະ ເຮັດໃຫ້ເດັກບາດເຈັບ ຫຼື ເຮັດໃຫ້ເດັກຕົກໃນສະພາບການທີ່ອັນຕະລາຍ.

ໃນແຕ່ລະວັນ ມີເດັກຫລາຍລ້ານຄົນໄດ້ຮັບຄວາມທຸກຈາກການລ່ວງລະເມີດ. ການລ່ວງລະເມີດເດັກ ແມ່ນເກີດມີຂື້ນຢູ່ໃນທຸກໆປະເທດໃນໂລກ.

## ປະເພດຂອງການລ່ວງລະເມີດເດັກ

ການລ່ວງລະເມີດເດັກ ແບ່ງອອກເປັນ 4 ປະເພດ. ສ່ວນຫຼາຍ, ມີຫຼາຍປະເພດການລ່ວງລະເມີດທີ່ເກີດຂຶ້ນພ້ອມໆກັນ.

- ທາງຮ່າງກາຍ
- ທາງເພດ
- ທາງຈິດໃຈ
- ການປ່ອຍປະລະເລີຍເດັກ

## ຜົນກະທົບຂອງການລ່ວງລະເມີດເດັກ

ການລ່ວງລະເມີດທາງເພດເດັກມີຜົນກະທົບທາງຮ່າງກາຍ ແລະ ຈິດໃຈ ຢ່າງຮຸນແຮງຕໍ່ເດັກໃນໄລຍະສັ້ນ ແລະ ໄລຍະຍາວ.

ຜົນກະທົບທີ່ເກີດຈາກການລ່ວງລະເມີດຍັງສົ່ງຜົນຕໍ່ຄອບຄົວຂອງຜູ້ເຄາະຮ້າຍ, ຊຸມຊົນ ແລະ ສັງຄົມ ນຳດ້ວຍ.

ເດັກບໍ່ຄວນຖືກກ່າວໂທດຈາກການຖືກລ່ວງລະເມີດ ຫຼື ໄດ້ຮັບຜົນກະທົບໄປເຖິງຄອບຄົວ ແລະ ຊຸມຊົນ.

# ການລ່ວງລະເມີດເດັກແມ່ນຫຍັງ?



1. ການລ່ວງລະເມີດທາງວາຈາ



2. ຕົວະຍົວະຫຼອກລວງເດັກ



3. ເອົາຮູບໂປ້ໃຫ້ເດັກເບິ່ງ



4. ຈັບບາຍຮ່າງກາຍເດັກບ່ອນທີ່ເດັກບໍ່ເຕັມໃຈ ແລະ ບໍ່ເໝາະສົມ



5. ບັງຄັບເດັກໃຫ້ຈັບບາຍຮ່າງກາຍຂອງຜູ້ໃຫຍ່



6. ເຮັດໃຫ້ເດັກຂາດຄວາມໝັ້ນໃຈ



7. ລະບາຍອາລົມດ້ວຍການຕີເດັກ



8. ໃຊ້ເດັກເປັນເຄື່ອງມື



9. ບໍ່ດູແລເອົາໃຈໃສ່ເດັກ ເຊັ່ນ: ເຄື່ອງນຸ່ງຫົ່ມ, ອາຫານ



10. ໃຊ້ແຮງງານເດັກແບບຂ້າທາດ



11. ບໍ່ໃສ່ໃຈຮັບຟັງເດັກ



12. ປ່ອຍປະລະເລີຍເດັກ



13. ໃຊ້ເດັກແບບຄົນຮັບໃຊ້, ບໍ່ໃຫ້ໄປໂຮງຮຽນ



14. ຕົບຕີເດັກ, ລາກແກ່ເດັກຢູ່ໂຮງຮຽນ



15. ບໍ່ດູແລເດັກເວລາເດັກບໍ່ສະບາຍ



16. ລະເມີດເດັກບໍ່ໃຫ້ໄດ້ຮັບການສຶກສາ



17. ປ່ອຍປະເດັກເຮັດໃຫ້ເກີດອັນຕະລາຍ



# ການລ່ວງລະເມີດທາງເພດເດັກ ແມ່ນຫຍັງ?

- ການລ່ວງລະເມີດທາງເພດເດັກແມ່ນການເອົາເດັກເຂົ້າຮ່ວມກິດຈະກຳທາງເພດໂດຍນຳໃຊ້ອຳນາດທີ່ເໜືອກວ່າ ຫຼື ເອົາປຽບຈາກຄວາມໄວ້ໃຈທີ່ເດັກມີຕໍ່ເຂົາ.
- ການລ່ວງລະເມີດທາງເພດເດັກລວມມີການປະພຶດທາງເພດທີ່ບໍ່ສົມຍອມໃນທຸກຮູບແບບ. ນີ້ລວມມີການສຳພັດ ຫຼື ບໍ່ມີການສຳພັດເລີຍ.
- ການລ່ວງລະເມີດທາງເພດເດັກລວມມີ:
  – ການສ້າງພາບ/ຮູບພາບ/ວີດີໂອກ່ຽວກັບການລ່ວງລະເມີດທາງເພດເດັກ.
  – ບັງຄັບໃຫ້ເດັກເບິ່ງ ຫຼື ມີສ່ວນຮ່ວມກັບການກະທຳທາງເພດ.
  – ບັງຄັບ/ຂົ່ມຂູ່ໃຫ້ເດັກມີເພດສຳພັນນຳ ຫຼື ມີສ່ວນຮ່ວມໃນການມີເພດສຳພັນກັບເດັກ ຫຼື ຜູ້ໃຫຍ່ຄົນອື່ນ.
- ອີງຕາມກົດໝາຍ ວ່າດ້ວຍ ການປົກປ້ອງສິດແລະ ຜົນປະໂຫຍດຂອງເດັກ ມາດຕາ 2: ການອະທິບາຍຄຳສັບ ຂໍ້ທີ່ 9. ເດັກທີ່ຖືກລ່ວງລະເມີດທາງເພດ ໝາຍເຖິງເດັກທີ່ຖືກຂົ່ມຂືນທຳຊຳເລົາ, ຖືກທຳຊຳເລົາ ຫຼື ຖືກທຳອານາຈານ, ຂໍ້ທີ 15. ການທາລຸນເດັກ ໝາຍເຖິງ ການກະທຳ ຫຼື ການເມີນເສີຍ ຊຶ່ງເປັນການທຳຮ້າຍຮ່າງກາຍ, ທຳຮ້າຍຈິດໃຈຂອງເດັກ, ການລ່ວງລະເມີດທາງເພດຕໍ່ເດັກ, ການຍຸຍົງໃຫ້ເດັກກະທຳຜິດ ຫຼື ກະທຳໃນສິ່ງທີ່ມີຜົນສະທ້ອນຕໍ່ຮ່າງກາຍ ຫຼື ຈິດໃຈຂອງເດັກ.

# ທ່ານຮູ້ບໍວ່າ?

## ການລ່ວງລະເມີດທາງເພດເດັກແມ່ນເປັນບັນຫາທົ່ວໂລກ

ການລ່ວງລະເມີດທາງເພດເດັກແມ່ນເກີດຂຶ້ນຢູ່ທຸກທີ່ທຸກແຫ່ງໃນໂລກ. ແມ້ກະທັ້ງ ຢູ່ໃນຊຸມຊົນຂອງພວກເຮົາກໍ່ບໍ່ອາດປາດສະຈາກບັນຫາເລື່ອງນີ້ ຜູ້ລ່ວງລະເມີດສ່ວນຫຼາຍ ໃນຊຸມຊົນໃດກໍ່ຕາມແມ່ນຄົນທ້ອງຖິ່ນ.

## ຜູ້ເຄາະຮ້າຍຂອງການລ່ວງລະເມີດທາງເພດສາມາດເປັນທັງເດັກຍິງ ແລະ ເດັກຊາຍ.

ທັງເດັກຍິງແລະເດັກຊາຍແມ່ນສາມາດເປັນຜູ້ເຄາະຮ້າຍຂອງການຖືກລ່ວງລະເມີດທາງເພດໄດ້. ເດັກເພດທີສາມ ຫຼື ເດັກທີ່ກຳລັງຄົ້ນຫາເພດທີ່ແທ້ຈິງຂອງຕົວເອງອາດຈະໄດ້ຮັບຄວາມສ່ຽງສູງ. ເດັກພິການ (ເດັກທີ່ພິການທຸກຮູບແບບ) ອາດຈະໄດ້ຮັບຄວາມສ່ຽງສູງ. ການລ່ວງລະເມີດທາງເພດສາມາດເກີດຂຶ້ນໄດ້ກັບເດັກທຸກໆຄົນ ບໍ່ວ່າຈະມາຈາກພື້ນຖານແນວໃດກໍ່ຕາມ.

## ຜູ້ລ່ວງລະເມີດທາງເພດສ່ວນຫຼາຍຈະເປັນຄົນທີ່ເດັກຮູ້ຈັກ

ຜູ້ລ່ວງລະເມີດທາງເພດເດັກສ່ວນຫຼາຍຈະແມ່ນສະມາຊິກໃນຄອບຄົວ, ໃນຊຸມຊົນ ຫຼື ທີ່ເດັກໄວ້ໃຈ.

## ຜູ້ລ່ວງລະເມີດອາດແມ່ນໝູ່ເພື່ອນຂອງເຂົາ ຫຼື ຄອບຄົວຂອງເຂົາ

ຜູ້ລ່ວງລະເມີດມັກຈະມາໃນຮູບແບບຂອງການເປັນເພື່ອນມິດກັບເດັກຜູ້ເຄາະຮ້າຍ ຫຼື ເປັນມິດກັບຄອບຄົວຂອງເຂົາ ເພາະມັນເປັນຊ່ອງທາງທີ່ເຂົາເຊື່ອງຊ້ອນໄວ້.

## ການລ່ວງລະເມີດທາງເພດເດັກສາມາດເກີດຂຶ້ນໃນສະພາບແວດລ້ອມການທ່ອງທ່ຽວ

ຄົນຕ່າງປະເທດຈຳນວນໜຶ່ງໃຊ້ການທ່ອງທ່ຽວເປັນໂອກາດໃນການລ່ວງລະເມີດທາງເພດເດັກ. ຜູ້ລ່ວງລະເມີດທາງເພດເດັກແມ່ນນັກທ່ອງທ່ຽວ ຫຼື ຄົນຕ່າງປະເທດທີ່ຍົກຍ້າຍເຂົ້າມາຢູ່ພາຍໃນປະເທດ ຊຶ່ງເປັນຜູ້ທີ່ກະທຳຜິດໃນປະເທດທີ່ພວກເຂົາອາໃສຢູ່ ຫຼື ໄປຢ້ຽມຢາມ.

## ເດັກສ່ວນຫຼາຍບໍ່ບອກໃຫ້ຜູ້ໃຫຍ່ຮູ້ກ່ຽວກັບການລ່ວງລະເມີດທາງເພດ.

ບໍ່ວ່າດ້ວຍເຫດຜົນໃດໆ ເດັກມັກຈະປິດໄວ້ຕໍ່ກັບບັນຫາທີ່ເຂົາ ຖືກລ່ວງລະເມີດ. ຄວນສັງເກດເບິ່ງສັນຍານເຕືອນ ຫຼາຍກວ່າທີ່ຈະລໍໃຫ້ເດັກເວົ້າກ່ຽວກັບການທີ່ເຂົາຖືກລ່ວງລະເມີດອອກມາ.

## ເດັກທຸກຄົນມີສິດທີ່ຈະໄດ້ຮັບການປົກປ້ອງ

ເດັກທຸກຄົນຢູ່ໃນໂລກນີ້ແມ່ນມີສິດທີທີ່ຈະໄດ້ຮັບການປົກປ້ອງຈາກທຸກຮູບແບບຂອງການລ່ວງລະເມີດ. ໃນຖານະເປັນຜູ້ໃຫ່ຍ, ມັນແມ່ນຄວາມຮັບຜິດຊອບຂອງພວກເຮົາທີ່ຈະຊ່ວຍປົກປ້ອງເດັກໃຫ້ຫລຸດພົ້ນຈາກການລ່ວງລະເມີດ. ເດັກ ບໍ່ຄວນຖືກກ່າວໂທດທີ່ຕົນຖືກລ່ວງລະເມີດ.

# ຜູ້ລ່ວງລະເມີດທາງເພດເດັກ ດຳເນີນການແນວໃດ?

ຜູ້ລ່ວງລະເມີດໃຊ້ຫຼາຍວິທີເພື່ອເຂົ້າຫາເດັກ ແລະ ລ່ວງລະເມີດເດັກ.

ຕາມປົກກະຕິ ຄົນມັກຄິດວ່າ ການລ່ວງລະເມີດທາງເພດເດັກມັກເກີດຂຶ້ນແບບບັງເອີນ ຍ້ອນມີຄົນແປກໜ້າເຂົ້າບຸກທຳລາຍ. ແທ້ຈິງແລ້ວ, ຕາມປົກກະຕິ ຜູ້ກະທຳຜິດ ແລະ/ຫຼື ບຸກຄົນກາງຈະໃຊ້ເວລາສ້າງສາຍສຳພັນກັບເດັກ (ແລະ ບາງເທື່ອກັບຄອບຄົວຂອງພວກເຂົາ). ຂະບວນການນີ້ ເອີ້ນວ່າ “ຂັ້ນຕອນຂອງຜູ້ລ່ວງລະເມີດ” ຊຶ່ງມັນປະກອບມີຫຼາຍຂັ້ນຕອນດັ່ງນີ້:




ຜູ້ກະທຳຜິດລະບຸເດັກຜູ້ທີ່ພວກເຂົາຢາກລ່ວງລະເມີດ. ສ່ວນຫຼາຍ ຜູ້ລ່ວງລະເມີດມັກ ເລັງໃສ່ເດັກທີ່ມີຄວາມສ່ຽງ.

ຜູ້ລ່ວງລະເມີດເຮັດໃຫ້ເດັກໄວ້ໃຈໂດຍການເລົ່າເລື່ອງທີ່ພວກເຂົາສົນໃຈ, ໃຫ້ຂອງຂວັນ ແລະ ເປັນໝູ່ນຳ.

ຜູ້ລ່ວງລະເມີດເລີ່ມມີຄວາມລັບກັບເດັກ ແລະ ໃຫ້ພວກເຂົາສັນຍາ, ນາບຂູ່ ຫຼື ບັງຄັບພວກເຂົາໃຫ້ປົກປິດເປັນຄວາມລັບ.

ຜູ້ລ່ວງລະເມີດເພີ່ມລະດັບຄວາມສຳພັນທາງເພດ. ພວກເຂົາກ່າວເຖິງປະເດັນທາງເພດ ແລະ ເອົາເອກະສານ ແລະ ສິ່ງຕ່າງໆທາງເພດເພື່ອໃຫ້ເດັກລຶ້ງເຄີຍຕໍ່ປະເດັນດັ່ງກ່າວ.

ຜູ້ລ່ວງລະເມີດລົງມືກະທຳການລ່ວງລະເມີດທາງເພດ.

ຜູ້ລ່ວງລະເມີດທຸກຄົນຈະບໍ່ນຳໃຊ້ວິທີການລ່ວງລະເມີດເດັກແບບຕາຍຕົວ. ວິທີອື່ນໆລວມມີການບຸກໂຈມຕີທັນທີ, ການຈັດຫາຊື້ຈ້າງ, ການຫຼອກລວງ, ການໃຊ້ເລ້ລ່ຽມ, ນາບຂູ່.

ສ່ວນຫຼາຍ, ຜູ້ລ່ວງລະເມີດບໍ່ໄດ້ເຄື່ອນໄຫວຜູ້ດຽວ. ພວກເຂົາອາດຈະໄດ້ຮັບການຊ່ວຍເຫຼືອ ຫຼື ໄດ້ຮັບການສະໜັບສະໜູນຈາກຜູ້ອື່ນເຊັ່ນ: ຜູ້ຊ່ວຍ, ນາຍໜ້າ, ຜູ້ຈັດຫາ, ສື່ກາງ ແລະ ຜູ້ອຳນວຍຄວາມສະດວກ.

# ສັນຍານໃດ ທີ່ບົ່ງບອກວ່າເດັກ ກຳລັງຕົກຢູ່ໃນຄວາມສ່ຽງ?

## 1 ພຶດຕິກຳຂອງເດັກເອງ

ໃນຂະນະທີ່ເດັກມີອາການເຫຼົ່ານີ້ ບາງເທື່ອອາດຈະບໍ່ແມ່ນວ່າ ເດັກກຳລັງຖືກລ່ວງລະເມີດຢູ່ ແຕ່ມັນກໍ່ເປັນເຫດຜົນດີ ທີ່ພວກເຮົາຄວນເອົາໃຈໃສ່ເບິ່ງ ຄື:

- ອາລົມແປປວນ, ເດັກມີອາການງຽບ, ຊຶມເສົ້າ, ເກີດອາລົມໃຈຮ້າຍໃນທັນທີ ຫຼື ໃຊ້ຄວາມຮຸນແຮງ.
- ໜີອອກຈາກບ້ານ ຫຼື ສູນຫາຍໄປເປັນເວລາດົນນານ.
- ຜົນການຮຽນໃນໂຮງຮຽນປ່ຽນໄປ ຫຼື ຂາດໂຮງຮຽນໂດຍບໍ່ມີເຫດຜົນ.
- ມີເງິນ, ຂອງຂວັນ, ໂທລະສັບມືຖື ແບບບໍ່ຮູ້ທີ່ມາ.
- ນຳໃຊ້ສິ່ງເສບຕິດ (ລວມທັງຢາເສບຕິດ ແລະ ສິ່ງມຶນເມົາ).
- ມີພຶດຕິກຳທາງເພດທີ່ບໍ່ເໝາະສົມກັບອາຍຸຂອງເດັກ.
- ເດັກທີ່ຮູ້ກັນທົ່ວວ່າເປັນ 'ເດັກສ້າງບັນຫາ'.

## 2 ພຶດຕິກຳຂອງຄົນອື່ນ

ຈັບຕາເບິ່ງພຶດຕິກຳຂອງຜູ້ໃຫຍ່ທີ່ຢູ່ໃກ້ເດັກ. ພຶດຕິກຳເຫຼົ່ານີ້ລວມມີ: ການເອົາໃຈໃສ່ເດັກແບບພິເສດ, ການໃຫ້ຂອງຂວັນ, ສະແດງຄວາມມັກເປັນພິເສດ, ຂໍເວລາໄປທ່ຽວກັບເດັກແບບສອງຕໍ່ສອງ ຫຼື ຢ້ຽມຢາມເດັກແບບບໍ່ມີການຕິດຕາມຈາກພໍ່ແມ່ ຫຼື ຜູ້ປົກຄອງ.

## 3 ອາການ ແລະ ສັນຍານບອກຈາກພາຍນອກ

ອາການທີ່ບົ່ງບອກຈາກພາຍນອກອາດມີ ການຖືພາ, ການໄດ້ຮັບບາດເຈັບ ຫຼື ສິ່ງຕ່າງໆທີ່ກ່ຽວຂ້ອງກັບການຕິດເຊື້ອ (ເຊັ່ນ: ເຊື້ອໂຣກ ຫຼື ພະຍາດຕິດຕໍ່ທາງເພດສຳພັນ).

## 4 ເດັກເປີດເຜີຍເອງ

ບາງຄັ້ງເດັກຮູ້ສຶກບໍ່ກ້າເປີດເຜີຍຕໍ່ກັບພໍ່ແມ່ ຫຼື ຜູ້ປົກຄອງ, ເຂົາອາດໄປເປີດເຜີຍກັບຄົນອື່ນທີ່ເຂົາໄວ້ໃຈກ່ຽວກັບເລື່ອງທີ່ເຂົາຖືກລ່ວງລະເມີດ.

## 5 ສັນຍານເຕືອນໄພຂອງຊຸມຊົນ

ໃນເມື່ອເດັກມີສະພາບການດຳລົງຊີວິດທີ່ຫຍຸ້ງຍາກຂາດເຂີນ ພວກເຂົາຍິ່ງ ມີຄວາມອອ່ນໄຫວຕໍ່ກັບການຖືກລ່ວງລະເມີດ. ໃນລະດັບຊຸມຊົນ, ຈັບຕາເບິ່ງ: ມີເດັກນ້ອຍຂໍທານ, ເດັກບໍ່ເຂົ້າໂຮງຮຽນ, ເດັກອາໄສ/ເຮັດວຽກຢູ່ຕາມຂ້າງຖະໜົນ ແລະ ບໍ່ມີພໍ່ແມ່ເບິ່ງແຍງ, ອາໄສຢູ່ກັບຄອບຄົວທີ່ມີຄວາມສ່ຽງ, ຕິດເກມ/ອິນເຕີເນັດ. ນອກຈາກນີ້, ຍັງຈັບຕາເບິ່ງ ສະຖານທີ່ຂອງຜູ້ໃຫຍ່ ຫຼື ສະຖານທີ່ບັນເທີງຍາມກາງຄືນ ຫຼື ສະຖານທີ່ບໍລິການທ່ອງທ່ຽວທີ່ກ່ຽວຂ້ອງກັບອຸດສະຫະກຳການຂາຍບໍລິການທາງເພດທີ່ເພີ່ມຂຶ້ນ.

# ຊຸມຊົນຂອງຂ້ອຍ ເປັນຊຸມຊົນທີ່ປອດໄພສຳລັບເດັກແນວໃດ?

## ດຳເນີນການທົດສອບ

**ກະລຸນາໝາຍເຄື່ອງໝາຍໃສ່ຄຳຕອບທີ່ຖືກຕ້ອງ ✓**

| | ແມ່ນ | ບໍ່ແມ່ນ |
|---|---|---|
| 1. ຂ້ອຍຮູ້ຈັກເບິ່ງສັນຍານເຕືອນໄພ ວ່າ ເດັກ ອາດຈະຕົກຢູ່ໃນຄວາມສ່ຽງ ຫຼື ກຳລັງ ຖືກລ່ວງລະເມີດທາງເພດ. | | |
| 2. ຂ້ອຍຮູ້ຈັກວິທີຕອບໂຕ້ ຖ້າວ່າ ເດັກ ຫາກຕົກຢູ່ໃນຄວາມສ່ຽງ ໃນການລ່ວງລະເມີດ (ທາງຮ່າງກາຍ, ທາງຈິດໃຈ, ທາງເພດ ຫຼື ຖືກປ່ອຍປະລະເລີຍ). | | |
| 3. ຂ້ອຍຮູ້ຈັກເບີໂທລະສັບ ເພື່ອຕິດຕໍ່ ລາຍງານ ກໍລະນີທີ່ສົງໃສວ່າ ເດັກຖືກລ່ວງລະເມີດ (ທາງຮ່າງກາຍ, ທາງຈິດໃຈ, ທາງເພດ ຫຼື ຖືກປ່ອຍປະລະເລີຍ). | | |
| 4. ເດັກຢູ່ໃນຊຸມຊົນຂອງຂ້ອຍໄດ້ຮັບການສຶກສາກ່ຽວກັບການປົກປ້ອງຕົນເອງຈາກການລ່ວງລະເມີດທາງເພດ. | | |
| 5. ໃນບ່ອນເຮັດວຽກຂອງຂ້ອຍ ແມ່ນມີນະໂຍບາຍການປົກປ້ອງເດັກ ແລະ ພະນັກງານທຸກຄົນ ຄູ້ນເຄີຍກັບການນຳໃຊ້ນະໂຍບາຍນີ້. | | |
| 6. ອົງການຈັດຕັ້ງຂອງຂ້ອຍໃຫ້ການສຶກສາຕໍ່ ສາທາລະນະ ກ່ຽວກັບວິທີການປົກປ້ອງເດັກໃຫ້ປອດໄພຈາກການລ່ວງລະເມີດ (ທາງຮ່າງກາຍ, ທາງຈິດໃຈ, ທາງເພດ ຫຼື ຖືກປ່ອຍປະລະເລີຍ). | | |
| 7. ຊຸມຊົນຂອງພວກເຮົາມີເຄືອຂ່າຍຂອງຜູ້ບໍລິການທີ່ເຮັດວຽກຮ່ວມກັນ ລາຍງານ ກໍລະນີຕ່າງໆຂອງເດັກຜູ້ທີ່ໄດ້ຮັບເຄາະຮ້າຍຈາກການລ່ວງລະເມີດທາງເພດ ແລະ ປົກປ້ອງ ຜູ້ໄດ້ຮັບເຄາະຮ້າຍ. | | |

**ຜົນອອກ:**

ຖ້າທ່ານເລືອກ 'ແມ່ນ' ໃນທຸກຄຳຖາມຂ້າງເທິງ, ຜູ້ຕາງໜ້າຊຸມຊົນແມ່ນໄດ້ເຮັດໜ້າທີ່ ດີເລີດໃນການປົກປ້ອງເດັກ. ຂໍໃຫ້ຮັກສາການປະຕິບັດທີ່ດີນີ້ໄວ້ຕໍ່ໄປ!

ຖ້າທ່ານເລືອກ 'ບໍ່ແມ່ນ' ໃນບາງຄຳຖາມຂ້າງເທິງ, ໃຫ້ເບິ່ງຂ້າງຫຼັງຂອງບັດແຜ່ນນີ້ ກ່ຽວກັບວິທີທາງທີ່ຈະສ້າງສະພາບແວດລ້ອມທີ່ດີໃນການປົກປ້ອງເດັກ.

# ພວກເຮົາສາມາດເຮັດໃຫ້ຊຸມຊົນຂອງພວກເຮົາປອດໄພສໍາລັບເດັກໄດ້ແນວໃດ?

**1** **ການສົນທະນາ ແລະ ການສື່ສານແບບເປີດເຜີຍ**

- ສາຍສໍາພັນໂດຍກົງ ແລະ ໂອ້ລົມກັນໄດ້ຕະຫຼອດລະຫວ່າງເດັກ ກັບ ພໍ່ແມ່ພວກເຂົາ.
- ເປີດເວທີສົນທະນາກ່ຽວກັບການປົກປ້ອງເດັກໂດຍຜ່ານສື່ມວນຊົນ, ໃນໂຮງຮຽນ, ໃນສະຖາບັນຕ່າງໆ ແລະ ໃນຊຸມຊົນນໍາກັນ.

**2** **ການປ້ອງກັນ**

- ກວດກາປະຫວັດຕ່າງໆ ແລະ ຜູ້ທີ່ເປັນອາສາສະໝັກ ຫຼື ເຮັດວຽກກັບເດັກ.
- ລາຍງານ ແລະ ສືບຫາຂໍ້ສົງໃສຢ່າງຈິງຈັງ.
- ຈໍາກັດການເຂົ້າຫາເດັກຂອງຄົນແປກໜ້າ ແລະ ຈໍາກັດສະຖານທີ່ ທີ່ເດັກສາມາດຢູ່ກັບຜູ້ໃຫຍ່ສອງຕໍ່ສອງ.
- ສະແດງໃຫ້ຮູ້ວ່າການລ່ວງລະເມີດທາງເພດເດັກໃນຊຸມຊົນ ແມ່ນເປັນທີ່ຍອມຮັບບໍ່ໄດ້.
- ດໍາເນີນໂຄງການເຂົ້າຫາຊຸມຊົນກ່ອນ ເພື່ອຊ່ວຍເຫຼືອຄອບຄົວທີ່ມີຄວາມສ່ຽງ.

**3** **ການປົກປ້ອງ**

- ແຈ້ງເຕືອນ! ເບິ່ງຫາສັນຍານທີ່ບົ່ງບອກເຖິງເດັກທີ່ອາດມີຄວາມສ່ຽງ
- ດໍາເນີນການດ່ວນຖ້າໄດ້ຮັບຂໍ້ມູນທີ່ເດັກໄດ້ຮັບຄວາມສ່ຽງທີ່ຈະຖືກລ່ວງລະເມີດ ຫຼື ເປັນຜູ້ເຄາະຮ້າຍຈາກການລ່ວງລະເມີດ.
- ໃຫ້ປົກປ້ອງເດັກໂດຍເອົາໂຕເດັກໄປຢູ່ໃນແວດລ້ອມທີ່ປອດໄພ.
- ສົ່ງຕໍ່ກໍລະນີຕ່າງໆ ໃຫ້ບຸກຄົນ/ອົງການທີ່ຖືກມອບໝາຍ.
- ປະຕິບັດຕາມຂັ້ນຕອນຂອງຊຸມຊົນທີ່ໄດ້ຕົກລົງໄວ້.

# ຜູ້ຕາງໜ້າຊຸມຊົນໃດທີ່ສາມາດ ຊ່ວຍໄດ້?

ຄູອາຈານ, ພະຍາບານ, ທ່ານຫມໍ, ຜູ້ນຳທາງສາດສະໜາ, ຕຳຫຼວດ, ນັກສັງຄົມ ສົງເຄາະ, ນາຍບ້ານ, ພະນັກງານບ້ານ, ຊາວໜຸ່ມ ຫຼື ຜູ້ທີ່ມີວິຊາການທີ່ເຮັດວຽກກັບເດັກ, ທັງໝົດແມ່ນສາມາດຊ່ວຍຮັກສາໃຫ້ເດັກປອດໄພຈາກການລ່ວງລະເມີດທາງເພດ.




ການຮ່ວມມືກັນແມ່ນກະແຈສຳຄັນສູ່ຄວາມສຳເລັດໃນການປົກປ້ອງເດັກ. ຕ້ອງໃຫ້ໝັ້ນໃຈວ່າ ແມ່ນໃຜ ທີ່ເປັນເຄືອຂ່າຍຢູ່ໃນ ທ້ອງຖິ່ນຂອງທ່ານ ເພື່ອວ່າ ທ່ານ ຈະສາມາດ ດຳເນີນການໄດ້ຢ່າງຮີບດ່ວນ ແລະ ເຫມາະສົມ ເມື່ອມີເດັກຕົກຢູ່ໃນ ຄວາມສ່ຽງຂອງການຖືກລ່ວງລະເມີດທາງເພດ.



# ມີໃຜຕື່ມອີກທີ່ສາມາດຊ່ວຍໄດ້?

ທ່ານຕ້ອງການຂໍ້ມູນເພີ່ມຕື່ມບໍ? ຫຼື, ທ່ານຮູ້ຈັກສະພາບການ ບ່ອນທີ່ເດັກອາດຕົກຢູ່ໃນພາວະສ່ຽງຕໍ່ກັບການຖືກລ່ວງລະເມີດບໍ.

ກະລຸນາໂທຫາສາຍດ່ວນເດັກພາຍໃນປະເທດ

..............................................................................

ຕິດຕໍ່ເຈົ້າໜ້າທີ່ທ້ອງຖິ່ນ

..............................................................................

ຕິດຕໍ່ກັບອົງການປົກປ້ອງເດັກທີ່ເຊື່ອຖືໄດ້

..............................................................................

w: childsafetourism.org ແລະ wvi.org/asiapacific/childsafetourism
f: facebook.com/ChildSafeTourism t: twitter.com/childsafetravel

## ການທ່ອງທ່ຽວທີ່ປອດໄພສຳລັບເດັກ

ຕໍ່ຕ້ານການລ່ວງລະເມີດ

# ເອກະສານຊ້ອນທ້າຍ 2: ແບບຟອມລົງທະບຽນຂອງຜູ້ເຂົ້າຮ່ວມ

ແບບຟອມນີ້ ສາມາດນຳໃຊ້ເພື່ອບັນທຶກລາຍລະອຽດ ແລະ ຂໍ້ມູນຫຼັກກ່ຽວກັບຜູ້ເຂົ້າຮ່ວມ.

ທີ່ຕັ້ງຂອງເວທີສົນທະນາ: ______________________________

ວັນທີ ແລະ ເວລາໃນການດຳເນີນເວທີສົນທະນາ: ______________________________

| ຊື່ເຕັມ | ເພດ | ຕຳແໜ່ງ/<br>ພາລະບົດບາດ | ເບີໂທລະສັບ | ອີເມວ (ຖ້າມີ) | ລາຍເຊັນ |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |

# ເອກະສານຊ້ອນທ້າຍ 3: ແບບທົດສອບຫຼັງຝຶກອົບຮົມ

ສຳເນົາບົດສອບຖາມນີ້ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ ແລ້ວແຈກຢາຍໃນຕອນທ້າຍຂອງພາກສົນທະນາ. ຜູ້ອຳນວຍຄວາມສະດວກຄວນເກັບຄືນເອກະສານທີ່ຕອບແລ້ວ ແລະ ເກັບໄວ້ເພື່ອວິເຄາະ (ໂດຍນຳໃຊ້ຮູບແບບໃນເອກະສານຊ້ອນທ້າຍ 6) ຫຼັງຈາກການສົນທະນາ. ນອກຈາກນັ້ນ, ບົດທົດສອບແມ່ນສາມາດດຳເນີນດ້ວຍວິທີການຕອບໂຕ້ ອີງຕາມປື້ມຄູ່ມືການນຳໃຊ້ພາບສະໄລ້.

| ກະລຸນາອ່ານແຕ່ລະຄຳຖາມ ແລ້ວເລືອກເອົາຄຳຕອບ. | | ແມ່ນ | ບໍ່ແມ່ນ | ບໍ່ຮູ້ |
|---|---|---|---|---|
| 1. | ທ່ານເຂົ້າໃຈບໍ່ວ່າການລ່ວງລະເມີດທາງເພດເດັກແມ່ນຫຍັງ? | | | |
| 2. | ມີການລ່ວງລະເມີດທາງເພດເດັກ ເກີດຂຶ້ນໃນຊຸມຊົນຂອງເຈົ້າບໍ່? (ເມືອງ, ແຂວງ, ປະເທດ…..) | | | |
| 3. | ມີພຽງເດັກນ້ອຍຜູ້ຍິງເທົ່ານັ້ນບໍ່ທີ່ມີຄວາມສ່ຽງຕໍ່ການຖືກລ່ວງລະເມີດທາງເພດ? | | | |
| 4. | ໂດຍປົກກະຕິແລ້ວການລ່ວງລະເມີດທາງເພດເດັກມັກເກີດຂຶ້ນທັນທີໂດຍຄົນແປກໜ້າທີ່ບໍ່ຮູ້ຈັກບໍ? | | | |
| 5. | ເດັກນ້ອຍມີຄວາມຫຍຸ້ງຍາກທີ່ຈະບອກຜູ້ໃຫຍ່ກ່ຽວກັບການລ່ວງລະເມີດບໍ່? | | | |
| 6. | ທ່ານຮູ້ຈັກເບິ່ງສັນຍານເຕືອນວ່າ ເດັກອາດມີຄວາມສ່ຽງຕໍ່ການລ່ວງລະເມີດບໍ່? | | | |
| 7. | ທ່ານຮູ້ຈັກວິທີການດຳເນີນບໍ່ຖ້າວ່າທ່ານໄດ້ຮັບຂໍ້ມູນກ່ຽວກັບເດັກທີ່ມີຄວາມສ່ຽງ ຫຼື ຖືກລ່ວງລະເມີດ? | | | |
| 8. | ທ່ານຮູ້ຈັກບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ມອບໝາຍ ເພື່ອລາຍງານກໍລະນີທີ່ອາດມີການລ່ວງລະເມີດບໍ? (ຖ້າວ່າຮູ້, ຂຽນຊື່ ແລະ/ເບີໂທລະສັບໃສ່ບ່ອນນີ້<br>……………………………………………………………………………………<br>…………………………………………………………………………………… | | | |
| 9. | ໃນຖານະທີ່ເປັນຜູ້ຕາງໜ້າຊຸມຊົນ, ທ່ານມີຄວາມຮັບຜິດຊອບໃນການປ້ອງກັນເດັກໃຫ້ປອດໄພ ຈາກການລ່ວງລະເມີດທາງເພດບໍ່? | | | |

# ເອກະສານຊ້ອນທ້າຍ 4: ແບບທົດສອບກ່ອນຝຶກອົບຮົມ

ສຳເນົາບົດສອບຖາມນີ້ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ ແລ້ວແຈກຢາຍໃນຕອນເລີ່ມຕົ້ນຂອງພາກສົນທະນາ. ຜູ້ອຳນວຍຄວາມສະດວກຄວນເກັບຄືນເອກະສານທີ່ຕອບແລ້ວ ແລະ ເກັບໄວ້ເພື່ອວິເຄາະ (ໂດຍນຳໃຊ້ຮູບແບບໃນເອກະສານຊ້ອນທ້າຍ 6) ຫຼັງຈາກການສົນທະນາ. ນອກຈາກນັ້ນ, ບົດທົດສອບແມ່ນສາມາດດຳເນີນດ້ວຍວິທີການຕອບໂຕ້ ອີງຕາມປຶ້ມຄູ່ມືການນຳໃຊ້ແຜ່ນສະໄລ້.

| ກະລຸນາອ່ານແຕ່ລະຄຳຖາມ ແລ້ວເລືອກເອົາຄຳຕອບ. | | ແມ່ນ | ບໍ່ແມ່ນ | ບໍ່ຮູ້ |
|---|---|---|---|---|
| 1. | ທ່ານເຂົ້າໃຈບໍ່ວ່າການລ່ວງລະເມີດທາງເພດເດັກແມ່ນຫຍັງ? | | | |
| 2. | ມີການລ່ວງລະເມີດທາງເພດເດັກ ເກີດຂຶ້ນໃນຊຸມຊົນຂອງເຈົ້າບໍ່? (ເມືອງ, ແຂວງ, ປະເທດ.....) | | | |
| 3. | ມີພຽງເດັກນ້ອຍຜູ້ຍິງເທົ່ານັ້ນບໍ່ທີ່ມີຄວາມສ່ຽງຕໍ່ການຖືກລ່ວງລະເມີດທາງເພດ? | | | |
| 4. | ໂດຍປົກກະຕິແລ້ວການລ່ວງລະເມີດທາງເພດເດັກມັກເກີດຂຶ້ນທັນທີໂດຍຄົນແປກໜ້າທີ່ບໍ່ຮູ້ຈັກບໍ? | | | |
| 5. | ເດັກນ້ອຍມີຄວາມຫຍຸ້ງຍາກທີ່ຈະບອກຜູ້ໃຫຍ່ກ່ຽວກັບການລ່ວງລະເມີດບໍ່? | | | |
| 6. | ທ່ານຮູ້ຈັກເບິ່ງສັນຍານເຕືອນວ່າ ເດັກອາດມີຄວາມສ່ຽງຕໍ່ການລ່ວງລະເມີດບໍ່? | | | |
| 7. | ທ່ານຮູ້ຈັກວິທີການດຳເນີນບໍ່ຖ້າວ່າທ່ານໄດ້ຮັບຂໍ້ມູນກ່ຽວກັບເດັກທີ່ມີຄວາມສ່ຽງ ຫຼື ຖືກລ່ວງລະເມີດ? | | | |
| 8. | ທ່ານຮູ້ຈັກບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ມອບໝາຍ ເພື່ອລາຍງານກໍລະນີທີ່ອາດມີການລ່ວງລະເມີດບໍ? (ຖ້າຮູ້, ໃຫ້ຂຽນຊື່ ແລະ/ຫຼື ເບີໂທລະສັບໃສ່ບ່ອນນີ້<br>..........................................................................................<br>.......................................................................................... | | | |
| 9. | ໃນຖານະທີ່ເປັນຜູ້ຕາງໜ້າຊຸມຊົນ, ທ່ານມີຄວາມຮັບຜິດຊອບໃນການປ້ອງກັນເດັກໃຫ້ປອດໄພ ຈາກການລ່ວງລະເມີດທາງເພດບໍ່? | | | |

# ເອກະສານຊ້ອນທ້າຍ 5: ບັດຕອບຄຳຖາມແບບທົດສອບ ກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ



ບັດເຫຼົ່ານີ້ແມ່ນສາມາດນຳໃຊ້ ເພື່ອດຳເນີນການທົດສອບກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ ໃນລັກສະນະຕອບໂຕ້ຕອບກັນໄດ້. ຜູ້ເຂົ້າຮ່ວມແຕ່ລະຄົນຄວນໄດ້ຮັບບັດດັ່ງກ່າວທີ່ມີ ('ໝາຍຕິກເອົາ' ອັນໜຶ່ງ, 'ໝາຍໄຂ່ວ' ອັນໜຶ່ງ ແລະ 'ໝາຍຖາມ' ອັນໜຶ່ງ). ຜູ້ອຳນວຍຄວາມສະດວກ ສາມາດຖາມຄຳຖາມຢູ່ໃນ ເອກະສານຊ້ອນທ້າຍ 3 ແລະ ຜູ້ເຂົ້າຮ່ວມສາມາດສະແດງ ຄຳຕອບຂອງພວກເຂົາໂດຍການນຳໃຊ້ບັດ (ແມ່ນ, ບໍ່ແມ່ນ, ຫຼື ບໍ່ຮູ້). ຈຳນວນ ແລະ ປະເພດຂອງຄຳຕອບ ແມ່ນຄວນບັນທຶກໄວ້ໃນແບບຟອມທີ່ກຳນົດໃນ ເອກະສານຊ້ອນທ້າຍ 6.



# ເອກະສານຊ້ອນທ້າຍ 6: ແບບຟອມວິເຄາະແບບທົດສອບ ກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ

ບົດທົດສອບກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ ແມ່ນສາມາດດຳເນີນໃນຮູບແບບຂຽນເປັນລາຍລັກອັກສອນ ຫຼື ແບບປາກເປົ່າ. ຜູ້ອຳນວຍຄວາມສະດວກສາມາດນຳໃຊ້ ແບບຟອມນີ້ ເພື່ອບັນທຶກຄຳຕອບປາກເປົ່າ ຫຼື ສາມາດນຳໃຊ້ພາຍຫຼັງການຝຶກອົບຮົມ ເພື່ອຮວບຮວມ ແລະ ວິເຄາະຄຳຕອບທີ່ຂຽນເປັນລາຍລັກອັກສອນ. ຫຼັງຈາກນັ້ນກໍ່ສາມາດລວມບົດສະຫລຸບເຂົ້າໃນເອກະສານ ຊ້ອນທ້າຍ 9: ແບບຟອມບົດລາຍງານຫຼັງການຝຶກອົບຮົມ.

| ອ່ານຄຳຖາມລຸ່ມນີ້ ແລະ ເລືອກຄຳຕອບ. | | *ຈົ່ງໃສ່ຈຳນວນຜູ້ຕອບແຕ່ລະຂໍ້ ຂ້າງລຸ່ມນີ້* | | | | | |
|---|---|---|---|---|---|---|---|
| | | **ແບບທົດສອບ** ຝຶກອົບຮົມ ເລີ່ມການສົນທະນາ | | | **ແບບທົດສອບ** ຝຶກອົບຮົມຫລັງ ການສົນທະນາ | | |
| | | ✓ | X | ? | ✓ | X | ? |
| 1. | ທ່ານເຂົ້າໃຈຄວາມໝາຍຂອງການລ່ວງລະເມີດທາງເພດ ເດັກບໍ່? | | | | | | |
| 2. | ການລ່ວງລະເມີດທາງເພດເດັກເກີດຂຶ້ນຢູ່ໃນຊຸມຊົນຂອງທ່ານ ບໍ່? (ເມືອງ, ແຂວງ, ປະເທດ….) | | | | | | |
| 3. | ມີພຽງເດັກນ້ອຍຜູ້ຍິງເທົ່ານັ້ນບໍ່ທີ່ມີຄວາມສ່ຽງຕໍ່ການຖືກລ່ວງ ລະເມີດທາງເພດ? | | | | | | |
| 4. | ໂດຍປົກກະຕິແລ້ວການລ່ວງລະເມີດທາງເພດເດັກມັກເກີດຂຶ້ນ ທັນທີ ໂດຍຄົນແປກໜ້າທີ່ບໍ່ຮູ້ຈັກບໍ? | | | | | | |
| 5. | ເດັກນ້ອຍມີຄວາມຫຍຸ້ງຍາກທີ່ຈະບອກຜູ້ໃຫຍ່ກ່ຽວກັບການ ລ່ວງລະເມີດບໍ່? | | | | | | |
| 6. | ທ່ານຮູ້ຈັກເບິ່ງສັນຍານເຕືອນວ່າ ເດັກອາດມີຄວາມສ່ຽງຕໍ່ການ ລ່ວງລະເມີດບໍ່? | | | | | | |
| 7. | ທ່ານຮູ້ຈັກວິທີການດຳເນີນບໍ່ຖ້າວ່າທ່ານໄດ້ຮັບຂໍ້ມູນກ່ຽວກັບເດັກທີ່ມີ ຄວາມສ່ຽງ ຫຼື ຖືກລ່ວງລະເມີດ? | | | | | | |
| 8. | ທ່ານຮູ້ຈັກບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ມອບໝາຍ ເພື່ອລາຍ ງານກໍລະນີທີ່ອາດມີການລ່ວງລະເມີດບໍ? (ຖ້າຮູ້, ຂຽນຊື່ ແລະ/ ຫຼື ເບີໂທລະສັບໃສ່ບ່ອນນີ້ ....................................................................... ....................................................................... | | | | | | |
| 9. | ໃນຖານະທີ່ເປັນຜູ້ຕາງໜ້າຊຸມຊົນ, ທ່ານມີຄວາມຮັບຜິດຊອບໃນ ການປ້ອງກັນເດັກໃຫ້ປອດໄພ ຈາກການລ່ວງລະເມີດທາງເພດບໍ່? | | | | | | |

# ເອກະສານຊ້ອນທ້າຍ 7: ກໍລະນີສຶກສາ ສໍາລັບ ຜູ້ຕາງໜ້າຊຸມຊົນ

ຜູ້ອໍານວຍຄວາມສະດວກຄວນທົບທວນກໍລະນີສຶກສາຕ່າງໆ ແລະ ດັດປັບຕາມຄວາມຈໍາເປັນ ເພື່ອໃຫ້ສອດຄ່ອງ ກັບວັດທະນະທໍາ ແລະ ບັນຫາທີ່ປະເຊີນໂດຍຊຸມຊົນສະເພາະ. ຄວນໃຫ້ສໍາເນົາເອກະສານກ່ຽວກັບກໍລະນີສຶກສາເຫຼົ່ານີ້ ກ່ອນເລີ່ມເວທີການສົນທະນາ. ແບ່ງຜູ້ເຂົ້າຮ່ວມເປັນກຸ່ມນ້ອຍ. ປະສົມແຕ່ລະກຸ່ມໃຫ້ມີຕົວແທນຈາກຫຼາຍຂະແໜງການ (ຕົວຢ່າງ: ຂະແໜງການສຶກສາ, ສາທາລະນະສຸກ, ນັກສັງຄົມສົງເຄາະ, ນັກກົດໝາຍ). ແຈກຢາຍສໍາເນົາກ່ຽວກັບໜຶ່ງກໍລະນີສຶກສາ ສໍາລັບແຕ່ລະກຸ່ມ. ໃຫ້ແຕ່ລະກຸ່ມປຶກສາຫາລືກັນກ່ຽວກັບກໍລະນີສຶກສາ ແລະ ຕອບຄໍາຖາມທີ່ໃຫ້ໃນເອກະສານ. ຖ້າມີເວລາພຽງພໍ, ຜູ້ອໍານວຍຄວາມສະດວກ ສາມາດເອົາກໍລະນີສຶກສາອີກອັນໜຶ່ງເພີ່ມເຕີມໃຫ້ແຕ່ລະກຸ່ມ.

✂

**ກໍລະນີສຶກສາ 1**

ວາງບໍ່ດົນມານີ້, ພົບເຫັນວ່າເດັກນ້ອຍອາຍຸ 12 ປີ ໃນຊຸມຊົນຂອງເຈົ້າໄດ້ຕົກເປັນຜູ້ເຄາະຮ້າຍຂອງການຖືກລ່ວງລະເມີດທາງເພດ. ໃນຕົວຈິງແລ້ວ, ເດັກຄົນນີ້ໄດ້ຖືກພະນັກງານແພດຢູ່ໃນທ້ອງຖິ່ນນັ້ນລ່ວງລະເມີດທາງເພດມາໄດ້ ຫຼາຍກວ່າ 5 ປີ ແລ້ວ. ໃນລະຫວ່າງການດໍາເນີນຄະດີຕ່າງໆໃນຂັ້ນສານ, ຜູ້ຕາງໜ້າຊຸມຊົນ (ລວມທັງ: ຄູອາຈານ, ແພດໝໍ ແລະ ນັກສັງຄົມສົງເຄາະ) ໄດ້ເວົ້າວ່າພວກເຂົາເຈົ້າສົງໄສຕໍ່ເຫດການດັ່ງກ່າວເປັນເວລາໃດໜຶ່ງແລ້ວ, ແຕ່ພວກເຂົາເຈົ້າບໍ່ແນ່ໃຈວ່າຈະເຮັດແນວໃດ ແລະ ພວກເຂົາບໍ່ຕ້ອງການຢາກແຊກແຊງເລື່ອງນີ້.

1. *ໃນຖານະທີ່ທ່ານເປັນຜູ້ຕາງໜ້າຊຸມຊົນ, ທ່ານຄວນເຮັດຫຍັງຖ້າທ່ານສົງໄສວ່າເດັກຕົກເປັນຜູ້ເຄາະຮ້າຍຂອງການຖືກລ່ວງລະເມີດທາງເພດ?*

2. *ໃນຖານະທີ່ທ່ານເປັນຜູ້ຕາງໜ້າຊຸມຊົນ, ທ່ານຈະເຮັດວຽກຮ່ວມກັນແນວໃດເພື່ອຮັບມືກັບ ບັນຫາກໍລະນີສົງໄສວ່າເດັກຕົກເປັນຜູ້ເຄາະຮ້າຍຂອງການຖືກລ່ວງລະເມີດທາງເພດ?*

✂

**ກໍລະນີສຶກສາ 2**

ທ່ານເປັນຜູ້ອໍານວຍການໂຮງຮຽນ ແລະ ໄດ້ຮັບການຕໍານິສົ່ງຂ່າວຈາກຄູອາຈານ ແລະ ຜູ້ປົກຄອງ ຂອງນັກຮຽນ ກ່ຽວກັບພຶດຕິກໍາຂອງ ເດັກຊາຍອາຍຸ 15 ປີ ຢູ່ໃນໂຮງຮຽນ. ຄູອາຈານລາຍງານວ່າ ເດັກຊາຍຜູ້ນັ້ນມັກຂາດໂຮງຮຽນ ແລະ ເມື່ອລາວມາໂຮງຮຽນ, ລາວສ້າງສຽງລົບກວນ, ສ້າງຄວາມວຸ້ນວາຍ ແລະ ຍາກທີ່ຈະຄວບຄຸມ. ຜູ້ປົກຄອງຂອງເພື່ອນຮ່ວມຫ້ອງບາງຄົນຂອງລາວ ຕໍານິວ່າລາວມີອິດທິພົນທີ່ບໍ່ດີ ຕໍ່ລູກຫຼານຂອງພວກເຂົາ. ຢ່າງໜ້ອຍມີຄູໜຶ່ງຄົນທີ່ຕໍານິເດັກຊາຍຜູ້ນີ້ ກ່ຽວກັບການຫາຍໄປຂອງອຸປະກອນຢູ່ໃນຫ້ອງຮຽນ. ຜູ້ໃຫ້ຄໍາປຶກສາຂອງໂຮງຮຽນ ໄດ້ລາຍງານໃຫ້ທ່ານຊາບວ່າ ເດັກຊາຍຜູ້ນັ້ນໄດ້ເປີດເຜີຍຂໍ້ມູນວ່າອາຈານຜູ້ຊາຍຄົນໜຶ່ງ ຢູ່ໃນໂຮງຮຽນ ໄດ້ເອົາຮູບໂປ້ຢູ່ໃນໂທລະສັບມືຖືໃຫ້ລາວເບິ່ງ ແລະ ພະຍາຍາມຈັບບາຍລາວ. ໂດຍອີງໃສ່ປະຫວັດທີ່ບໍ່ດີຂອງເດັກຊາຍຜູ້ນັ້ນ, ທ່ານບໍ່ໝັ້ນໃຈວ່າ ລາວໄດ້ບອກຄວາມຈິງ ຫຼື ບໍ່.

1. *ທ່ານຄວນປະຕິບັດຕາມຂັ້ນຕອນຄືແນວໃດ?*

2. *ທ່ານຈະສາມາດປັບປຸງຂັ້ນຕອນໃນການຮັບມືກັບກໍລະນີສົງໃສກ່ຽວກັບການລ່ວງລະເມີດທາງເພດເດັກ ຢູ່ໃນໂຮງຮຽນແນວໃດ?*

**ກໍລະນີສຶກສາ 3**

ທ່ານ ເປັນຜູ້ບໍລິຫານ ສູນເດັກນ້ອຍ ແລະ ໄວໜຸ່ມທ້ອງຖິ່ນ ທີ່ກຳລັງອາໄສ ແລະ ເຮັດວຽກຢູ່ຕາມທ້ອງຖະໜົນ. ເປັນຫຼາຍປີແລ້ວທີ່ ທ່ານໄດ້ຮັບເອົາອາສາສະໝັກຈຳນວນໜຶ່ງເພື່ອຊ່ວຍວຽກຢູ່ໃນສູນ ແລະ ໃຊ້ເວລາກັບເດັກນ້ອຍ. ອາສາສະໝັກຍັງໄດ້ບໍລິຈາກໃຫ້ສູນ ແລະ ອັນນີ້ເປັນສິ່ງສຳຄັນສຳລັບທ່ານເພື່ອຮັກສາໃຫ້ສູນ ໄດ້ດຳເນີນຕໍ່ໄປ. ທ່ານປະກົດເຫັນວ່າ ມີອາສາສະໝັກຊາຍຄົນໜຶ່ງ ທີ່ມີຄວາມສະໜິດສະໜົມເປັນພິເສດກັບເດັກຍິງຄົນໜຶ່ງທີ່ເຂົ້າມາຢ້ຽມຢາມສູນ ແລະ ທ່ານຍັງໄດ້ຮຽນຮູ້ອີກວ່າ ເດັກຍິງຄົນນັ້ນໄດ້ໃຊ້ເວລາກັບອາສາສະໝັກ ຢູ່ໃນບ້ານພັກຂອງລາວ.

1. *ທ່ານຄວນປະຕິບັດຕາມຂັ້ນຕອນຄືແນວໃດ?*

2. *ທ່ານສາມາດປັບປຸງຂັ້ນຕອນຕ່າງໆຢູ່ໃນສູນຂອງທ່ານແນວໃດ ເພື່ອຮັບປະກັນວ່າບໍ່ໃຫ້ເດັກຕິດຕໍ່ພົວພັນ ກັບຜູ້ໃຫຍ່ 'ທີ່ບໍ່ຮູ້ປະຫວັດ (ເຊັ່ນວ່າ ຜູ້ໃຫຍ່ທີ່ບໍ່ໄດ້ຜ່ານການກວດສອບປະຫວັດການເຮັດວຽກ ແລະ ປະຫວັດທາງດ້ານອາດຊະຍາກຳເພື່ອໃຫ້ເໝາະສົມເຮັດວຽກກັບເດັກນ້ອຍ)?*

3. *ຂັ້ນຕອນເຫຼົ່ານີ້ຈະໃຊ້ໄດ້ກັບໃຜແດ່?*

**ກໍລະນີສຶກສາ 4**

ໃນຂະນະທີ່ອຸດສາຫະກຳການທ່ອງທ່ຽວໄດ້ຂະຫຍາຍຕົວຢູ່ໃນຊຸມຊົນຂອງທ່ານ ແລະ ພວກເຮົາສັງເກດເຫັນວ່າຈຳນວນເດັກນ້ອຍທີ່ອອກມາຢູ່ໃນສະຖານທີ່ສາທາລະນະຕ່າງໆແມ່ນຫຼາຍຂຶ້ນ. ແທນທີ່ເດັກນ້ອຍຈະໄປໂຮງຮຽນ, ເດັກນ້ອຍເຫຼົ່ານັ້ນ ຊໍ້າພັດເຮັດວຽກເປັນຄົນຂາຍເຄື່ອງຍ່ອຍຕາມສາທາລະນະ (ຂາຍເຄື່ອງທີ່ລະນຶກ ແລະ ອາຫານເບົາໃຫ້ແກ່ນັກທ່ອງທ່ຽວ) ແລະ ບາງກຸ່ມກໍຂໍທານນຳນັກທ່ອງທ່ຽວຕ່າງປະເທດ.

1. *ອະທິບາຍຄວາມສ່ຽງຕ່າງໆຕໍ່ກັບເດັກຢູ່ໃນສະຖານະການດັ່ງກ່າວ*

2. *ໃນຖານະທີ່ທ່ານເປັນຕົວແທນຊຸມຊົນ, ທ່ານສາມາດເຮັດຫຍັງເພື່ອແກ້ໄຂບັນຫາດັ່ງກ່າວ?*

**ກໍລະນີສຶກສາ 5**

ໃນໄລຍະຜ່ານມາ, ທ່ານຍັງບໍ່ໄດ້ຍິນ ກ່ຽວກັບເລື່ອງການລ່ວງລະເມີດທາງເພດເດັກຢູ່ໃນຊຸມຊົນຂອງທ່ານ. ແຕ່ດຽວນີ້, ທ່ານຮູ້ ແລະ ໄດ້ຍິນບັນຫາດັ່ງກ່າວເພີ່ມຂຶ້ນໃນທົ່ວໂລກ ແລະ ທ່ານໄດ້ອ່ານຂ່າວສານຕ່າງໆທີ່ບອກວ່າ ມັນມີການລ່ວງລະເມີດທາງເພດເດັກຢູ່ໃນຊຸມຊົນທີ່ໃກ້ຄຽງກັບຊຸມຊົນຂອງທ່ານ. ທ່ານຕ້ອງການສ້າງເງື່ອນໄຂສະພາບແວດລ້ອມຕ່າງໆເພື່ອປົກປ້ອງ ແລະ ຊ່ວຍເຫຼືອໃນຊຸມຊົນຂອງທ່ານໃຫ້ປ້ອງກັນ ການລ່ວງລະເມີດທາງເພດເດັກ.

1. *ຢູ່ກຸ່ມຂອງທ່ານ (ຊຶ່ງປະກອບມີ, ຜູ້ຕາງໜ້າຈາກຂະແໜງ ສຶກສາ, ສາທາລະນະສຸກ, ສັງຄົມສົງເຄາະ ແລະ ກົດໝາຍ, ອື່ນໆ) ໃຫ້ສົນທະນາບັນຫາຕ່າງໆເພື່ອຫາວິທີປ້ອງກັນ ການລ່ວງລະເມີດທາງເພດເດັກ*

2. *ສົນທະນາວ່າພວກທ່ານຈະຮ່ວມມືກັນແນວໃດກັບຊຸມຊົນອື່ນ ເພື່ອດຳເນີນການສົ່ງເສີມການປົກປ້ອງເດັກ.*

✂

**ກໍລະນີສຶກສາ 6**

ອຸດສາຫະກຳການທ່ອງທ່ຽວໄດ້ຂະຫຍາຍຕົວໃນຊຸມຊົນຂອງທ່ານມີນັກທ່ອງທ່ຽວໄດ້ເຂົ້າມາຢ້ຽມຢາມຊຸມຊົນ ຂອງພວກທ່ານ, ພວກທ່ານໄດ້ເຫັນວ່າ ເສດຖະກິດມີການຂະຫຍາຍຕົວ. ແຕ່ວ່າ, ພວກທ່ານໄດ້ສັງເກດເຫັນວ່ານັກທ່ອງທ່ຽວໂດຍສະເພາະແມ່ນເພດຊາຍໄດ້ຕີສະໜິດສະໜົມກັບແມ່ຍິງໜຸ່ມທ້ອງຖິ່ນ. ປະຈຸບັນ, ແມ່ຍິງໜຸ່ມບາງຄົນອາໄສຢູ່ກັບຊາຍຕ່າງປະເທດ. ທ່ານຍັງໄດ້ຍິນຈາກການ ກະຊິບວ່າ 'ບັນດາແຟນສາວ' ໄດ້ຊັກຊວນເດັກຈາກຊຸມຊົນຂອງທ່ານ ເຂົ້າໄປພັກນຳພວກເຂົາຢູ່ບ້ານ.

1. *ຊຸມຊົນຄວນເຮັດຫຍັງເພື່ອຮັກສາເດັກໃຫ້ປອດໄພຈາກການຖືກລ່ວງລະເມີດທາງເພດ ໂດຍນັກທ່ອງທ່ຽວຕ່າງປະເທດ?*

2. *ເຈົ້າມີບົດບາດແນວໃດເພື່ອປະກອບສ່ວນເຂົ້າໃນການປ້ອງກັນເດັກໃຫ້ປອດໄພຈາກການລ່ວງລະເມີດທາງເພດຈາກນັກທ່ອງທ່ຽວ?*

✂

**ກໍລະນີສຶກສາ 7**

ແມ່ໝ້າຍຜູ້ໜຶ່ງ ຢູ່ໃນຊຸມຊົນຂອງທ່ານມີຄວາມຮູ້ບຸນຄຸນ ໃນການຊ່ວຍເຫຼືອດ້ານການເງິນຈາກ ຄົນຕ່າງປະເທດຄູ່ໜຶ່ງໃນຊຸມປີຜ່ານມາ, ຊຶ່ງໄດ້ຊ່ວຍໃຫ້ລາວສາມາດໃຫ້ທີ່ຢູ່, ເບິ່ງແຍງ ແລະ ໃຫ້ການສຶກສາແກ່ລູກຂອງລາວ. ແມ່ຄົນນັ້ນໄດ້ບອກໃຫ້ທ່ານຮູ້ວ່າ ຄູ່ຜົວເມຍດັ່ງກ່າວ ໄດ້ສະເໜີ ໃຫ້ລາວເອົາລູກກົກຂອງລາວໄປຢູ່ 'ສະຖານລ້ຽງເດັກກຳພ້າ' ຢູ່ໃນເມືອງຫຼວງ ເພື່ອໃຫ້ລູກລາວສາມາດເຂົ້າເຖິງການສຶກສາ ແລະ ໂອກາດທີ່ດີກ່ວາ.

1. *ໃຫ້ອະທິບາຍຄວາມສ່ຽງຕ່າງໆຕໍ່ເດັກໃນສະພາບການນີ້.*

2. *ໃນຖານະທີ່ທ່ານເປັນຕົວແທນຊຸມຊົນ, ທ່ານຈະເຮັດແນວໃດ ເພື່ອຊ່ວຍໃຫ້ພໍ່ແມ່ ແລະ ຜູ້ເບິ່ງແຍງ ເຂົ້າໃຈວ່າ ສ່ວນໃຫຍ່ແລ້ວ, ຜູ້ທີ່ສາມາດເບິ່ງແຍງເດັກໄດ້ດີທີ່ສຸດແມ່ນຄອບຄົວຂອງເຂົາເຈົ້າ?*

# ເອກະສານຊ້ອນທ້າຍ 8: ແບບຟອມ ຄວາມເຫັນຂອງຂ້ອຍ

ກະກຽມສຳເນົາແບບຟອມນີ້ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ. ຄວນແຈກຢາຍສຳເນົາດັ່ງກ່າວໃຫ້ກັບຜູ້ເຂົ້າຮ່ວມໃນຕອນສະຫຼຸບການຝຶກອົບຮົມ. ອີກທາງເລືອກໜຶ່ງແມ່ນຜູ້ອຳນວຍຄວາມສະດວກສາມາດຖາມຜູ້ເຂົ້າຮ່ວມໂດຍ ຖາມຄຳຖາມງ່າຍໆເຊັ່ນ: ພາກໃດແມ່ນພາກທີ່ມີປະໂຫຍດຫລາຍທີ່ສຸດຂອງການຝຶກອົບຮົມນີ້? ພວກຂ້າພະເຈົ້າຄວນເຮັດສິ່ງໃດແດ່ເພື່ອປັບປຸງການຝຶກອົບຮົມນີ້? ກະລຸນາຂຽນບອກວຽກງານສິ່ງໜຶ່ງທີ່ທ່ານຈະເຮັດແຕກຕ່າງກວ່າເກົ່າອັນເນື່ອງມາຈາກການຝຶກອົບຮົມນີ້?

## ຄວາມເຫັນ ຂອງຂ້ອຍ

ພວກຂ້າພະເຈົ້າເຫັນຄຸນຄ່າຂອງຄຳຄິດເຫັນຂອງທ່ານ!

ກະລຸນາສະແດງຄຳເຫັນຂອງທ່ານຢ່າງສັດຊື່ເພື່ອຊ່ວຍຂ້າພະເຈົ້າປັບປຸງວຽກງານປົກປ້ອງເດັກ.

1. **ທ່ານເຮັດວຽກໃນຂະແໜງການໃດ?**

○ ລັດຖະບານ ○ ທຸລະກິດ ○ ຊຸມຊົນ

○ ອື່ນໆ, ກະລຸນາອະທິບາຍ:

2. **ເພດຂອງທ່ານແມ່ນຫຍັງ?**

○ ເພດຍິງ ○ ເພດຊາຍ ○ ອື່ນໆ

3. **ກະລຸນາຈັດອັນດັບດັ່ງຕໍ່ໄປນີ້:**

| | | | |
|---|---|---|---|
| ຜູ້ອຳນວຍຄວາມສະດວກອະທິບາຍແຈ້ງ ແລະ ບົດຮຽນກໍເຂົ້າໃຈ ແລະ ຕິດຕາມໄດ້ງ່າຍ | ○ ເຫັນດີ | ○ ເປັນກາງ | ○ ບໍ່ເຫັນດີ |
| ເອກະສານຝຶກອົບຮົມເປັນປະໂຫຍດ. | ○ ເຫັນດີ | ○ ເປັນກາງ | ○ ບໍ່ເຫັນດີ |
| ການສົນທະນາໄດ້ຍົກລະດັບຄວາມເຂົ້າໃຈຂອງຂ້ອຍກ່ຽວກັບ ບັນຫານີ້ | ○ ເຫັນດີ | ○ ເປັນກາງ | ○ ບໍ່ເຫັນດີ |
| ການສົນທະນາໄດ້ຊຸກຍູ້ໃຫ້ຂ້ອຍ ມີສ່ວນຮ່ວມຫຼາຍຂຶ້ນໃນການປົກປ້ອງເດັກ | ○ ເຫັນດີ | ○ ເປັນກາງ | ○ ບໍ່ເຫັນດີ |

4. ພາກສ່ວນໃດຂອງເວທີສົນທະນາ ຈະເປັນປະໂຫຍດຫຼາຍທີ່ສຸດ ສຳລັບວຽກງານ/ຊີວິດປະຈຳວັນຂອງທ່ານ?

..........................................................................

..........................................................................

..........................................................................

..........................................................................

..........................................................................

5. ພວກເຮົາຄວນເຮັດແນວໃດເພື່ອປັບປຸງເວທີການສົນທະນານີ້?

..........................................................................

..........................................................................

..........................................................................

..........................................................................

..........................................................................

6. ກະລຸນາຂຽນສິ່ງໜຶ່ງທີ່ທ່ານຈະເຮັດແຕກຕ່າງຈາກເມື່ອກ່ອນ ພາຍຫຼັງທີ່ທ່ານໄດ້ຮັບຂໍ້ມູນ ແລະ ແຫຼ່ງຂ່າວຕ່າງໆຈາກເວທີການສົນທະນານີ້.

..........................................................................

..........................................................................

..........................................................................

..........................................................................

..........................................................................

7. ຄຳຄິດເຫັນອື່ນໆ?

..........................................................................

..........................................................................

..........................................................................

..........................................................................

..........................................................................

# ເອກະສານຊ້ອນທ້າຍ 9: ແບບຟອມບົດລາຍງານຫຼັງການຝຶກອົບຮົມ.

ຄວນນຳໃຊ້ແບບຟອມນີ້ ເພື່ອຮວບຮວມ ເຄື່ອງມືການຕິດຕາມ ແລະ ປະເມີນຜົນແບບກະທັດຮັດ ທີ່ຖືກນຳໃຊ້ໃນໄລຍະ ເວທີການສົນທະນາ. ຜູ້ອຳນວຍຄວາມສະດວກຄວນປະກອບແບບຟອມໃຫ້ສົມບູນ ແລະ ແລກປ່ຽນກັບ ຜູ້ບໍລິຫານ/ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອເປັນການຕິດຕາມຜົນຂອງການຮຽນຮູ້ ແລະ ນຳໄປປັບປຸງກິດຈະກຳໃນອະນາຄົດ.

**1. ແບບທົດສອບກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ**

*ລວມບົດສະຫລຸບຂອງ* ເອກະສານຊ້ອນທ້າຍ 6: *ແບບຟອມວິເຄາະ ບົດທົດສອບກ່ອນຝຶກອົບຮົມ ແລະ ຫຼັງຝຶກອົບຮົມ.*

**2. ຄວາມເຫັນຂອງຂ້ອຍ**

*ສັງລວມ ແບບຟອມ 'ຄວາມເຫັນຂອງຂ້ອຍ' ທີ່ໄດ້ຮັບ ເພື່ອຕື່ມໃສ່ຕາຕະລາງລຸ່ມນີ້.*

1. ການຈັດແບ່ງຕາມຂະແໜງການ ແລະ ເພດ

| ຂະແໜງການ | ຈຳນວນລວມທັງໝົດ | ລວມທັງໝົດ - ເພດຍິງ | ລວມທັງໝົດ - ເພດຊາຍ | ລວມທັງໝົດ- ອື່ນໆ |
|---|---|---|---|---|
| **ລັດຖະບານ** | | | | |
| **ທຸລະກິດ** | | | | |
| **ຊຸມຊົນ** | | | | |
| **ອື່ນໆ** | | | | |

2. ການຈັດອັນດັບ

| | ເຫັນດີ # ແລະ % | | ເປັນກາງ # ແລະ % | | ບໍ່ເຫັນດີ # ແລະ % | |
|---|---|---|---|---|---|---|
| ຜູ້ອຳນວຍຄວາມສະດວກອະທິບາຍແຈ້ງ ແລະ ບົດຮຽນກໍເຂົ້າໃຈ ແລະ ຕິດຕາມໄດ້ງ່າຍ | | | | | | |
| ເອກະສານຝຶກອົບຮົມເປັນປະໂຫຍດ. | | | | | | |
| ການສົນທະນາໄດ້ຍົກລະດັບຄວາມເຂົ້າໃຈຂອງຂ້ອຍກ່ຽວກັບ ບັນຫານີ້ | | | | | | |
| ການສົນທະນາໄດ້ຊຸກຍູ້ໃຫ້ຂ້ອຍ ມີສ່ວນຮ່ວມຫຼາຍຂຶ້ນ ໃນການປົກປ້ອງເດັກ | | | | | | |

3. ເລືອກຂຽນຄຳຕອບຕ່າງໆຕໍ່ຄຳຖາມ “ພາກສ່ວນໃດຂອງເວທີສົນທະນາ ຈະເປັນປະໂຫຍດຫຼາຍທີ່ສຸດ ສຳລັບວຽກງານ/ຊີວິດປະຈຳວັນຂອງທ່ານ?”

..........................................................................

..........................................................................

..........................................................................

..........................................................................

..........................................................................

4. ເລືອກຂຽນຄຳຕອບຕ່າງໆຕໍ່ຄຳຖາມ “ພວກເຮົາຄວນເຮັດແນວໃດເພື່ອປັບປຸງເວທີການສົນທະນານີ້?”

..........................................................................

..........................................................................

..........................................................................

..........................................................................

..........................................................................

5. ເລືອກຂຽນຄຳຕອບຕ່າງໆ ຕໍ່ຄຳຖາມ "ກະລຸນາຂຽນສິ່ງໜຶ່ງທີ່ທ່ານຈະເຮັດແຕກຕ່າງຈາກເມື່ອກ່ອນ ພາຍຫຼັງທີ່ທ່ານໄດ້ຮັບຂໍ້ມູນ ແລະ ແຫຼ່ງຂ່າວຕ່າງໆຈາກ ເວທີການສົນທະນານີ້”

..........................................................................

..........................................................................

..........................................................................

..........................................................................

..........................................................................

6. ຄຳຄິດເຫັນອື່ນໆ

..........................................................................

..........................................................................

..........................................................................

..........................................................................

..........................................................................

### 3. ຂໍ້ສັງເກດຂອງຜູ້ອຳນວຍຄວາມສະດວກ

*ການສັງເກດຂອງຄູຝຶກແມ່ນເປັນພາກສ່ວນທີ່ສຳຄັນຂອງການປະເມີນ ແລະ ການປັບປຸງກິດຈະກຳຕ່າງໆ. ຜູ້ອຳນວຍຄວາມສະດວກຄວນສັງເກດວ່າ ຜູ້ເຂົ້າຮ່ວມຕອບຄຳຖາມແນວໃດ; ພວກເຂົາມີສ່ວນຮ່ວມແນວໃດ ຢູ່ໃນກິດຈະກຳທີ່ເຮັດເປັນກຸ່ມ; ພວກເຂົາມີຄວາມສົນໃຈ ຫຼື ບໍ່; ພວກເຂົາຖາມຄຳຖາມທີ່ຊວນຄິດ ຫຼື ບໍ່. ອັນນີ້ເປັນວິທີອັນໜຶ່ງ ໃນການວັດແທກ ປະຕິກິລິຍາຕອບໂຕ້, ການຮຽນຮູ້ ແລະ ການປ່ຽນແປງພຶດຕິກຳ ຂອງຜູ້ເຂົ້າຮ່ວມ.*

1. ກະລຸນາອະທິບາຍກ່ຽວກັບຄວາມຮູ້ສຶກທົ່ວໄປຂອງທ່ານຕໍ່ການຝຶກອົບຮົມ.

.....................................................................................

.....................................................................................

.....................................................................................

.....................................................................................

.....................................................................................

.....................................................................................

2. ກະລຸນາອະທິບາຍບອກປະເດັນຄວາມຫຍຸ້ງຍາກຕ່າງໆທີ່ທ່ານໄດ້ພົບພໍ້.

.....................................................................................

.....................................................................................

.....................................................................................

.....................................................................................

.....................................................................................

.....................................................................................

3. ໄດ້ມີການຍົກບັນຫາສຳຄັນກ່ຽວກັບການປົກປ້ອງເດັກຂຶ້ນ ຫຼື ບໍ່?

.....................................................................................

.....................................................................................

.....................................................................................

.....................................................................................

.....................................................................................

.....................................................................................

4. ຈົ່ງໃຫ້ຄຳເຫັນກ່ຽວກັບລະດັບຄວາມເຂົ້າໃຈ ແລະ ການມີສ່ວນຮ່ວມຂອງນັກສຳມະນາກອນ.

..........................................................................

..........................................................................

..........................................................................

..........................................................................

..........................................................................

..........................................................................

5. ທ່ານຖອດຖອນໄດ້ບົດຮຽນຫຍັງແດ່ສຳລັບການຝຶກອົບຮົມໃນຕໍ່ໜ້າ?

..........................................................................

..........................................................................

..........................................................................

..........................................................................

..........................................................................

..........................................................................

6. ການຝຶກອົບຮົມ ແລະ ເອກະສານການຝຶກອົບຮົມຄວນຖືກປັບປຸງຄືແນວໃດ?

..........................................................................

..........................................................................

..........................................................................

..........................................................................

..........................................................................

..........................................................................

7. ຈຳເປັນຕ້ອງມີການຝຶກອົບຮົມຕື່ມອີກບໍ່? ສຳລັບໃຜ? ຍ້ອນຫຍັງ?

..........................................................................

..........................................................................

..........................................................................

..........................................................................

..........................................................................

..........................................................................

# ບັນທຶກ

ໂຄງການເດັກແມ່ນໂຄງການລິເລີ່ມຂອງ ລັດຖະບານອົສຕຣາລີ ເພື່ອປົກປ້ອງເດັກຈາກການລ່ວງລະເມີດທາງເພດໃນການທ່ອງທ່ຽວຢູ່ ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ (2011-2014). ອົງການສຸພະນິມິດ ໄດ້ພັດທະນາ ປຶ້ມຄູ່ມືສຳລັບເວທີສົນທະນານີ້ ເພື່ອ ໂຄງການເດັກ - ເສົາຫຼັກປ້ອງກັນ. ເອກະສານການສຶກສາອື່ນໆທີ່ພັດທະນາມາເພື່ອ ໂຄງການເດັກ - ເສົາຫຼັກປ້ອງກັນ ລວມມີ:



*ການປ້ອງກັນເດັກໃຫ້ປອດໄພຈາກການລ່ວງລະເມີດ:*
*ເຄື່ອງມືຂອງຜູ້ອຳນວຍຄວາມສະດວກ ສຳລັບໃຫ້ຄວາມຮູ້ແກ່ເດັກ ແລະ ໄວໜຸ່ມ*



*ການປ້ອງກັນເດັກໃຫ້ປອດໄພຈາກການລ່ວງລະເມີດທາງເພດ:*
*ປຶ້ມຄູ່ມືຂອງຜູ້ອຳນວຍຄວາມສະດວກສຳລັບເວທີການສົນທະນາກັບພໍ່ແມ່ ແລະ ຜູ້ເບິ່ງແຍງເດັກ*



*ການປ້ອງກັນເດັກໃຫ້ປອດໄພຈາກການລ່ວງລະເມີດໃນການທ່ອງທ່ຽວ:*
*ປຶ້ມຄູ່ມືຂອງຜູ້ອຳນວຍຄວາມສະດວກສຳລັບການຝຶກອົບຮົມຂະແໜງການທ່ອງທ່ຽວ*

ຍັງມີປຶ້ມຄູ່ມືສະບັບພາສາອັງກິດ, ຂະແມ, ໄທ ແລະ ຫວຽດນາມ ເພື່ອໃຫ້ແທດເໝາະກັບສະພາບຂອງແຕ່ລະປະເທດ.

ເດັກທີ່ເຮັດວຽກ ແລະ ອາໃສຢູ່ໃນສະພາບແວດລ້ອມຂອງການທ່ອງທ່ຽວ ແມ່ນມີຄວາມສ່ຽງສະເພາະ ຕໍ່ການຖືກລ່ວງລະເມີດທາງຮ່າງກາຍ, ຈິດໃຈ ແລະ ທາງເພດ. ຕົວແທນຊຸມຊົນ (ຜູ້ຮັບພັນທະພາຍໃນຊຸມຊົນຊຶ່ງເປັນ ຜູ້ທີ່ເປັນເຈົ້າໜ້າທີ່, ເປັນຜູ້ນຳ ແລະ ມີອຳນາດ) ມີບົດບາດສຳຄັນ ເພື່ອຮັກສາໃຫ້ເດັກປອດໄພ ຈາກການຖືກລ່ວງລະເມີດ ແລະ ປ້ອງກັນບໍ່ໃຫ້ການລ່ວງລະເມີດເກີດຂຶ້ນ ແລະ/ຫຼື ສືບຕໍ່ເກີດຂຶ້ນ. ມັນເປັນສິ່ງສຳຄັນທີ່ເຂົາເຈົ້າສາມາດເຂົ້າເຖິງຂໍ້ມູນພື້ນຖານທີ່ຖືກຕ້ອງ ກ່ຽວກັບການລ່ວງລະເມີດທາງເພດເດັກ.

ປື້ມຄູ່ມືທີ່ມີຊື່ວ່າ *ການປ້ອງກັນເດັກຂອງພວກເຮົາໃຫ້ປອດໄພຈາກການລ່ວງລະເມີດທາງເພດ: ປື້ມຄູ່ມືສຳລັບຜູ້ອຳນວຍຄວາມສະດວກໃນການດຳເນີນເວທີສົນທະນາ ກັບຜູ້ຕາງໜ້າຊຸມຊົນ,* ໄດ້ສະໜອງຄຳແນະນຳ ແລະ ເຄື່ອງມືທີ່ງ່າຍດາຍໃຫ້ແກ່ຜູ້ອຳນວຍຄວາມສະດວກໃນການດຳເນີນເວທີສົນທະນາ ກັບຜູ້ຕາງໜ້າຊຸມຊົນ. ປື້ມຄູ່ມືນີ້ໄດ້ອອກແບບເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມຮູ້ ແລະ ທັກສະໃນການຮັກສາໃຫ້ເດັກປອດໄພຈາກການຖືກລ່ວງລະເມີດທາງເພດໃນຊຸມຊົນຂອງພວກເຂົາ. ປື້ມນີ້ຈະມີທຸກຢ່າງທີ່ຜູ້ອຳນວຍຄວາມສະດວກຕ້ອງການ ເພື່ອດຳເນີນການຮຽນການສອນທີ່ມີປະສິດທິຜົນ, ທັງຮູບແບບທີ່ເປັນທາງການ ແລະ ບໍ່ເປັນທາງການ, ດ້ວຍການນຳໃຊ້ອຸປະກອນ ທີ່ມີຈຳກັດ ຫຼື ທັນສະໄໝ.

ຍັງມີປື້ມຄູ່ມືສະບັບພາສາອັງກິດ, ຂະແມ, ໄທ ແລະ ຫວຽດນາມ ເພື່ອໃຫ້ແທດເໝາະກັບສະພາບຂອງແຕ່ລະປະເທດ.

**Child Safe Tourism**

Take action against abuse

ໂຄງການເດັກແມ່ນໂຄງການລິເລີ່ມຂອງ ລັດຖະບານອົສຕຣາລີ ເພື່ອປົກປ້ອງເດັກຈາກການລ່ວງລະເມີດທາງເພດໃນການທ່ອງທ່ຽວຢູ່ ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ (2011-2014). ໂຄງການເດັກ ເປັນການຮ່ວມມືກັນລະຫວ່າງ ອົງການສຸພະນິມິດ ແລະ ຫ້ອງການ ສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາດຊະຍາກຳ. ແຜນງານຍຶດຖືວິທີການຄູ່ ແບບປົກປ້ອງ ແລະ ປ້ອງກັນຄວບຄູ່ກັນໄປ.

Australian Aid

World Vision®